ປື້ມຄູ່ມືລະບຽບການປົກປ້ອງຄຸ້ມຄອງ
ສຳລັບພໍ່ແມ່ຜູ້ປົກຄອງ

(ສິດທິຂອງພໍ່ແມ່ຜູ້ປົກຄອງໃນການສຶກສາພິເສດ)

ຂະແໜງການຮຽນຮູ້ ແລະ ຜົນໄດ້ຮັບ
ສິງຫາ 2013

ລັດໄອໂອວາ (Iowa)
ພະແນກສຶກສາ
ອາຄານຫ້ອງການ Grimes State
ເມືອງ Des Moines, ລັດໄອໂອວາ 50319-0146
ສະພາບໍລິຫານການສຶກສາປະຈຳລັດ

ລັດໄອໂອວາ
ພະແນກສຶກສາລັດໄອໂອວາ
ອາຄານຫ້ອງການ Grimes State
ເລກທີ 400 ຖະໜົນ E 14th St
ເມືອງ Des Moines ລັດໄອໂອວາ 50319-0146

ສະພາບໍລິຫານການສຶກສາປະຈຳລັດ

ທ່ານ Rosie Hussey, ປະທານ, ຈາກເຂດເມືອງ Clear Lake
ທ່ານ Charles C. Edwards, Jr., ຮອງປະທານ, ຈາກເຂດເມືອງ Des Moines
ທ່ານ Diane Crookham-Johnson, ຈາກເຂດເມືອງ Oskaloosa
ທ່ານນາງ Sister Jude Fitzpatrick, ຈາກເຂດ West Des Moines
ທ່ານ Michael L. Knedler, ຈາກເຂດເມືອງ Council Bluffs
ທ່ານ Valorie J. Kruse, ຈາກເຂດເມືອງ Sioux City
ທ່ານ Mike May, ຈາກເຂດເມືອງ Spirit Lake
ທ່ານ Max Phillips, ຈາກເຂດເມືອງ Woodward
ທ່ານ LaMetta Wynn, ຈາກເຂດເມືອງ Clinton
ທ່ານ McKenzie Baker, ສະມາຊິກນັກຮຽນ, ຈາກ Forest City

ຄະນະຜູ້ບໍລິຫານ

ທ່ານ Jason E. Glass, ອຳນວຍການ ແລະ ຫົວໜ້າຜູ້ບໍລິຫານ
ຂອງສະພາບໍລິຫານການສຶກສາປະຈຳລັດ
ທ່ານ Gail M. Sullivan, ຫົວໜ້າພະນັກງານ

ຂະແໜງການຮຽນຮູ້ ແລະ ຜົນໄດ້ຮັບ

ທ່ານ David Tilly, ຜູ້ບໍລິຫານ
ທ່ານ Mary Delagardelle, ຜູ້ຊ່ວຍຜູ້ບໍລິຫານຂະແໜງ
ທ່ານ Thomas A. Mayes, ທະນາຍຄວາມປະຈຳຂະແໜງ

ທ່ານ Sarah Brown, ຫົວໜ້າສຳນັກງານຍຸດທະສາດ ແລະການສະໜັບສະໜູນຜູ້ຮຽນ
ທ່ານ Barb Guy, ຫົວໜ້າການສຶກສາພິເສດ
ທ່ານ Deb Samson, ທີ່ປຶກສາຂອງສຳນັກງານຍຸດທະສາດແລະການສະໜັບສະໜູນຜູ້ຮຽນ

ທ່ານ Amy Williamson, ຫົວໜ້າສຳນັກງານຝ່າຍການປັບປຸງໂຮງຮຽນ
ທ່ານ Sharon Hawthorne, ທີ່ປຶກສາຂອງສຳນັກງານຝ່າຍການປັບປຸງໂຮງຮຽນ

ນັນແມ່ນນະ�โยบายຂອງພະແນກສຶກສາລັດໄອໂອວາທີ່ກຳນົດບໍ່ໃຫ້ມີການເລືອກປະຕິບັດດ້ານເຊື້ອຊາດ, ຄວາມເຊື່ອ, ສີຜິວ, ເພດ, ລົດສະນິຍົມທາງເພດ, ລັກສະນະທາງເພດ, ຊາດກຳເນີດ, ເພດ, ຄວາມພິການ, ສາດສະໜາ, ອາຍຸ, ຄວາມສຳພັນທາງການເມືອງ, ຫຼື ສະຖານະຄວາມເປັນພໍ່ແມ່ຕົວຈິງ ຫຼື ອາດເປັນໄປໄດ້, ສະຖານະທາງຄອບຄົວ ຫຼື ການແຕ່ງງານ ໃນບັນດາໂຄງການ, ກິດຈະກຳ, ຫຼື ຫຼັກປະຕິບັດດ້ານການວ່າຈ້າງງານຂອງພະແນກສຶກສາ ຕາມການກຳນົດຂອງ*ປະມວນກົດໝາຍລັດໄອໂອວາ* ໝວດທີ 216.9 ແລະ 256.10(2), ຫົວບົດ VI ແລະ VII ຂອງກົດໝາຍວ່າດ້ວຍສິດທິພົນລະເຮືອນ ປີ 1964 (42 U.S.C. § 2000d ແລະ 2000e), ກົດໝາຍວ່າດ້ວຍການຄ່າຈ້າງເທົ່າທຽມກັນ ປີ 1973 (29 U.S.C. § 206, ແລະອື່ນໆ), ຫົວບົດ IX (ການປັບປຸງການສຶກສາ, 20 U.S.C. §§ 1681 – 1688) ໝວດທີ 504 (ກົດໝາຍວ່າດ້ວຍການຟື້ນຟູ ປີ 1973, 29 U.S.C. § 794), ແລະ ກົດໝາຍວ່າດ້ວຍຄວາມພິການຂອງຊາວອາເມຣິກາ (42 U.S.C. § 12101, ແລະອື່ນໆ).

ຖ້າທ່ານມີຄຳຖາມ ຫຼື ຂໍ້ຂ້ອງໃຈກ່ຽວກັບປະຕິບັດຕາມນະ�โยบายນີ້ຂອງພະແນກສຶກສາລັດໄອໂອວາ, ກະລະນຸ ຕິດຕໍ່ຫາທີ່ປຶກສາດ້ານກົດໝາຍປະຈຳພະແນກສຶກສາລັດໄອໂອວາ, ທີ່ອາຄານຫ້ອງການ Grimes State, 400 E 14th St, ເມືອງ Des Moines IA 50319-0146, ເບີໂທລະສັບ 515/281-5295, ຫຼື ຕິດຕໍ່ຫາຫົວໜ້າຫ້ອງການສິດທິພົນລະເມືອງ, ກະຊວງສຶກສາສະຫະລັດ, Citigroup Center, 500 W. Madison, Suite 1475, Chicago, IL 60661, ໂທລະສັບ 312/730-1560, ແຟັກ 312/730-1576, ອີເມວ: OCR.Chicago@ed.gov.

ສາລະບານ

ລະບຽບຂັ້ນຕອນການປົກປ້ອງຄຸ້ມຄອງ 1
ພາກສະເໜີ 1
ຂ້ອຍສາມາດຊອກການຊ່ວຍເຫຼືອເພີ່ມເຕີມຈາກໃສ? 1
ໜ່ວຍງານທີ່ສາມາດຊ່ວຍເຫຼືອ 1
ຫົວໜ້າເຂດການສຶກສາ ຫຼືຫົວໜ້າໂຮງຮຽນ (LEA) 1
ອົງການສຶກສາປະຈຳເຂດ (AEA) 1
ພະແນກສຶກສາ (DE) ລັດໄອໂອວາ 2
ສູນຝຶກອົບຮົມ ແລະຂໍ້ມູນຂ່າວສານສຳລັບພໍ່ແມ່ນັກຮຽນລັດໄອໂອວາ (PTI) 2
ຫ້ອງການສິດທິຄົນພິການໄອໂອວາ (DRI) 2
ສູນສົ່ງເສີມການດຳເນີນຊີວິດແບບເພິ່ງຕົນເອງ (CIL) 2
ຂໍ້ມູນທົ່ວໄປກ່ຽວກັບລະບຽບການປົກປ້ອງຄຸ້ມຄອງ 3
ຂ້ອຍຈະໄດ້ສຳເນົາເອກະສານກ່ຽວກັບລະບຽບການປົກປ້ອງຄຸ້ມຄອງເມື່ອໃດ? 3
ແຈ້ງການໃດ ແດ່ທີ່ພະແນກສຶກສາລັດໄອໂອວາ ຕ້ອງໄດ້ເອົາໃຫ້ຂ້ອຍກ່ຽວກັບລະບຽບການປົກປ້ອງຄຸ້ມຄອງ? 3
ແຫຼ່ງຂໍ້ມູນອື່ນ 4
ການເຂົ້າເຖິງບັນທຶກການສຶກສາ 5
ການກວດເບິ່ງບັນທຶກການສຶກສາ 5
ບັນທຶກຂອງລູກທ່ານ 5
ຄ່າໃຊ້ຈ່າຍສຳລັບການອັດສຳເນົາບັນທຶກຕ່າງໆ 5
ສິດທິໃນການກວດກາ ແລະ ກວດເບິ່ງບັນທຶກ 5
ນິຍາມຄວາມໝາຍ: ຂໍ້ມູນທີ່ສາມາດລະບຸຕົວຕົນສ່ວນບຸກຄົນ 5
ບັນທຶກທີ່ໄດ້ຮັບການປົກປ້ອງ 6
ບັນທຶກທີ່ເຊື່ອວ່າບໍ່ຖືກຕ້ອງ 6
ການໄຕ່ສວນ FERPA 6
ການອະນຸຍາດເປີດເຜີຍບັນທຶກຕ່າງໆ 6
ການປົກປ້ອງຄວາມລັບ ແລະຄວາມເປັນສ່ວນຕົວ 7
ບັນທຶກທີ່ບໍ່ຕ້ອງການອີກຕໍ່ໄປ 7
ການຍິນຍອມເຫັນດີຂອງພໍ່ແມ່ຜູ້ປົກຄອງ 7
ການຍິນຍອມເຫັນດີ 7
ການຍິນຍອມເຫັນດີສຳລັບການປະເມີນຜົນເບື້ອງຕົ້ນ 7
ການປະຕິເສດບໍ່ໃຫ້ການຍິນຍອມເຫັນດີສຳລັບການປະເມີນຜົນເບື້ອງຕົ້ນ 8
ການປະເມີນຜົນເບື້ອງຕົ້ນເມື່ອເດັກຢູ່ໃນການດູແລອຸປະຖຳຂອງລັດ 8
ການຍິນຍອມເຫັນດີເພື່ອເລີ່ມການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງຕ່າງໆ 8
ການປະຕິເສດບໍ່ໃຫ້ການຍິນຍອມເຫັນດີຕໍ່ກັບການບໍລິການ 8
ການຖອນຄືນການຍິນຍອມເຫັນດີສຳລັບການບໍລິການ 8
ຫຼັງຈາກທີ່ທ່ານຖອນຄືນການຍິນຍອມເຫັນດີ 9
ການຍິນຍອມເຫັນດີສຳລັບການປະເມີນຜົນຄືນໃໝ່ 9
ການພະຍາຍາມຂໍເອົາການຍິນຍອມເຫັນດີ 9
ຕົວຢ່າງສະເພາະອື່ນສຳລັບການຍິນຍອມເຫັນດີ 9

ຂໍ້ມູນອື່ນກ່ຽວກັບການຍິນຍອມເຫັນດີ 10
ການເຂົ້າຮ່ວມກອງປະຊຸມ 10
ບັນດາກອງປະຊຸມທີ່ລວມເອົາພໍ່ແມ່ນັກຮຽນ 10
ແຈ້ງການກອງປະຊຸມ 10
ກອງປະຊຸມຫຍັງ? 10
ການຕັດສິນເລື່ອງການບັນຈຸເຂົ້າຮຽນ 11
ບໍ່ສາມາດເຂົ້າຮ່ວມໄດ້ 11
ການຕັດສິນທີ່ບໍ່ມີການມີສ່ວນຮ່ວມຂອງພໍ່ແມ່ນັກຮຽນ 11
ການປະເມີນຜົນການສຶກສາແບບອິດສະຫຼະ 11
ການປະເມີນຜົນການສຶກສາແບບອິດສະຫຼະ (IEE)ແມ່ນຫຍັງ 11
ການຮ້ອງຂໍການປະເມີນຜົນ IEE 11
ການຕອບຄືນຂອງທາງໂຮງຮຽນຕໍ່ກັບການຮ້ອງຂໍເຮັດການປະເມີນຜົນ IEE 11
ການປະເມີນຜົນ IEE ທີ່ພໍ່ແມ່ຮ້ອງຂໍໃຫ້ເຮັດ 12
ການຈ່າຍຄ່າການປະເມີນຜົນ IEE 12
ສິ່ງອື່ນທີ່ຄວນຮູ້ 12
ແຈ້ງການລ່ວງໜ້າ 12
ຈຸດປະສົງ 12
ຄຳນິຍາມ 12
ຂໍ້ມູນໃນແຈ້ງການ 13
ແຈ້ງການເປັນແບບໃດ 13
ທາງເລືອກໃນການແກ້ໄຂຂໍ້ຂັດແຍ້ງ 14
ພາກສະເໜີ 14
ການຮ້ອງຮຽນຂັ້ນລັດ 14
ການຮ້ອງຮຽນຕາມຫຼັກ Due Process 14
ການໄຕ່ສວນຕາມຫຼັກ Due Process 14
ລະບຽບຂັ້ນຕອນການຮ້ອງຮຽນຂັ້ນລັດ 15
ກຳນົດເວລາຂອງການຮ້ອງຮຽນຂັ້ນລັດ 15
ການຂະຫຍາຍກຳນົດເວລາສຳລັບການຮ້ອງຮຽນຂັ້ນລັດ 15
ການຍື່ນການຮ້ອງຮຽນຂັ້ນລັດ 16
ການຮ້ອງຮຽນຕາມຫຼັກ Due Process (ຍັງເອີ້ນວ່າຄຳຮ້ອງຂໍການໄຕ່ສວນຕາມຫຼັກ Due Process) 16
ຍື່ນການຮ້ອງຮຽນຕາມຫຼັກ Due Process ເມື່ອໃດ 16
ກຳນົດເວລາການຍື່ນ 16
ຂໍ້ຍົກເວັ້ນຕໍ່ກັບກຳນົດເວລາ 16
ການໄດ້ຮັບການຊ່ວຍເຫຼືອດ້ານກົດໝາຍ 17
ຂໍ້ກຳນົດຂອງການຮ້ອງຂໍເອົາການໄຕ່ສວນຕາມຫຼັກ Due Process 17
ການຕັດສິນກຳນົດວ່າຄຳຮ້ອງຂໍການໄຕ່ສວນຕອບສະໜອງໄດ້ທຸກຂໍ້ກຳນົດຫຼືບໍ່ 17
ການສົ່ງຄຳຮ້ອງຂໍການໄຕ່ສວນຕາມຫຼັກ Due Process 17
ການປ່ຽນແປງຄຳຮ້ອງຂໍການໄຕ່ສວນຕາມຫຼັກ Due Process 17
ການຕອບຄຳຮ້ອງຂໍການໄຕ່ສວນຂອງເຂດການສຶກສາ/ອົງການ AEA 18

ການຮ້ອງຟ້ອງທາງແພ່ງ 18
ການຮ້ອງຟ້ອງທາງແພ່ງ 18
ກອງປະຊຸມແກ້ໄຂຂໍ້ຂັດແຍ້ງ 18
ກອງປະຊຸມແກ້ໄຂຂໍ້ຂັດແຍ້ງ 18
ຈຸດປະສົງ 19
ການຈັດກອງປະຊຸມແກ້ໄຂຂໍ້ຂັດແຍ້ງ 19
ຜູ້ເຂົ້າຮ່ວມໃນກອງປະຊຸມແກ້ໄຂຂໍ້ຂັດແຍ້ງ 19
ໄລຍະແກ້ໄຂຂໍ້ຂັດແຍ້ງ 19
ຄວາມສຳຄັນຂອງກອງປະຊຸມແກ້ໄຂຂໍ້ຂັດແຍ້ງ 19
ຂໍ້ຕົກລົງແກ້ໄຂຈາກກອງປະຊຸມແກ້ໄຂຂໍ້ຂັດແຍ້ງ 19
ໄລຍະທົບທວນຂອງກອງປະຊຸມແກ້ໄຂຂໍ້ຂັດແຍ້ງ 20
ການໄກ່ເກ່ຍ 20
ການໄກ່ເກ່ຍທີ່ມີໃຫ້ 20
ລະບຽບຂັ້ນຕອນການໄກ່ເກ່ຍ 20
ຜູ້ໄກ່ເກ່ຍ 20
ຄວາມຍຸຕິທຳຂອງຜູ້ໄກ່ເກ່ຍ 20
ຂະບວນການໄກ່ເກ່ຍ 20
ບໍ່ແນ່ໃຈກ່ຽວກັບການໃຊ້ການໄກ່ເກ່ຍ 21
ສະຖານະຂອງເດັກໃນລະຫວ່າງການໄກ່ເກ່ຍ 21
ການໄຕ່ສວນຍຸຕິທຳຕາມຫຼັກ Due Process 21
ການໄຕ່ສວນຍຸຕິທຳຕາມຫຼັກ Due Process 21
ຜູ້ພິພາກສາກົດໝາຍປົກຄອງ Judge (ALJ) 21
ການບັນຈຸເຂົ້າຮຽນຂອງເດັກ 22
ປະເດັນບັນຫາທີ່ປົກສາຫາລືໃນການໄຕ່ສວນ 22
ກຳນົດເວລາສຳລັບການຮ້ອງຂໍການໄຕ່ສວນຕາມຫຼັກ Due Process 22
ສິດທິໃນລະຫວ່າງການໄຕ່ສວນ 23
ການເປີດເຜີຍຂໍ້ມູນເພີ່ມເຕີມ 23
ສິດທິຂອງພໍ່ແມ່ 23
ເຫດຜົນສຳລັບຄຳຕັບສິນຂອງຜູ້ພິພາກສາ ALJ 23
ການຮ້ອງຂໍການໄຕ່ສວນເພີ່ມເຕີມ 23
ຄຳຕັດສິນສຸດທ້າຍຂອງຜູ້ພິພາກສາ ALJ 23
ຜູ້ອື່ນທີ່ໄດ້ຮັບແຈ້ງກ່ຽວກັບຄຳຕັດສິນ 24
ກຳນົດເວລາສຳລັບຄຳຕັດສິນຈາກການໄຕ່ສວນ 24
ກົດການຕີຄວາມໝາຍ 24
ຄຳນິຍາມ ແລະ ຈຸດປະສົງ 24
ຄ່າທຳນຽມທະນາຍຄວາມ 24
ການມອບຄ່າທຳນຽມທະນາຍຄວາມ 24
ການກຳນົດຄ່າທຳນຽມທີ່ສົມເຫດສົມຜົນ 24
ຄ່າທຳນຽມທີ່ຕ້ອງຈ່າຍໂດຍທະນາຍ ຄວາມຂອງທ່ານ 24
ຄ່າທຳນຽມທີ່ຕ້ອງຈ່າຍໂດຍທ່ານ ຫຼືທະນາຍຄວາມຂອງທ່ານ 25

ຄ່າທຳນຽມທີ່ຫ້າມ ແລະຄ່າใช้ຈ່າຍທີ່ກ່ຽວຂ້ອງ....25
ຂໍ້ຍົກເວັ້ນຕໍ່ກັບຂີດຈຳກັດດ້ານການແກ້ໄຂ....25
ການຫຼຸດຄ່າທຳນຽມທະນາຍຄວາມ....25
ຂໍ້ຍົກເວັ້ນຕໍ່ກັບການຫຼຸດຄ່າທຳນຽມ....25
ການປະພຶດ ແລະ ລະບຽບຂັ້ນຕອນການປະຕິບັດວິໄນ....26
ສິດອຳນາດຂອງພະນັກງານໂຮງຮຽນ....26
ການຕັດສິນກຳນົດຕາມແຕ່ລະກໍລະນີ....26
ທົ່ວໄປ....26
ສິດອຳນາດເພີ່ມເຕີມ....26
ການບໍລິການ....26
ຫຼາຍກວ່າ 10 ວັນ....26
ນ້ອຍກວ່າ 10 ວັນ....26
ການກຳນົດປະກົດການສະແດງອອກ....27
ຄຳນິຍາມ....27
ປະກົດການສະແດງອອກອັນເປັນຜົນຈາກຄວາມພິການ....27
ຜົນຈາກຄວາມລົ້ມເຫຼວໃນການຈັດຕັ້ງປະຕິບັດIEP....27
ການດຳເນີນການເມື່ອແມ່ນຜົນຂອງການສະແດງອອກຂອງຄວາມພິການ....27
ສະພາບການພິເສດ....27
ຄຳນິຍາມຂອງສະພາບການພິເສດ....28
ການແຈ້ງບອກ....28
ການອຸທອນ....28
ທົ່ວໄປ....28
ສິດອຳນາດຂອງ ALJ....28
ຂັ້ນຕອນການໄຕ່ສວນຕາມຫຼັກ Due Process ແບບເລັ່ງລັດ....28
ການບັນຈຸເຂົ້າຮຽນໃນລະຫว่ານການອຸທອນ....29
ທົ່ວໄປ....29
ການປ່ຽນແປງການບັນຈຸເຂົ້າຮຽນເນື່ອງຈາກການຍົກຍ້າຍທີ່ກ່ຽວຂ້ອງກັບການປະຕິບັດວິໄນ....29
ທົ່ວໄປ....29
ການກຳນົດການບັນຈຸເຂົ້າຮຽນ....29
ສິດອຳນາດ....29
ການປົກປ້ອງສຳລັບເດັກທີ່ຍັງບໍ່ທັນມີສິດໄດ້ຮັບການສຶກສາພິເສດ....30
ຂໍ້ມູນທົ່ວໄປ....30
ຄຳນິຍາມຂອງການຮັບຮູ້ກ່ອນ....30
ຂໍ້ຍົກເວັ້ນຕໍ່ກັບການຮັບຮູ້ກ່ອນ....30
ການບໍ່ຮູ້ມາກ່ອນ....30
ການນຳສົ່ງຫາ ແລະ ການດຳເນີນການໂດຍໜ່ວຍງານບັງຄັບໃຊ້ກົດໝາຍ ແລະຕຸລາການ....30
ການນຳສົ່ງເດັກຫາໜ່ວຍງານບັງຄັບໃຊ້ກົດໝາຍ....30
ຄວາມຮັບຜິດຊອບຂອງເຂດການສຶກສາ....31
ບົດບັນຍັດສຳລັບພໍ່ແມ່ຕົວແທນ....31
ການແຕ່ງຕັ້ງພໍ່ແມ່ຕົວແທນ....31

ຄວາມຮັບຜິດຊອບຂອງອົງການ AEA 32
ເກນມາດຖານຂອງພໍ່ແມ່ຕົວແທນ 32
ໄວໜຸ່ມຂາດທີ່ຢູ່ອາໄສທີ່ບໍ່ມີໃຜມານຳ 32
ຄວາມຮັບຜິດຊອບຂອງພໍ່ແມ່ຕົວແທນ 32
ການແຕ່ງຕັ້ງພໍ່ແມ່ຕົວແທນ 32
ການໂອນສິດທີ່ໃຫ້ແກ່ເດັກ 32
ການໂອນສິດທີ່ກ່ຽວກັບບັນທຶກດ້ານການສຶກສາ 32
ການໂອນສິດທີ: IDEA 32
ການແຈ້ງບອກການໂອນສິດ 33
ການບັນຈຸເດັກເຂົ້າຮຽນໃນໂຮງຮຽນເອກະຊົນໂດຍພໍ່ແມ່ພຽງຝ່າຍດຽວ ເມື່ອການສຶກສາພາກລັດທີ່ ເໝາະສົມແລະບໍ່ເສຍຄ່າ (FAPE) ແມ່ນປະເດັນບັນຫາ 33
ຄ່າໃຊ້ຈ່າຍຂອງໂຮງຮຽນ ຫຼືສະຖານສຶກສາເອກະຊົນ 33
ການຈ່າຍແທນຄືນສຳລັບການເຂົ້າຮຽນໃນໂຮງຮຽນເອກະຊົນ 33
ການຫຼຸດ ຫຼືການປະ ຕິເສດການຈ່າຍແທນຄືນ 33
ຂໍ້ຍົກເວັ້ນຕໍ່ກັບການຫຼຸດ ຫຼືການປະຕິເສດ 34
ພາກຕິດຄັດ A: ຄຳນິຍາມ 35
ພາກຕິດຄັດ B: ຄຳນິຍາມ- ສະພາບການພິເສດກ່ຽວກັບການປະຕິບັດວິໄນ 37
ພາກຕິດຄັດ C: ຊື່ຫຍໍ້ 38
ພາກຕິດຄັດ D: ແບບຟອມຕົວຢ່າງ 39
ພາກຕິດຄັດ E: ການແຈ້ງບອກເປັນລາຍລັກອັກສອນຕາມພາກ B ຂອງກົດໝາຍ IDEA ກ່ຽວກັບການໃຊ້ເງິນຊ່ວຍເຫຼືອພາກລັດ ຫຼືເງິນປະກັນໄພ 46

ລະບຽບຂັ້ນຕອນການປົກປ້ອງຄຸ້ມຄອງ

ພາກສະເໜີ

ພໍ່ແມ່ຜູ້ປົກຄອງມີສິດທິ, ທີ່ຮູ້ກັນໃນນາມລະບຽບການປົກປ້ອງຄຸ້ມຄອງ, ເຊິ່ງນຳໃຊ້ກັບທຸກໆດ້ານຂອງຂະບວນການສຶກສາແບບພິເສດ.

ບັນດາກົດໝາຍ ແລະ ກົດລະບຽບຂອງລັດ ແລະລັດຖະບານກາງໄດ້ກຳນົດສິ່ງທີ່ຈະຕ້ອງໄດ້ເກີດຂຶ້ນເພື່ອຮັບປະກັນວ່າເດັກນ້ອຍທີ່ຖືກຕັດສິນກຳນົດວ່າພິການ ແລະ ຢູ່ໃນໂປຣແກຣມການສຶກສາສະເພາະບຸກຄົນ (IEP) ຕ້ອງໄດ້ຮັບການສຶກສາສາທາລະນະທີ່ເໝາະສົມໂດຍບໍ່ເສຍຄ່າ (FAPE).

ເອກະສານນີ້ໃຊ້ເປັນໃບແຈ້ງບອກການປົກປ້ອງຕາມລະບຽບການ***ຂອງທ່ານ*** ແລະ ຈະຊ່ວຍທ່ານເຂົ້າໃຈບັນດາສິດທິທີ່ມີໃຫ້ແກ່ທ່ານ ແລະລູກຂອງທ່ານຜ່ານກົດໝາຍຂອງລັດຖະບານກາງ, ເຊັ່ນວ່າກົດໝາຍວ່າດ້ວຍການປັບປຸງການສຶກສາສຳລັບຜູ້ພິການ (IDEA 2004) ແລະຂໍ້ລະບຽບດ້ານການບໍລິຫານການສຶກສາພິເສດລັດໄອໂອວາ. ບາງຂົງເຂດເນື້ອໃນທີ່ໄດ້ທົບທວນປັບປຸງໃນເອກະສານນີ້ປະກອບມີ:

- ແຈ້ງການ
- ການຍິນຍອມເຫັນດີຢ່າງມີຂໍ້ມູນຄົບຖ້ວນ
- ການຮັກສາບັນທຶກ
- ການປະເມີນຜົນ,
- ການໄກ່ເກ່ຍ
- ຫຼັກ Due Process
- ຄ່າທຳນຽມທະນາຍຄວາມ
- ອາຍຸບັນລຸນິຕິພາວະ ແລະ
- ການປະຕິບັດວິໄນ

ຂ້ອຍສາມາດຂອການຊ່ວຍເຫຼືອເພີ່ມເຕີມຈາກໃສ?

ໜ່ວຍງານທີ່ສາມາດຊ່ວຍເຫຼືອ

ຖ້າທ່ານຕ້ອງການຄຳອະທິບາຍທາງປາກເປົ່າເພີ່ມເຕີມກ່ຽວກັບສິດທິຂອງທ່ານ, ຈົ່ງຕິດຕໍ່ຫາພາກສ່ວນຕໍ່ໄປນີ້ ເພື່ອຂໍຄວາມຊ່ວຍເຫຼືອເພີ່ມເຕີມ:

- ຫົວໜ້າເຂດການສຶກສາ ຫຼືຫົວໜ້າໂຮງຮຽນປະຈຳທ້ອງຖິ່ນຂອງທ່ານ
- ອົງການສຶກສາປະຈຳເຂດ (AEA) ຂອງທ່ານ
- ພະແນກການສຶກສາ (DE) ລັດໄອໂອວາ
- ສູນຝຶກອົບຮົມ ແລະຂໍ້ມູນຂ່າວສານສຳລັບພໍ່ແມ່ນັກຮຽນລັດໄອໂອວາ, ສູນ ASK Resource center
- ຫ້ອງການສິດທິຄົນພິການລັດໄອໂອວາ
- ສູນສົ່ງເສີມການດຳເນີນຊີວິດແບບເພິ່ງຕົນເອງ

ຫົວໜ້າເຂດການສຶກສາ ຫຼືຫົວໜ້າໂຮງຮຽນ (LEA)

ທັງທ່ານ ແລະເຂດການສຶກສາລ້ວນແຕ່ມີສ່ວນໃນການສຶກສາຂອງລູກທ່ານ. ຖ້າທ່ານ ຫຼືພະນັກງານໂຮງຮຽນມີຄວາມກັງວົນໃຈກ່ຽວກັບການສຶກສາຂອງລູກທ່ານ, ຈົ່ງໃຊ້ທຸກໂອກາດເພື່ອເປີດການສົນທະນາໂອ້ລົມໂດຍໄວ ແລະຢ່າງເປີດກວ້າງກ່ຽວກັບບັນຫາກັງວົນໃຈຂອງທ່ານ. ຖ້າລູກຂອງທ່ານກຳລັງໄດ້ຮັບການບໍລິການດ້ານການສຶກສາພິເສດ, ຈົ່ງມີສ່ວນຮ່ວມຢ່າງຈິງຈັງໃນການພັດທະນາໂປຣແກຣມການສຶກສາ IEP ຂອງລູກທ່ານ.

ອົງການສຶກສາປະຈຳເຂດ (AEA)

ຖາມຫາ:

- ຫົວໜ້າການສຶກສາພິເສດ
- ຜູ້ປະສານງານການແກ້ໄຂຂໍ້ຂັດແຍ້ງຂອງ AEA, ຍັງເອີ້ນວ່າ ຜູ້ອຳນວຍຄວາມສະດວກການແກ້ໄຂຂໍ້ຂັດແຍ້ງ
- ໂຄງການເຊື່ອມໂຍງພໍ່ແມ່ນັກຮຽນ ແລະຄູອາຈານຂອງ AEA

ເບີໂທລະສັບສຳລັບແຕ່ລະ AEA:

AEA 1	Elk der	8 0-632-5918
AEA 267	Cedar Falls	800-542-8375
AEA 8	Pocahontas	800-669-2325
AEA 9	Bettendorf	800-947-2329
AEA 10	Cedar Rapids	800-332-8488
AEA 11	Johnston	800-362-2720
GHAEA	Council Bluffs	800-432-5804
GPAEA	Ottumwa	800-622-0027
NWAEA	Sioux City	800-352-9040

ພະແນກສຶກສາ (DE) ລັດໄອໂອວາ

ຂະແໜງການຮຽນຮູ້ ແລະຜົນໄດ້ຮັບ
ສຳນັກງານຝ່າຍຍຸດທະສາດ ແລະການສະໜັບສະໜູນຜູ້ຮຽນ
Grimes State Office Building
Des Moines, Iowa 50319-0146
515-281-3176
515-242-5988 FAX
http://www.educateiowa.gov/

ສູນຝຶກອົບຮົມ ແລະ ຂໍ້ມູນຂ່າວສານ ສຳລັບພໍ່ແມ່ນັກຮຽນ ລັດໄອໂອວາ (PTI)

ສູນ ASK Resource Center
5665 Greendale Road, Suite D
Johnston, IA 50131
1-800-450-8667
515-243-1713
ແຟັກ 515-243-1902
info@askresource.org
http://www.askresource.org

ຫ້ອງການສິດທິຄົນພິການໄອໂອວາ (DRI)

400 East Court Avenue Suite 300
Des Moines, Iowa 50309
515-278-2502
515-278-0571 (TDD)
800-779-2502
515- 278-0539 ແຟັກ
info@disabilityrightsiowa.org
http://www.disabilityrightsiowa.org

ສູນສົ່ງເສີມການດຳເນີນຊີວິດແບບເພິ່ງຕົນເອງ (CIL)

Central Iowa CIL
4132 E. 10th Street
Des Moines, IA 50309
ໂທລະສັບ: 515-563-9337
ແຟັກ: 515-563-9337

Evert Conner Rights and Resources CIL
26 E Market Street
Iowa City, IA 52240
ໂທລະສັບ: 319-933-3870

Illinois Iowa CIL (IICIL)
3708 11th St., PO Box 6156,
Rock Island, IL 61231
309-793-0090(V/TTY)
1-877-541-2505(V/TTY)
ແຟັກ: 309-283-0097
iicil@iicil.com

ຂໍ້ມູນທົ່ວໄປກ່ຽວກັບລະບຽບການປົກປ້ອງຄຸ້ມຄອງ

ຂ້ອຍຈະໄດ້ສໍາເນົາ ເອກະສານກ່ຽວກັບ ລະບຽບການປົກ ປ້ອງຄຸ້ມຄອງເມື່ອ ໃດ?

ທ່ານຈະໄດ້ຮັບສໍາເນົາເອກະສານລະບຽບການປົກປ້ອງຄຸ້ມຄອງສໍາລັບລູກຂອງທ່ານທີ່ພິການ ໜຶ່ງຄັ້ງຕໍ່ປີ.

ນອກນັ້ນ, ສໍາເນົາຊຸດໜຶ່ງຍັງຈະຕ້ອງໄດ້ເອົາໃຫ້ທ່ານ:

- ຫຼັງຈາກການນໍາສົ່ງເບື້ອງຕົ້ນ ຫຼືການຮ້ອງຂໍເຮັດການປະເມີນຜົນສໍາລັບລູກຂອງທ່ານ;
- ພາຍຫຼັງທີ່ທ່ານຍື່ນຄໍາຮ້ອງຮຽນຕາມຫຼັກ due process ຄັ້ງທໍາອິດ ຫຼື ຄໍາຮ້ອງຮຽນແບບລັດຄັ້ງທໍາອິດ ໃນປີຮຽນນັ້ນ;
- ໃນທຸກໆຄັ້ງທີ່ມີການຕັດສິນດໍາເນີນການປະຕິບັດວິໄນ ທີ່ກໍ່ໃຫ້ເກີດການປ່ຽນແປງການບັນຈຸເຂົ້າຮຽນ; ແລະ
- ພາຍຫຼັງທີ່ທ່ານຮ້ອງຂໍເອົາລະບຽບການປົກປ້ອງຄຸ້ມຄອງ.

ແຈ້ງການໃດແດ່ທີ່ ພະແນກສຶກສາລັດ ໄອໂອວາ ຕ້ອງໄດ້ ເອົາໃຫ້ຂ້ອຍກ່ຽວກັບ ລະບຽບການປົກ ປ້ອງຄຸ້ມຄອງ?

ພະແນກການສຶກສາລັດໄອໂອວາຕ້ອງເອົາທ່ານແຈ້ງການທີ່ພຽງພໍເພື່ອແຈ້ງໃຫ້ທ່ານຮູ້ຢ່າງຄົບຖ້ວນກ່ຽວກັບລະບຽບການປົກ ປ້ອງຄຸ້ມຄອງພາຍໃຕ້ກົດໝາຍ IDEA. ພວກມັນລວມມີ:

ປຶ້ມຄູ່ມືລະບຽບການປົກປ້ອງຄຸ້ມຄອງທີ່ມີໃຫ້ເປັນ:

- ພາສາອັງກິດ
- ພາສາສະເປນ
- ພາສາບອັສເນັຍ
- ພາສາເຊີເບັຍ-ໂຄເອເຊຍ
- ພາສາຫວຽດນາມ
- ພາສາອາຣາບິກ, ແລະ
- ພາສາລາວ

ໝາຍເຫດ: ສະບັບແປຂອງປຶ້ມຄູ່ມືລະບຽບການປົກປ້ອງຄຸ້ມຄອງແມ່ນມີໃຫ້ຢູ່ເທິງເວັບໄຊຂອງພະແນກສຶກສາໄອໂອວາທີ່: http://www.educateiowa.gov/index.php?option=com_content&task=view&id=602&Itemid=1604

ລາຍລະອຽດກ່ຽວກັບ

- ເດັກນ້ອຍຜູ້ທີ່ຂໍ້ມູນລະບຸຕົນຕົວສ່ວນບຸກຄົນຂອງເຂົາເຈົ້າຖືກຮັກສາໄວ້;
- ປະເພດຂໍ້ມູນທີ່ຊອກຫາ;
- ວິທີການທີ່ທາງລັດຈະໃຊ້ໃນການເກັບກໍາຂໍ້ມູນ (ລວມທັງແຫຼ່ງຂໍ້ມູນຈາກໃຜທີ່ຂໍ້ມູນຈະຖືກເກັບກໍາເອົາ); ແລະ
- ການນໍາໃຊ້ຂໍ້ມູນທີ່ຈະເຮັດ.
- ສິ່ງລວມກ່ຽວກັບນະໂຍບາຍ ແລະ ລະບຽບຂັ້ນຕອນຕ່າງໆທີ່ບັນດາອົງການເຂົ້າຮ່ວມຈະຕ້ອງໄດ້ປະຕິບັດຕາມໃນເລື່ອງການ ເກັບມ້ຽນ, ການເປີດເຜີຍຕໍ່ພາກສ່ວນທີສາມ, ການຮັກສາໄວ້, ແລະ ການທໍາລາຍຖິ້ມ ບັນດາຂໍ້ມູນລະບຸຕົນຕົວສ່ວນບຸກຄົນ.
- ລາຍລະອຽດຂອງທຸກໆສິດທິຂອງພໍ່ແມ່ ແລະ ເດັກນ້ອຍທີ່ມີຕໍ່ກັບຂໍ້ມູນນີ້, ລວມທັງສິດທິພາຍໃຕ້ກົດໝາຍ FERPA (ຂໍ້ 34 C.F.R. ພາກ 99).

ໝາຍເຫດ: ກ່ອນຈະມີກົດຈະກໍາລະບຸຕົວ, ຊອກຫາ, ຫຼືປະເມີນຜົນທີ່ສໍາຄັນ, ເຊັ່ນວ່າ ໂຄງການ child find, ໜັງສືແຈ້ງການ ກ່ຽວກັບເລື່ອງດັ່ງກ່າວຕ້ອງໄດ້ເຜີຍແຜ ຫຼື ປະກາດໃນໜັງສືພິມ ຫຼືສື່ອື່ນໆ, ຫຼື ທັງສອງຢ່າງ, ໂດຍມີການເຜີຍແຜ່ຢ່າງພຽງພໍເພື່ອ ແຈ້ງໃຫ້ພໍ່ແມ່ຜູ້ປົກຄອງທົ່ວທັງລັດໄດ້ຮັບຮູ້ກ່ຽວກັບກົດຈະກໍາໃນການຊອກຫາ, ລະບຸຕົວ ແລະ ປະເມີນຜົນເດັກນ້ອຍ ທີ່ ຕ້ອງການການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ.

ໝາຍເຫດ:

ແຫຼ່ງຂໍ້ມູນອື່ນ

ແຫຼ່ງຂໍ້ມູນອື່ນອື່ນກ່ຽວກັບກົດໝາຍ IDEA 2004, ກົດລະບຽບດ້ານການບໍລິຫານການສຶກສາພິເສດຂອງລັດໄອໂອວາ ແລະ ຂໍ້ກຳນົດ ແລະກົດລະບຽບອື່ນທີ່ສຳຄັນສຳລັບພໍ່ແມ່ນັກຮຽນ:

ບັນດາເວັບໄຊທີ່ມີຂໍ້ມູນກ່ຽວກັບການປົກປ້ອງຄຸ້ມຄອງພໍ່ແມ່ນັກຮຽນ:

- ກົດລະບຽບດ້ານການບໍລິຫານການສຶກສາພິເສດຂອງລັດໄອໂອວາ
http://educateiowa.gov/index.php?option=com_content&task=view&id=624&Itemid=592
- ກົດໝາຍວ່າດ້ວຍການປັບປຸງການສຶກສາຂອງຄົນພິການ (IDEA) 2004
http://idea.ed.gov

ໝາຍເຫດ: ສຳລັບຂໍ້ມູນອ້າງອີງຂອງທ່ານ, ຂໍ້ກຳນົດສຳລັບເນື້ອໃນຂອງຄູ່ມືລະບຽບການປົກປ້ອງຄຸ້ມຄອງສຳລັບພໍ່ແມ່ຜູ້ປົກຄອງແມ່ນເບິ່ງໄດ້ໃນຫົວຂໍ້ 20 USC § 1415(d) ຂອງກົດໝາຍວ່າດ້ວຍການປັບປຸງການສຶກສາສຳລັບຄົນພິການ (IDEA) 2004.

- ກົດໝາຍວ່າດ້ວຍສິດທິດ້ານການສຶກສາ ແລະຄວາມເປັນສ່ວນຕົວຂອງຄອບຄົວ (FERPA):
http://www.ed.gov/policy/gen/guid/fpco/ferpa/index.html

ຊັບພະຍາກອນ ແລະ ຂໍ້ມູນອ້າງອີງອື່ນໆ:

- ຄິດຫາທາງແກ້ ເມື່ອມີສິ່ງຜິດພາດ – ແມ່ນເອກະສານຈາກພະແນກສຶກສາລັດໄອໂອວາ
- ສູນເຜີຍແຜ່ຂໍ້ມູນສຳລັບຄົນພິການແຫ່ງຊາດ, NICHY, http://www.nichcy.org, ແມ່ນເວັບໄຊໜຶ່ງທີ່ມີການພິມເຜີຍແຜ່ຢ່າງຫຼວງຫຼາຍກ່ຽວກັບກົດໝາຍ IDEA 2004, ລະບຽບການປົກປ້ອງຄຸ້ມຄອງ ແລະ ຂໍ້ມູນອື່ນກ່ຽວກັບຄວາມພິການ.
- ສູນ PACER, http://www.pacer.org/legislation/idea/index.asp ມີເອກະສານບົດສັງລວມຂອງກົດໝາຍ IDEA 2004 ໃນເວລາທີ່ພິມເຜີຍແຜ່ສິ່ງນີ້, ເຊັ່ນດຽວກັບຂໍ້ມູນອື່ນໆສຳລັບຄອບຄົວທີ່ມີເດັກນ້ອຍພິການ.
- ເວັບໄຊຂອງພະແນກສຶກສາລັດໄອໂອວາ ສຳລັບການແກ້ໄຂຂໍ້ຂັດແຍ້ງ ທີ່: http://educateiowa.gov/index.php?option=com_content&view=article&id=1280&Itemid=3480

ສອບຖາມເອົາຂໍ້ມູນເພີ່ມເຕີມນຳຄູປະຈຳຫ້ອງຂອງລູກທ່ານ, ອຳນວຍການໂຮງຮຽນ ຫຼື ທີ່ປຶກສາ AEA (ພະນັກງານ AEA ຜູ້ທີ່ນັກໂອ້ລົມກັບທ່ານເປັນປະຈຳກ່ຽວກັບລູກຂອງທ່ານ.

ໝາຍເຫດ:

ການຮັກສາຄວາມລັບຂອງຂໍ້ມູນຂ່າວສານ & ບັນທຶກການສຶກສາ

ການເຂົ້າເຖິງບັນທຶກການສຶກສາ

ອົງການລັດຖະບານຕ້ອງອະນຸຍາດໃຫ້ທ່ານກວດກາ ແລະ ກວດເບິ່ງທຸກໆບັນທຶກການສຶກສາທີ່ຖືກເກັບກຳ ຫຼື ຮັກສາໄວ້ ຫຼື ນຳໃຊ້ໂດຍອົງການດ້ານການສຶກສາ ຜ່ານຂໍ້ກຳນົດທັງໃນກົດໝາຍ IDEA ແລະ ກົດໝາຍວ່າດ້ວຍສິດທິດ້ານການສຶກສາ ແລະ ຄວາມເປັນສ່ວນຕົວຂອງຄອບຄົວ (FERPA).

ອົງການດັ່ງກ່າວຕ້ອງປະຕິບັດຕາມຄຳຮ້ອງຂໍກວດເບິ່ງ ຫຼື ກວດກາບັນທຶກຕ່າງໆ ໂດຍບໍ່ມີການຊັກຊ້າທີ່ບໍ່ຈຳເປັນ – ບໍ່ໃຫ້ແກ່ຍາວເກີນ 45 ວັນຕາມເວລາປະຕິທິນ ແລະ ກ່ອນທີ່ຈະມີການປະຊຸມໃດໆກ່ຽວກັບ IEP ຫຼື ການພິຈາລະນາຕັດສິນ ຫຼື ກອງປະຊຸມແກ້ໄຂຂໍ້ຂັດແຍ້ງໃດໜຶ່ງ.

ການກວດເບິ່ງບັນທຶກການສຶກສາ

ໃນຖານະເປັນພໍ່ຫຼືແມ່ຂອງເດັກພິການ, ທ່ານຕ້ອງໄດ້ຮັບໂອກາດໃນການກວດກາ ແລະ ກວດເບິ່ງທຸກໆບັນທຶກການສຶກສາຂອງລູກທ່ານກ່ຽວກັບ:

- ການລະບຸຕົນຕົວ;
- ການປະເມີນຜົນ;
- ການບັນຈຸດ້ານການສຶກສາຂອງລູກທ່ານ; ແລະ
- ການສະໜອງການສຶກສາພາກລັດທີ່ເໝາະສົມໂດຍບໍ່ເສຍຄ່າ (FAPE) ໃຫ້ແກ່ລູກທ່ານ.

ບັນທຶກຂອງລູກທ່ານ

ແຕ່ລະອົງການຕ້ອງໄດ້ສະໜອງໃຫ້ພໍ່ແມ່, ຕາມຄຳຮ້ອງຂໍ, ບັນຊີລາຍການກ່ຽວກັບປະເພດ ແລະ ສະຖານທີ່ຂອງບັນທຶກການສຶກສາ ທີ່ໄດ້ເກັບເອົາ, ຮັກສາໄວ້ ຫຼື ນຳໃຊ້ໂດຍອົງການນັ້ນໆ.

ຄ່າໃຊ້ຈ່າຍສຳລັບການອັດສຳເນົາບັນທຶກຕ່າງໆ

ແຕ່ລະອົງການອາດຈະຄິດໄລ່ເອົາຄ່າທຳນຽມສຳລັບສຳເນົາຂອງເອກະສານບັນທຶກດັ່ງກ່າວ ຖ້າຄ່າທຳນຽມດັ່ງກ່າວບໍ່ເປັນການສະກັດກັ້ນທ່ານຈາກສິດທິໃນການກວດເບິ່ງ ແລະ ກວດກາບັນທຶກເຫຼົ່ານັ້ນ. ອົງການອາດຈະບໍ່ໄລ່ເອົາຄ່າທຳນຽມຕໍ່ກັບການຊອກຫາ ຫຼື ຊອກຄືນຄືນຂໍ້ມູນດັ່ງກ່າວ.

ສິດທິໃນການກວດກາ ແລະ ກວດເບິ່ງບັນທຶກ

ສິດທິໃນການກວດກາ ແລະກວດເບິ່ງຂອງທ່ານລວມມີສິ່ງຕໍ່ໄປນີ້:

- ສິດທິໃນການໄດ້ຮັບການຕອບສະໜອງຈາກອົງການທີ່ເຂົ້າຮ່ວມຕໍ່ກັບການຮ້ອງຂໍຢ່າງສົມເຫດສົມຜົນເອົາຄຳອະທິບາຍ ແລະ ການຕີຄວາມໝາຍຂອງເອກະສານບັນທຶກ;
- ສິດທິໃນການຮ້ອງຂໍໃຫ້ອົງການສະໜອງສຳເນົາບັນທຶກທີ່ປະກອບມີຂໍ້ມູນທີ່ຖ້າວ່າບໍ່ສາມາດສະໜອງສຳເນົາໃຫ້ຈະສະກັດກັ້ນທ່ານຈາກການປະຕິບັດສິດທິໃນການກວດກາ ແລະ ກວດເບິ່ງບັນທຶກນັ້ນ;
- ສິດທິໃນການມີຕົວແທນຂອງທ່ານເພື່ອເຮັດໜ້າທີ່ກວດກາ ແລະ ກວດເບິ່ງບັນທຶກແທນທ່ານ.

ໝາຍເຫດ: ອົງການຈະຖືວ່າພໍ່ຫຼືແມ່ເປັນຜູ້ມີສິດອຳນາດໃນການກວດກາ ແລະ ກວດເບິ່ງບັນທຶກດ້ານການສຶກສາ ເວັ້ນເສຍແຕ່ ອົງການດັ່ງກ່າວໄດ້ຮັບການແຈ້ງວ່າພໍ່ຫຼືແມ່ຂອງເດັກເປັນຜູ້ບໍ່ມີສິດອຳນາດ ພາຍໃຕ້ກົດໝາຍຂອງລັດທີ່ນຳໃຊ້ ເຊິ່ງຄວບຄຸມປະເດັນບັນຫາເຊັ່ນ ການເປັນຜູ້ປົກຄອງເດັກ, ການແຍກທາງ ແລະ ການຢ່າຮ້າງຂອງພໍ່ແມ່ເດັກ.

ນິຍາມຄວາມໝາຍ: ຂໍ້ມູນທີ່ສາມາດລະບຸຕົວຕົນສ່ວນບຸກຄົນ

ຂໍ້ມູນທີ່ສາມາດລະບຸຕົວຕົນສ່ວນບຸກຄົນໝາຍເຖິງຂໍ້ມູນສະເພາະເຊັ່ນວ່າ:

- ຊື່ຂອງລູກທ່ານ;
- ຊື່ຂອງທ່ານໃນນາມເປັນພໍ່ຫຼືແມ່ເດັກ;
- ທີ່ຢູ່ເຮືອນ;
- ລະຫັດປະກັນສັງຄົມ; ແລະ
- ລາຍການລັກສະນະພິເສດສ່ວນບຸກຄົນທີ່ອະທິບາຍເຖິງເດັກໃດໜຶ່ງໃນແບບທີ່ຄົນອື່ນສາມາດລະບຸຕົນຕົວຂອງເດັກຄົນນັ້ນໄດ້ຢ່າງແນ່ນອນ.

ບັນທຶກທີ່ໄດ້ຮັບການປົກປ້ອງ

ໂດຍຍົກເວັ້ນການເຂົ້າເຖິງບັນທຶກໂດຍພໍ່ແມ່ເດັກ, ແລະ ພະນັກງານທີ່ໄດ້ຮັບອະນຸຍາດ, ອົງການທີ່ຮັກສາບັນທຶກ, ເຂດການສຶກສາ ຫຼື AEA, ຕ້ອງໄດ້ຈົດບັນທຶກພາກສ່ວນຕ່າງໆທີ່ມີການເຂົ້າເຖິງບັນທຶກການສຶກສາ ເຊິ່ງລວມມີຂໍ້ມູນຄື:

- ຊື່ຂອງພາກສ່ວນນັ້ນ;
- ວັນທີເຂົ້າເບິ່ງ; ແລະ
- ຈຸດປະສົງທີ່ພາກສ່ວນດັ່ງກ່າວໄດ້ຮັບອະນຸຍາດໃຫ້ນຳໃຊ້ບັນທຶກນັ້ນ.

ໝາຍເຫດ: ຖ້າບັນທຶກດັ່ງກ່າວປະກອບມີຂໍ້ມູນຫຼາຍໆຄົນ ນອກຈາກລູກທ່ານ, ທ່ານມີສິດກວດກາ ແລະ ກວດເບິ່ງພຽງແຕ່ຂໍ້ມູນທີ່ກ່ຽວຂອງກັບລູກຂອງທ່ານ ຫຼື ມີສິດໄດ້ຮັບແຈ້ງພຽງແຕ່ຂໍ້ມູນສະເພາະກ່ຽວກັບລູກທ່ານເທົ່ານັ້ນ.

ບັນທຶກທີ່ເຊື່ອວ່າບໍ່ຖືກຕ້ອງ

ຖ້າທ່ານເຊື່ອວ່າຂໍ້ມູນທີ່ເກັບກຳ, ຮັກສາໄວ້ ຫຼື ນຳໃຊ້ ແມ່ນຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ຂໍ້ມູນທີ່ເຮັດໃຫ້ເຂົ້າໃຈຜິດ ຫຼື ລະເມີດຄວາມເປັນສ່ວນຕົວ ຫຼື ສິດທິອື່ນໆຂອງລູກທ່ານ, ທ່ານສາມາດຮຽກຮ້ອງໃຫ້ອົງການທີ່ເກັບຮັກສາຂໍ້ມູນນັ້ນດຳເນີນການແກ້ໄຂບັນທຶກດັ່ງກ່າວໃຫ້ຖືກຕ້ອງ.

ເຂດການສຶກສາ ຫຼື AEA ຈະເປັນຜູ້ຕັດສິນວ່າຈະແກ້ໄຂຂໍ້ມູນ ຕາມການຮ້ອງຂໍຫຼືບໍ່ ພາຍໃນກຳນົດເວລາທີ່ເໝາະສົມ. ຖ້າທາງເຂດການສຶກສາ ຫຼື AEA ຕັດສິນໃຈປະຕິເສດບໍ່ແກ້ໄຂຂໍ້ມູນດັ່ງກ່າວ, ເຂົາເຈົ້າກໍ່ຈະແຈ້ງໃຫ້ທ່ານຊາບກ່ຽວກັບການປະຕິນັ້ນ ແລະ ແນະນຳໃຫ້ທ່ານຮູ້ວ່າທ່ານມີສິດຮຽກຮ້ອງໃຫ້ມີການໄຕ່ສວນຄືນການຕັດສິນດັ່ງກ່າວ. (ຂໍ້ກຳນົດກ່ຽວກັບການໄຕ່ສວນຕັດສິນແມ່ນມາຈາກກົດໝາຍ FERPA ແລະ ບໍ່ແມ່ນຂໍ້ກຳນົດໃນກົດໝາຍ IDEA).

ການໄຕ່ສວນ FERPA

ຫຼັງຈາກການປະຕິເສດທີ່ຈະແກ້ໄຂຂໍ້ມູນໃນບັນທຶກຂອງເດັກ, ທາງເຂດການສຶກສາຈະແຈ້ງບອກໃຫ້ທ່ານຮູ້ກ່ຽວກັບການປະຕິເສດນັ້ນ ແລະແຈ້ງບອກທ່ານກ່ຽວກັບສິດທິຂອງທ່ານຕໍ່ກັບການໄຕ່ສວນ ອີງຕາມຂໍ້ກຳນົດຂອງກົດໝາຍ FERPA.

ການໄຕ່ສວນຈະສົ່ງຜົນໃຫ້ເກີດໜຶ່ງໃນສອງການຕັດສິນລຸ່ມນີ້:

1. ຖ້າການໄຕ່ສວນຕັດສິນວ່າຂໍ້ມູນນັ້ນແມ່ນຜິດພາດ, ບໍ່ຖືກຕ້ອງ ຫຼື ມີການລະເມີດຄວາມເປັນສ່ວນຕົວ ຫຼື ສິດທິອື່ນໆຂອງລູກທ່ານ, ທາງອົງການຕ້ອງໄດ້ປ່ຽນແປງຂໍ້ມູນດັ່ງກ່າວໃຫ້ຖືກຕ້ອງ ແລະ ແຈ້ງໃຫ້ທ່ານຊາບເປັນລາຍລັກອັກສອນ.
2. ຖ້າການໄຕ່ສວນຕັດສິນວ່າຂໍ້ມູນນັ້ນຖືກຕ້ອງ, ບໍ່ໄດ້ຜິດພາດ ຫຼື ລະເມີດຕໍ່ກັບຄວາມເປັນສ່ວນຕົວ ຫຼື ສິດທິອື່ນໆຂອງລູກທ່ານ, ອົງການຈະແຈ້ງໃຫ້ທ່ານຊາບກ່ຽວກັບການຕັດສິນດັ່ງກ່າວ. ນອກນັ້ນ ທາງເຂດການສຶກສາ ຫຼື AEA ກໍ່ຈະແຈ້ງໃຫ້ທ່ານຊາບກ່ຽວກັບສິດທິຂອງທ່ານໃນການເອົາໄວ້ໃນບັນທຶກ ໃບຖະແຫຼງການທີ່ໃຫ້ຄຳຄິດເຫັນຂອງທ່ານຕໍ່ກັບຂໍ້ມູນດັ່ງກ່າວ ຫຼື ກຳນົດເຫດຜົນຂອງທ່ານທີ່ບໍ່ເຫັນດີນຳການຕັດສິນຂອງທາງຝ່າຍອົງການ.

ໝາຍເຫດ: ທຸກໆຄຳອະທິບາຍທີ່ເອົາໄວ້ໃນບັນທຶກຂອງລູກທ່ານ ຕ້ອງໄດ້ຮັກສາໄວ້ໂດຍອົງການ ເປັນສ່ວນໜຶ່ງຂອງບັນທຶກນັ້ນໆ ຕາບໃດທີ່ບັນທຶກ ຫຼື ສ່ວນທີ່ຂັດແຍ້ງນັ້ນຍັງຖືກຮັກສາໄວ້ໂດຍທາງອົງການ. ຖ້າບັນທຶກ ຫຼື ສ່ວນເອກະສານທີ່ຂັດແຍ້ງນັ້ນຖືກເປີດເຜີຍ ໂດຍອົງການຕໍ່ກັບພາກສ່ວນອື່ນ, ຄຳອະທິບາຍຂອງທ່ານກໍ່ຕ້ອງໄດ້ເປີດເຜີຍເຊັ່ນກັນ.

ການອະນຸຍາດເປີດເຜີຍບັນທຶກຕ່າງໆ

ການຍິນຍອມເຫັນດີຈາກພໍ່ແມ່, ຫຼື ການຍິນຍອມເຫັນດີຈາກເດັກທີ່ຄົບເງື່ອນໄຂທີ່ຮອດອາຍຸບັນລຸນິຕິພາວະ ແມ່ນຕ້ອງໄດ້ຮັບກ່ອນທີ່ຈະເປີດເຜີຍຂໍ້ມູນທີ່ສາມາດລະບຸຕົນຕົວສ່ວນບຸກຄົນຕໍ່ກັບບຸກຄົນອື່ນ ນອກເໜືອຈາກເຈົ້າໜ້າທີ່ຂອງອົງການທີ່ເຂົ້າຮ່ວມ (ຕົວຢ່າງ, ເຂດການສຶກສາອື່ນໃດໜຶ່ງທີ່ທ່ານຈະລົງຊື່ໃຫ້ລູກທ່ານເຂົ້າຮຽນ), **ເວັ້ນເສຍແຕ່** ຂໍ້ມູນນັ້ນຖືກປະກອບຢູ່ໃນບັນທຶກດ້ານການສຶກສາ ແລະ ກົດໝາຍ FERPA ອະນຸຍາດໃຫ້ເປີດເຜີຍ ໂດຍບໍ່ຕ້ອງມີການຍິນຍອມເຫັນດີຈາກພໍ່ແມ່.

ໝາຍເຫດ:

ການປົກປ້ອງຄວາມລັບ ແລະຄວາມເປັນສ່ວນຕົວ

ແຕ່ລະອົງການຕ້ອງໄດ້ປົກປ້ອງຄວາມລັບຂອງຂໍ້ມູນທີ່ສາມາດລະບຸຕົນຕົວສ່ວນບຸກຄົນ ໃນໄລຍະເກັບກຳ, ຮັກສາໄວ້, ເປີດເຜີຍ ແລະ ທຳລາຍຖິ້ມບັນທຶກດັ່ງກ່າວ.

ນອກນັ້ນ ພັນທະອື່ນໆທີ່ກົດໝາຍກຳນົດປະກອບມີ:

- ໃນ ແຕ່ລະອົງການ ຕ້ອງມີເຈົ້າໜ້າທີ່ຜູ້ໜຶ່ງເປັນຜູ້ຮັບຜິດຊອບສຳລັບການຮັບປະກັນຄວາມລັບຂອງຂໍ້ມູນລະບຸຕົນຕົວສ່ວນບຸກຄົນ.
- ທຸກໆຄົນທີ່ເກັບກຳ ຫຼື ນຳໃຊ້ຂໍ້ມູນລະບຸຕົນຕົວສ່ວນບຸກຄົນ ຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບການຮັກສາຄວາມລັບ ແລະຄວາມເປັນສ່ວນຕົວ ພາຍໃຕ້ພາກ B ຂອງກົດໝາຍ IDEA ແລະ FERPA.
- ແຕ່ລະອົງການທີ່ເຂົ້າຮ່ວມຕ້ອງໄດ້ເຮັດ, ເພື່ອການກວດກາພາກລັດ, ບັນຊີລາຍຊື່ ແລະ ຕຳແໜ່ງງານປະຈຸບັນຂອງພະນັກງານພາຍໃນອົງການຜູ້ທີ່ອາດຈະເຂົ້າເຖິງຂໍ້ມູນລະບຸຕົນຕົວສ່ວນບຸກຄົນ.

ບັນທຶກທີ່ບໍ່ຕ້ອງການອີກຕໍ່ໄປ

ເຂດການສຶກສາ ແລະ ອົງການ AEA ຕ້ອງແຈ້ງໃຫ້ທານຮູ້ເມື່ອໃດທີ່ຂໍ້ມູນກຳນົດຕົນຕົວສ່ວນບຸກຄົນທີ່ໄດ້ເກັບກຳ, ຮັກສາໄວ້ ຫຼື ນຳໃຊ້ ພາຍໃຕ້ກົດໝາຍ IDEA 2004 ແມ່ນບໍ່ຈຳເປັນອີກໃນການສະໜອງບໍລິການດ້ານການສຶກສາໃຫ້ແກ່ລູກຂອງທ່ານ.

ຖ້າເຂດການສຶກສາ ຫຼື ອົງການ AEA ກຳນົດວ່າຂໍ້ມູນດັ່ງກ່າວແມ່ນບໍ່ຕ້ອງການອີກໃນການສະໜອງບໍລິການທາງດ້ານການສຶກສາ, ຂໍ້ມູນດັ່ງກ່າວຕ້ອງຖືກທຳລາຍຖິ້ມ ຕາມຄຳຮຽກຮ້ອງຂອງທ່ານ.

ແນວໃດກໍ່ດີ ຍັງມີບາງຂໍ້ມູນໃນບັນທຶກຂອງລູກທ່ານທີ່ຈະຖືກຮັກ ສາໄວ້ເປັນສ່ວນໜຶ່ງຂອງບັນທຶກຖາວອນ ແລະ ອາດຈະຖືກຮັກສາໄວ້ໂດຍບໍ່ມີກຳນົດເວລາ. ຂໍ້ມູນນັ້ນປະກອບມີຂໍ້ມູນເຊັ່ນ ວ່າ ຊື່, ທີ່ຢູ່, ເບີໂທລະສັບ, ຊັ້ນຮຽນ, ບັນທຶກການມາຮຽນ, ຫ້ອງຮຽນທີ່ໄດ້ເຂົ້າຮຽນ, ລະດັບຊັ້ນທີ່ຮຽນຈົບ ແລະ ປີທີ່ຮຽນຈົບ.

ການຍິນຍອມເຫັນດີຂອງພໍ່ແມ່ຜູ້ປົກຄອງ

ການຍິນຍອມເຫັນດີ

ການຍິນຍອມເຫັນດີໝາຍຄວາມວ່າ ທ່ານ:

1. ໄດ້ຮັບແຈ້ງໃຫ້ຊາບຢ່າງຄົບຖ້ວນ ໃນພາສາກຳເນີດຂອງທ່ານ ຫຼື ການສື່ສານຮູບແບບອື່ນໆ (ເຊັ່ນວ່າພາສາໃບ້, ພາສານູນສຳລັບຄົນຕາບອດ, ຫຼື ການສື່ສານເປັນຄຳເວົ້າ) ທຸກໆຂໍ້ມູນກ່ຽວກັບການດຳເນີນການຕ່າງໆທີ່ທ່ານກຳລັງໃຫ້ການຍິນຍອມເຫັນດີ.
2. ເຂົ້າໃຈ ແລະ ເຫັນດີນຳເປັນລາຍລັກອັກສອນຕໍ່ກັບການດຳເນີນການນັ້ນ, ແລະ ການຍິນຍອມອະທິບາຍການດຳເນີນການນັ້ນ ແລະໃຫ້ບອກລາຍການບັນທຶກຕ່າງໆ (ຖ້າມີ) ທີ່ຈະຖືກເປີດເຜີຍ ແລະໃຫ້ກັບໃຜ; ແລະ.
3. ເຂົ້າໃຈວ່າການຍິນຍອມດັ່ງກ່າວແມ່ນເປັນການສະໝັກໃຈຂອງທ່ານ ແລະ ທ່ານສາມາດຖອນຄືນການຍິນຍອມດັ່ງກ່າວໄດ້ທຸກເວລາ.

ໝາຍເຫດ: ການຖອນການຍິນຍອມເຫັນດີຂອງທ່ານບໍ່ສາມາດລົບລ້າງ (ຍ້ອນກັບຄືນ) ການກະທຳທີ່ໄດ້ເກີດຂຶ້ນແລ້ວ ຫຼັງຈາກທີ່ທ່ານໄດ້ໃຫ້ການຍິນຍອມ ແລະ ກ່ອນເວລາທີ່ທ່ານຖອນຄືນການຍິນຍອມເຫັນດີດັ່ງກ່າວ.

ການຍິນຍອມເຫັນດີສຳລັບການປະເມີນຜົນເບື້ອງຕົ້ນ

ເຂດການສຶກສາ ແລະ ອົງການ AEA ບໍ່ສາມາດດຳເນີນການປະເມີນຜົນຂັ້ນຕົ້ນໃຫ້ແກ່ລູກທ່ານເພື່ອກຳນົດວ່າລູກຂອງທ່ານມີເງື່ອນໄຂພາຍໃຕ້ພາກ B ຂອງກົດໝາຍ IDEA ຫຼືບໍ່ໃນການໄດ້ຮັບການສຶກສາພິເສດ ແລະບໍລິການຕ່າງໆທີ່ກ່ຽວຂ້ອງ ໂດຍປາສະຈາກການແຈ້ງບອກເປັນລາຍລັກອັກສອນໃຫ້ທ່ານຮັບຮູ້ກ່ອນກ່ຽວກັບການສະເໜີດຳເນີນການດັ່ງກ່າວ ແລະໂດຍປາສະຈາກການໄດ້ຮັບການຍິນຍອມເຫັນດີຈາກທ່ານ.

ທາງເຂດການສຶກສາ ແລະອົງການ AEA ຕ້ອງພະຍາຍາມຢ່າງສົມເຫດສົມຜົນໃນການໄດ້ຮັບການຍິນຍອມຢ່າງຄົບຖ້ວນຈາກທ່ານສຳລັບການປະເມີນຜົນຂັ້ນຕົ້ນ ເພື່ອຕັດສິນວ່າລູກຂອງທ່ານແມ່ນເດັກພິການຫຼືບໍ່.

ການຍິນຍອມຂອງທ່ານສຳລັບການປະເມີນຜົນຂັ້ນຕົ້ນບໍ່ໄດ້ໝາຍຄວາມວ່າທ່ານໄດ້ໃຫ້ການຍິນຍອມເຫັນດີສຳລັບເລື່ອງທີ່ເຂດການສຶກສາ ແລະ ອົງການ AEA ຈະເລີ່ມຕົ້ນສະໜອງການສຶກສາພິເສດ ແລະ ບໍລິການຕ່າງໆທີ່ກ່ຽວຂ້ອງໃຫ້ແກ່ລູກຂອງທ່ານ.

ປະຕິເສດບໍ່ໃຫ້ການຍິນຍອມເຫັນດີສໍາລັບການປະເມີນຜົນເບື້ອງຕົ້ນ

ຖ້າລູກຂອງທ່ານໄດ້ລົງທະບຽນເຂົ້າຮຽນໃນໂຮງຮຽນລັດຖະບານ ຫຼື ທ່ານກໍາລັງຊອກລົງທະບຽນໃຫ້ລູກຂອງທ່ານເຂົ້າຮຽນໃນໂຮງຮຽນລັດຖະບານໃດໜຶ່ງ ແລະ ທ່ານໄດ້ປະຕິເສດບໍ່ໃຫ້ການຍິນຍອມເຫັນດີ ຫຼື ບໍ່ສາມາດສະໜອງຕໍ່ກັບການຮ້ອງຂໍ ໃຫ້ສະໜອງການຍິນຍອມສໍາລັບການປະເມີນຜົນຂັ້ນຕົ້ນໃດໜຶ່ງ, ທາງເຂດການສຶກສາ ຫຼື ອົງການ AEA ອາດຈະ, ແຕ່ບໍ່ກໍານົດ, ຊອກຫົນທາງດໍາເນີນການປະເມີນຜົນຂັ້ນຕົ້ນຂອງລູກທ່ານ ໂດຍຂະບວນການໄກ່ເກ່ຍແກ້ໄຂຂອງກົດໝາຍ IDEA ຫຼື ການຮ້ອງຮຽນຕາມຫຼັກ due process, ການປະຊຸມແກ້ໄຂບັນຫາ, ແລະ ຂັ້ນຕອນການໄຕ່ສວນຍຸຕິທໍາຕາມຫຼັກ due process.

ທາງເຂດການສຶກສາ ຫຼື ອົງການ AEA ຈະບໍ່ລະເມີດພັນທະຂອງຕົນໃນການຊອກຫາສະຖານທີ່, ກໍານົດຕົນຕົວ ແລະ ປະເມີນຜົນລູກຂອງທ່ານ ຖ້າອົງການດັ່ງກ່າວບໍ່ຊອກດໍາເນີນການປະເມີນຜົນລູກຂອງທ່ານ ໃນສະພາບການເຫຼົ່ານີ້.

ການປະເມີນຜົນເບື້ອງຕົ້ນເມື່ອເດັກຢູ່ໃນການດູແລອຸປະຖໍາຂອງລັດ

ຖ້າເດັກນ້ອຍແມ່ນເດັກຢູ່ໃນຄວາມດູແລອຸປະຖໍາຂອງລັດ ແລະ ບໍ່ໄດ້ອາໄສຢູ່ນໍາພໍ່ຫຼືແມ່ຂອງຕົນ, ທາງເຂດການສຶກສາ ແລະ ອົງ ການ AEA ບໍ່ຕ້ອງການມີການຍິນຍອມເຫັນດີຈາກພໍ່ແມ່ເດັກສໍາລັບການປະເມີນຜົນຂັ້ນຕົ້ນ ເພື່ອຕັດສິນກໍານົດວ່າເດັກເປັນຜູ້ພິການຫຼືບໍ່ ຖ້າ:

1. ເຖິງແມ່ນໄດ້ພະຍາຍາມຢ່າງສົມເຫດສົມຜົນແລ້ວ, ແຕ່ເຂົາເຈົ້າກໍ່ບໍ່ສາມາດຊອກຫາພໍ່ຫຼືແມ່ຂອງເດັກພົບ;
2. ສິດທິຂອງພໍ່ແມ່ເດັກໄດ້ສິ້ນສຸດລົງ ຕາມການກໍານົດຂອງກົດໝາຍລັດ; ຫຼື
3. ຜູ້ພິພາກສາໄດ້ມອບໝາຍສິດທິໃນການຕັດສິນດ້ານການສຶກສາ ແລະ ໃນການໃຫ້ການຍິນຍອມເຫັນດີສໍາລັບການປະເມີນຜົນຂັ້ນຕົ້ນ ໃຫ້ກັບບຸກຄົນໃດໜຶ່ງທີ່ບໍ່ແມ່ນພໍ່ຫຼືແມ່ຂອງເດັກ.

ໝາຍເຫດ: "ເດັກຢູ່ໃນຄວາມດູແລອຸປະຖໍາຂອງລັດ," ຕາມທີ່ໃຊ້ໃນກົດໝາຍ IDEA, ໝາຍເຖິງເດັກນ້ອຍໃດໜຶ່ງ, ຕາມການກໍານົດໂດຍລັດບ່ອນທີ່ເດັກດັ່ງກ່າວອາໄສຢູ່, ຜູ້ທີ່ແມ່ນ:

1. ເດັກບຸນທໍາ (ລູກລ້ຽງ) ທີ່ບໍ່ມີພໍ່ແມ່ລ້ຽງ;
2. ຖືກພິຈາລະນາວ່າເປັນເດັກອຸປະຖໍາຂອງລັດ ພາຍໃຕ້ກົດໝາຍຂອງລັດ; ຫຼື
3. ໃນການຄຸ້ມຄອງດູແລຂອງອົງການສະຫວັດດີການເດັກທີ່ເປັນອົງການລັດຖະບານ.

ການຍິນຍອມເຫັນດີເພື່ອເລີ່ມການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງຕ່າງໆ

ເຂດການສຶກສາ ແລະ ອົງການ AEA ຕ້ອງໄດ້ຮັບການຍິນຍອມເຫັນດີຈາກທ່ານ ກ່ອນທີ່ຈະໃຫ້ການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງແກ່ລູກຂອງທ່ານສໍາລັບຄັ້ງທໍາອິດ.

ເຂົາເຈົ້າຈະຕ້ອງພະຍາຍາມຢ່າງສົມເຫດສົມຜົນເພື່ອໃຫ້ໄດ້ຮັບການຍິນຍອມເຫັນດີທີ່ມີຂໍ້ມູນຄົບຖ້ວນຈາກທ່ານ ກ່ອນທີ່ຈະສະໜອງການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງແກ່ລູກຂອງທ່ານສໍາລັບຄັ້ງທໍາອິດ.

ຖ້າທ່ານບໍ່ຕອບຄືນຕໍ່ກັບການຮຽກຮ້ອງຂໍໃຫ້ສະໜອງການຍິນຍອມເຫັນດີຈາກທ່ານເພື່ອໃຫ້ລູກທ່ານໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງສໍາລັບຄັ້ງທໍາອິດ, ຫຼື ຖ້າທ່ານປະຕິເສດບໍ່ໃຫ້ການຍິນຍອມເຫັນດີດັ່ງກ່າວ, ທາງເຂດການສຶກສາ ແລະ ອົງການ AEA ອາດຈະບໍ່ນໍາໃຊ້ລະບຽບການປົກປ້ອງຄຸ້ມຄອງ (ຕົວຢ່າງ, ການໄກ່ເກ່ຍແກ້ໄຂ, ການຮ້ອງຮຽນຕາມຫຼັກ due process, ການປະຊຸມແກ້ໄຂບັນຫາ, ຫຼື ການໄຕ່ສວນຕັດສິນຍຸຕິທໍາຕາມຫຼັກ due process) ເພື່ອໃຫ້ໄດ້ຮັບການເຫັນດີ ຫຼື ຄໍາສັ່ງຕັດສິນວ່າການສຶກສາພິເສດ ແລະການບໍລິການຕ່າງໆທີ່ກ່ຽວຂ້ອງ (ຕາມຄໍາແນະນໍາຂອງທີມ IEP ຂອງລູກທ່ານ) ອາດຈະຖືກສະໜອງໃຫ້ແກ່ລູກທ່ານ ໂດຍບໍ່ມີການຍິນຍອມເຫັນດີຈາກທ່ານ.

ການປະຕິເສດບໍ່ໃຫ້ການຍິນຍອມເຫັນດີຕໍ່ກັບການບໍລິການ

ຖ້າທ່ານປະຕິເສດບໍ່ໃຫ້ການຍິນຍອມເຫັນດີເພື່ອໃຫ້ລູກຂອງທ່ານໄດ້ຮັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງສໍາລັບຄັ້ງທໍາອິດ, ຫຼື ຖ້າທ່ານບໍ່ຕອບຄືນຕໍ່ກັບການຮ້ອງຂໍໃຫ້ສະໜອງການຍິນຍອມເຫັນດີດັ່ງກ່າວ ແລະ ທາງເຂດການສຶກສາ ແລະ ອົງການ AEA ບໍ່ສະໜອງແກ່ລູກທ່ານການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງທີ່ເຂົາເຈົ້າຊອກເອົາການຍິນຍອມເຫັນດີຈາກທ່ານ, ເຂດການສຶກສາ ແລະ ອົງການ AEA:

1. ບໍ່ຖືວ່າລະເມີດຂໍ້ກໍານົດໃນການສະໜອງການສຶກສາພາກລັດຢ່າງເໝາະສົມແບບບໍ່ເສຍຄ່າ (FAPE) ໃຫ້ແກ່ລູກທ່ານສໍາລັບການບໍ່ສາມາດສະໜອງບໍລິການເຫຼົ່ານັ້ນແກ່ລູກຂອງທ່ານໄດ້; ແລະ
2. ບໍ່ຖືກກໍານົດໃຫ້ເປີດກອງປະຊຸມກ່ຽວກັບໂປຣແກຣມການສຶກສາສະເພາະບຸກຄົນ (IEP) ຫຼື ພັດທະນາຫຼັກສູດ IEP ໃດໜຶ່ງຂຶ້ນມາໃຫ້ແກ່ລູກທ່ານສໍາລັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງເຊິ່ງການຍິນຍອມເຫັນດີຈາກທ່ານຖືກຮຽກຮ້ອງໃຫ້ມີ.

ການຖອນຄືນການຍິນຍອມເຫັນດີສໍາລັບການບໍລິການ

ທ່ານສາມາດຖອນຄືນການຍິນຍອມເຫັນດີຂອງທ່ານສໍາລັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງທີ່ພວມສະໜອງໃຫ້ແກ່ລູກຂອງທ່ານໄດ້.

ທ່ານຕ້ອງເຮັດການຖອນຄືນເປັນລາຍລັກອັກສອນ.

ກ່ອນທີ່ການບໍລິການຈະຢຸດເຊົາ, ທ່ານຕ້ອງໄດ້ຮັບແจ້ງການລ່ວງໜ້າເປັນລາຍລັກອັກສອນຈາກອົງການລັດຖະບານດັ່ງກ່າວ.

ຖ້າທ່ານຖອນຄືນການຍິນຍອມເຫັນດີຂອງທ່ານສຳລັບ ການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງທີ່ພວມດຳເນີນຢູ່ສຳລັບລູກທ່ານ, ທາງເຂດການສຶກສາ ແລະ ອົງການ AEA ບໍ່ຈຳເປັນຕ້ອງແກ້ໄຂບັນດາບັນທຶກດ້ານການສຶກສາພິເສດຂອງລູກທ່ານ ເພາະວ່າທ່ານຖອນຄືນການຍິນຍອມເຫັນດີຂອງທ່ານສຳລັບການບໍລິການຕໍ່ໄປ.

ຫຼັງຈາກທີ່ທ່ານ ຖອນຄືນການຍິນ ຍອມເຫັນດີ

ລູກຂອງທ່ານຈະເປັນນັກຮຽນການສຶກສາທົ່ວໄປເທົ່ານັ້ນ. ຈະບໍ່ມີການນຳໃຊ້ການປົກປ້ອງຕ່າງໆຂອງກົດໝາຍ IDEA ຕໍ່ກັບລູກຂອງທ່ານ.

ການຍິນຍອມເຫັນດີ ສຳລັບການປະເມີນ ຜົນຄືນໃໝ່

ເຂດການສຶກສາຂອງທ່ານຕ້ອງໄດ້ຮັບການຍິນຍອມເຫັນດີຈາກທ່ານ ກ່ອນທີ່ຈະປະເມີນຜົນຄືນລູກຂອງທ່ານ, ເວັ້ນເສຍແຕ່ວ່າ ທາງເຂດການສຶກສາສາມາດສະແດງໃຫ້ເຫັນว่า:

1. ທາງເຂດການສຶກສາໄດ້ດຳເນີນບາດກ້າວຕ່າງໆທີ່ຈຳເປັນເພື່ອໄດ້ຮັບການຍິນຍອມເຫັນດີຈາກທ່ານສຳລັບການປະເມີນຄືນລູກຂອງທ່ານ; ແລະ
2. ທ່ານບໍ່ໄດ້ຕອບຄືນ.

ຖ້າທ່ານປະຕິເສດບໍ່ຍິນຍອມເຫັນດີໃຫ້ດຳເນີນການປະເມີນຄືນລູກຂອງທ່ານ, ເຂດການສຶກສາ ຫຼື ອົງການ AEA ອາດຈະ, ແຕ່ບໍ່ກຳນົດ, ຊອກຫາທາງດຳເນີນການປະເມີນຄືນລູກຂອງທ່ານ ໂດຍນຳໃຊ້ການໄກ່ເກ່ຍ, ການຮ້ອງຮຽນຕາມຫຼັກ due process, ກອງປະຊຸມແກ້ໄຂຂໍ້ຂັດແຍ້ງ, ແລະ ຂະບວນການໄຕ່ສວນຍຸຕິທຳຕາມຫຼັກ due process ເພື່ອລົບລ້ຳການປະຕິເສດບໍ່ໃຫ້ການຍິນຍອມເຫັນດີຂອງທ່ານຕໍ່ກັບການປະເມີນຄືນລູກຂອງທ່ານ.

ຄືກັນກັບການປະເມີນຜົນເບື້ອງຕົ້ນ, ທາງເຂດການສຶກສາ ຫຼື ອົງການ AEA ບໍ່ຖືວ່າລະເມີດພັນທະໜ້າທີ່ຂອງຕົນ ພາຍໃຕ້ຂໍ້ກຳນົດໃນພາກ B ຂອງກົດໝາຍ IDEA ຖ້າເຂົາເຈົ້າປະຕິເສດທີ່ຈະຊອກຫາທາງດຳເນີນການປະເມີນຄືນ ໃນລັກສະນະດັ່ງກ່າວນີ້.

ການພະຍາຍາມຂໍ ເອົາການຍິນຍອມ ເຫັນດີ

ເຂດການສຶກສາ ຫຼື ອົງການ AEA ຕ້ອງຮັກສາໄວ້ເອກະສານບັນທຶກຄວາມພະຍາຍາມທີ່ສົມເຫດສົມຜົນເພື່ອໃຫ້ໄດ້ຮັບການຍິນຍອມເຫັນດີຈາກພໍ່ແມ່ເດັກ ສຳລັບປະເມີນຜົນເບື້ອງຕົ້ນ, ເພື່ອສະໜອງການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ ສຳ ລັບຄັ້ງທຳອິດ, ເພື່ອປະເມີນຜົນຄືນ ແລະ ເພື່ອຊອກຫາພໍ່ແມ່ຂອງເດັກທີ່ຢູ່ໃນຄວາມດູແລອຸປະຖຳຂອງລັດສຳລັບການປະເມີນຜົນເບື້ອງຕົ້ນ.

ເອກະສານບັນທຶກຕ້ອງປະກອບມີບັນທຶກສະແດງຄວາມພະຍາຍາມໃນຂົງເຂດຕ່າງໆ ເຫຼົ່ານີ້ ເຊັ່ນว่า:

1. ບັນທຶກລາຍລະອຽດຂອງການໂທທີ່ໄດ້ດຳເນີນ ຫຼືໄດ້ພະຍາຍາມ ແລະ ຜົນຂອງການໂທເຫຼົ່ານັ້ນ;
2. ສຳເນົາຂອງການສື່ສານທີ່ໄດ້ສົ່ງຫາພໍ່ແມ່ເດັກ ແລະ ໜັງສືຕອບກັບຄືນທີ່ໄດ້ຮັບ; ແລະ
3. ບັນທຶກລາຍລະອຽດຂອງການໄປຢ້ຽມຢາມເຮືອນ ຫຼື ບ່ອນເຮັດວຽກຂອງພໍ່ແມ່ເດັກ ແລະ ຜົນຂອງການຢ້ຽມຢາມເຫຼົ່ານັ້ນ.

ຕົວຢ່າງສະເພາະ ອື່ນສຳລັບການຍິນ ຍອມເຫັນດີ

ກົດໝາຍ IDEA ແລະ ຂໍ້ລະບຽບຈັດຕັ້ງປະຕິບັດຂອງກົດໝາຍດັ່ງກ່າວໄດ້ກຳນົດຈຳນວນເວລາເພີ່ມເຕີມ ເມື່ອການຍິນຍອມເຫັນດີຈາກທ່ານແມ່ນຕ້ອງການໃຫ້ມີ. ສິ່ງເຫຼົ່ານີ້ປະກອບການເຜີຍແຜ່ແລກປ່ຽນຂໍ້ມູນກ່ຽວກັບລູກຂອງທ່ານ.

ເວລາເຫຼົ່ານີ້ປະກອບມີ:

1. ການຍິນຍອມເຫັນດີຈາກທ່ານຕ້ອງໄດ້ຮັບ ທຸກຄັ້ງທີ່ທາງເຂດການສຶກສາ ຫຼືອົງການ AEA ຊອກຫາການເຂົ້າເຖິງການປະກັນໄພ ຫຼືເງິນຊ່ວຍເຫຼືອພາກລັດຂອງທ່ານ ຫຼື ການປະກັນໄພພາກເອກະຊົນເພື່ອຊ່ວຍຈ່າຍຄ່າການສະໜອງການສຶກສາ FAPE ໃຫ້ແກ່ລູກຂອງທ່ານ.
2. ການຍິນຍອມເຫັນດີຈາກທ່ານຕ້ອງໄດ້ຮັບ ກ່ອນທີ່ທາງ ເຂດການສຶກສາ ຫຼືອົງການ AEA ຈະເປີດເຜີຍຂໍ້ມູນກຳນົດຕົວຕົນສ່ວນບຸກຄົນ ຕໍ່ກັບບັນດາອົງການທີ່ເຂົ້າຮ່ວມຜູ້ທີ່ສະໜອງ ຫຼື ຈ່າຍຄ່າບໍລິການໄລຍະຫັນປ່ຽນຕ່າງໆ.
3. ຖ້າລູກທ່ານໄດ້ລົງຊື່ເຂົ້າຮຽນ ຫຼື ຈະລົງຊື່ເຂົ້າຮຽນໃນໂຮງຮຽນທີ່ບໍ່ແມ່ນໂຮງຮຽນລັດຖະບານທີ່ຖືກຮັບຮອງຢ່າງເປັນທາງການ ເຊິ່ງຕັ້ງຢູ່ໃນເຂດ AEA ຫຼື ເຂດການສຶກສາເຂດອື່ນ, ການຍິນຍອມເຫັນດີຂອງທ່ານຈະຕ້ອງໄດ້ຮັບ ກ່ອນທີ່ຂໍ້ມູນກຳນົດຕົນຕົວສ່ວນບຸກຄົນກ່ຽວກັບລູກທ່ານຈະຖືກເປີດເຜີຍແລກປ່ຽນລະຫว่າງເຂດການສຶກສາ ແລະ/ຫຼື ອົງການ AEA ບ່ອນທີ່ທ່ານອາໃສຢູ່ ກັບເຂດການສຶກສາ ແລະ/ຫຼື ອົງການ AEA ບ່ອນທີ່ໂຮງຮຽນທີ່ບໍ່ແມ່ນໂຮງຮຽນລັດຖະບານດັ່ງກ່າວຕັ້ງຢູ່.

ຂໍ້ມູນອື່ນກ່ຽວກັບການຍິນຍອມເຫັນດີ

ການຍິນຍອມເຫັນດີຈາກທ່ານແມ່ນບໍ່ຈຳເປັນ ກ່ອນທີ່ທາງເຂດການສຶກສາ ຫຼື ອົງການ AEA ອາດຈະ:

1. ກວດເບິ່ງຂໍ້ມູນທີ່ມີຢູ່ໃນນາມເປັນສ່ວນໜຶ່ງຂອງການປະເມີນຜົນລູກຂອງທ່ານ ຫຼື ການປະເມີນຜົນຄືນ; ຫຼື
2. ເອົາໃຫ້ລູກທ່ານການທົດສອບ ຫຼືການປະເມີນຜົນອື່ນທີ່ຕ້ອງເອົາໃຫ້ແກ່ເດັກທຸກໆຄົນ ເວັ້ນເສຍແຕ່, ກ່ອນການທົດສອບ ຫຼື ການປະເມີນຜົນນັ້ນ, ການຍິນຍອມເຫັນດີແມ່ນຕ້ອງການຈາກພໍ່ແມ່ຂອງເດັກທຸກໆຄົນ.

ໝາຍເຫດ: ເຂດການສຶກສາອາດຈະບໍ່ໃຊ້ການປະຕິເສດຂອງທ່ານໃນການໃຫ້ການຍິນຍອມເຫັນດີຕໍ່ກັບການບໍລິການ ຫຼື ກິດຈະກຳໃດໜຶ່ງເພື່ອມາປະຕິເສດການບໍລິການ, ການຊ່ວຍເຫຼືອ ຫຼືກິດຈະກຳອື່ນຕໍ່ກັບຕົວທ່ານ ຫຼືລູກຂອງທ່ານ.

ໝາຍເຫດ: ຖ້າທ່ານໄດ້ລົງຊື່ໃຫ້ລູກທ່ານເຂົ້າຮຽນໃນໂຮງຮຽນເອກະຊົນໃດໜຶ່ງໂດຍເສຍຄ່າໃຊ້ຈ່າຍເອງ ຫຼື ຖ້າທ່ານຈ້າງຄົນມາສອນລູກຂອງທ່ານຢູ່ກັບເຮືອນ, ແລະ ທ່ານບໍ່ໃຫ້ການຍິນຍອມເຫັນດີສຳລັບການປະເມີນຜົນຂັ້ນຕົ້ນຂອງລູກທ່ານ ຫຼື ການປະເມີນຜົນ ຄືນຂອງລູກທ່ານ, ຫຼື ທ່ານບໍ່ສາມາດຕອບຄືນຕໍ່ກັບການຮຽກຮ້ອງໃຫ້ສະໜອງການຍິນຍອມເຫັນດີຂອງທ່ານ, ເຂດການສຶກສາອາດຈະບໍ່ນຳໃຊ້ຂັ້ນຕອນການລົບລ້າງການຍິນຍອມເຫັນດີຂອງຕົນ (ເຊັ່ນວ່າ, ການໄກ່ເກ່ຍແກ້ໄຂ, ການຮ້ອງຮຽນຕາມໝູ້ກ due process, ກອງປະຊຸມແກ້ໄຂຂໍ້ຂັດແຍ້ງ, ຫຼື ການໄຕ່ສວນຍຸຕິທຳຕາມໝູ້ກ due process) ແລະ ບໍ່ຈຳເປັນຕ້ອງພິຈາລະນາລູກຂອງທ່ານເປັນຜູ້ມີເງື່ອນໄຂໄດ້ຮັບການບໍລິການທີ່ເທົ່າທຽມກັນ (ການບໍລິການທີ່ມີໃຫ້ຕໍ່ກັບເດັກນ້ອຍພິການທີ່ພໍ່ແມ່ບັນຈຸໃຫ້ເຂົ້າຮຽນໃນໂຮງຮຽນເອກະຊົນ).

ການເຂົ້າຮ່ວມກອງປະຊຸມ

ບັນດາກອງປະຊຸມທີ່ລວມເອົາພໍ່ແມ່ນັກຮຽນ

ໃນຖານະເປັນພໍ່ຫຼືແມ່ຂອງເດັກພິການ, ທ່ານຕ້ອງໄດ້ຮັບໂອກາດໃນການເຂົ້າຮ່ວມບັນດາກອງປະຊຸມທີ່ກ່ຽວກັບ:

- ການລະບຸຕົນຕົວ, ການປະເມີນຜົນ, ແລະ ການບັນຈຸເຂົ້າຮຽນຂອງເດັກ; ແລະ
- ການສະໜອງການສຶກສາພາກລັດທີ່ເໝາະສົມໂດຍບໍ່ເສຍຄ່າ (FAPE) ໃຫ້ແກ່ເດັກ.

ແຈ້ງການກອງປະຊຸມ

ແຕ່ລະເຂດການສຶກສາ ແລະອົງການ AEA ຕ້ອງສະໜອງແຈ້ງການເພື່ອຮັບປະກັນໃຫ້ພໍ່ແມ່ຂອງເດັກພິການໄດ້ມີໂອກາດເຂົ້າຮ່ວມບັນດາກອງປະຊຸມຕ່າງໆ.

ແຈ້ງການຈະຖືກສົ່ງໃຫ້ທ່ານກ່ອນລ່ວງໜ້າໃນເວລາທີ່ພຽງພໍເພື່ອໃຫ້ທ່ານມີໂອກາດກຽມຕົວເຂົ້າຮ່ວມ ແລະ ຈະໃຫ້ຂໍ້ມູນຕໍ່ໄປນີ້:

- ຈຸດປະສົງ,
- ເວລາ, ແລະ
- ສະຖານທີ່ຂອງກອງປະຊຸມ, ແລະ
- ໃຜແດ່ຈະເຂົ້າຮ່ວມ (ຊື່ ແລະ ຕຳແໜ່ງ).

ກອງປະຊຸມຈະຖືກກຳນົດຈັດຂຶ້ນຕາມເວລາ ແລະ ສະຖານທີ່ທີ່ຕົກລົງເຫັນດີຮ່ວມກັນ.

ໝາຍເຫດ: ມີຂໍ້ກຳນົດເພີ່ມເຕີມກ່ຽວກັບແຈ້ງການສຳລັບກອງປະຊຸມສະເພາະກ່ຽວກັບ:

- ເດັກທີ່ປ່ຽນຜ່ານຈາກ Early ACCESS, ແລະ
- ເດັກຜູ້ທີ່ກຳລັງພິຈາລະນາເປົ້າໝາຍການສຶກສາຫຼັງຮຽນຈົບມັດທະຍົມ ແລະການບໍລິການໄລຍະປ່ຽນຜ່ານ.

ກອງປະຊຸມຫຍັງ?

ມັນແມ່ນ "ກອງປະຊຸມ" ທຸກຄັ້ງທີ່ພະນັກງານອົງການລັດຖະບານປຶກສາຫາລືກ່ຽວກັບລູກຂອງຂ້ອຍແມ່ນບໍ?

ບໍ່. ກອງປະຊຸມບໍ່ລວມເອົາ:

- ການປຶກສາສົນທະນາບໍ່ເປັນທາງການ ຫຼື ບໍ່ໄດ້ກຳນົດເວລາ ເຊິ່ງປະກອບມີພະນັກງານຂອງເຂດການສຶກສາ ແລະ ຂອງອົງການ AEA.
- ການສົນທະນາກ່ຽວກັບປະເດັນຕ່າງໆ ເຊັ່ນວ່າວິທີການສິດສອນ, ແຜນການສອນ, ຫຼືວຽກປະສານງານໃນການສະໜອງການບໍລິການ, ຖ້າປະເດັນເຫຼົ່ານັ້ນບໍ່ໄດ້ຖືກແກ້ໄຂໃນການສຶກສາ IEP ຂອງເດັກ.
- ບັນດາກິດຈະກຳແບບມີສ່ວນຮ່ວມທີ່ພະນັກງານເຂດການສຶກສາ ແລະ ຂອງອົງການ AEA ເຂົ້າຮ່ວມເພື່ອສ້າງການສະເໜີ ຫຼືການຕອບກັບຄືນຕໍ່ກັບການສະເໜີຂອງພໍ່ແມ່ເດັກໃດໜຶ່ງທີ່ຈະຖືກນຳມາປຶກສາຫາລືໃນກອງປະຊຸມໃນເວລາຕໍ່ມາ.

ການຕັດສິນເລື່ອງການບັນຈຸເຂົ້າຮຽນ

ແຕ່ລະເຂດການສຶກສາ ແລະອົງການ AEA ຕ້ອງຮັບປະກັນໃຫ້ທ່ານເປັນສະມາຊິກຂອງກຸ່ມທີ່ເຮັດການຕັດສິນໃຈກ່ຽວກັບການບັນຈຸເຂົ້າຮຽນຂອງລູກທ່ານ.

ບໍ່ສາມາດເຂົ້າຮ່ວມໄດ້

ຖ້າທ່ານບໍ່ສາມາດເຂົ້າຮ່ວມໃນກອງປະຊຸມໃດໜຶ່ງທີ່ຕ້ອງເຮັດການຕັດສິນໃຈກ່ຽວກັບການບັນຈຸເຂົ້າຮຽນຂອງລູກທ່ານ, ທາງເຂດການສຶກສາ ແລະອົງການ AEA ຕ້ອງໃຊ້ວິທີການອື່ນເພື່ອຮັບປະກັນການມີສ່ວນຮ່ວມຂອງທ່ານ.

ວິທີການເຫຼົ່ານອາດຈະລວມມີ:
- ການໂທລະສັບໄປຫາແບບສ່ວນຕົວ ຫຼື ການປະຊຸມຜ່ານທາງໂທລະສັບ, ຫຼື
- ການປະຊຸມທາງໄກຜ່ານພາບວີດີໂອ.

ການຕັດສິນທີ່ບໍ່ມີການມີສ່ວນຮ່ວມຂອງພໍ່ແມ່ນັກຮຽນ

ທາງກຸ່ມອາດຈະເຮັດການຕັດສິນໂດຍບໍ່ມີການເຂົ້າຮ່ວມຂອງທ່ານກໍໄດ້ ຖ້າເຂດການສຶກສາບໍ່ສາມາດໄດ້ຮັບການມີສ່ວນຮ່ວມຂອງທ່ານໃນການຕັດສິນດັ່ງກ່າວໄດ້.

ທາງໂຮງຮຽນຕ້ອງມີບັນທຶກສະແດງຄວາມພະຍາຍາມຂອງຕົນໃນການຮັບປະກັນການມີສ່ວນຮ່ວມຂອງທ່ານ.

ການປະເມີນຜົນການສຶກສາແບບອິດສະຫຼະ

ການປະເມີນຜົນການສຶກສາແບບອິດສະຫຼະ (IEE) ແມ່ນຫຍັງ

ການປະເມີນຜົນການສຶກສາ ແບບອິດສະຫຼະ (IEE) ແມ່ນການປະເມີນຜົນລູກຂອງທ່ານ ທີ່ດຳເນີນໂດຍຜູ້ປະເມີນທີ່ມີຄຸນສົມບັດຄົບຖ້ວນຜູ້ທີ່ບໍ່ແມ່ນພະນັກງານຂອງ ເຂດການສຶກສາ ຫຼືອົງການ AEA.

ອົງການ AEA ໄດ້ກຳນົດເກນເງື່ອນໄຂສຳລັບ ການປະເມີນ IEE ໃນນະ�โยบายຂອງຄະນະບໍລິຫານຂອງຕົນ.

ການຮ້ອງຂໍການປະເມີນຜົນ IEE

ທ່ານມີສິດໄດ້ຮັບການປະເມີນ IEE ແບບອິດສະຫຼະ ໃຫ້ແກ່ລູກທ່ານ ຖ້າທ່ານບໍ່ເຫັນດີນຳການປະເມີນຜົນຂອງລູກທ່ານທີ່ເຮັດໂດຍ ເຂດການສຶກສາ ແລະອົງການ AEA, ເຊິ່ງຂຶ້ນກັບການພິຈາລະນາໃນຫຼາຍໆດ້ານ.

- ພໍ່ແມ່ມີສິດຮຽກຮ້ອງໃຫ້ເຮັດການປະເມີນຜົນ IEE ຖ້າພໍ່ແມ່ບໍ່ເຫັນດີນຳການປະເມີນຜົນທີ່ທາງອົງການ AEA ໄດ້ຮັບ.
- ພໍ່ແມ່ມີສິດໄດ້ຮັບການປະເມີນຜົນ IEE ໂດຍລັດຖະບານເສຍຄ່າໃຊ້ຈ່າຍໃຫ້ພຽງຄັ້ງດຽວເທົ່ານັ້ນ ໃນ ແຕ່ລະຄັ້ງທີ່ອົງການ ພາກລັດດຳເນີນການປະເມີນຜົນທີ່ບໍ່ແມ່ບໍ່ເຫັນດີນຳ.
- ພໍ່ແມ່ບໍ່ມີສິດໄດ້ຮັບການປະເມີນຜົນ IEE ຈົນກວ່າວ່າການປະເມີນຜົນຂອງອົງການ AEA ຈະສຳເລັດ.

ການຕອບຄືນຂອງທາງໂຮງຮຽນຕໍ່ກັບການຮ້ອງຂໍເຮັດການປະເມີນຜົນ IEE

ຖ້າທ່ານຮ້ອງຂໍເອົາການປະເມີນຜົນ IEE ທາງໂຮງຮຽນ ຫຼືອົງການ AEA ອາດຈະເຮັດ 1 ຫຼືຫຼາຍຢ່າງຕໍ່ໄປນີ້:
- ທາງອົງການພາກລັດອາດຈະຖາມທ່ານວ່າ ເປັນຫຍັງທ່ານຈຶ່ງຄັດຄ້ານການປະເມີນຜົນຂອງພາກລັດ, ແຕ່ທ່ານບໍ່ຖືກ ກຳນົດຕ້ອງໃຫ້ຄຳອະທິບາຍນີ້.

ໝາຍເຫດ: ຄຳອະທິບາຍດັ່ງກ່າວຈະບໍ່ເຮັດໃຫ້ມີການຊັກຊ້າຢ່າງບໍ່ມີເຫດຜົນຕໍ່ກັບທັງການສະໜອງການປະເມີນ IEE ໂດຍ ທີ່ພາກລັດຈ່າຍຄ່າໃຊ້ຈ່າຍ ຫຼື ການໄຕ່ສວນຕັດສິນຕາມຫຼັກ due process ທີ່ລິເລີ່ມໂດຍທາງໂຮງຮຽນ ຫຼືອົງການ AEA.

- ອົງການພາກລັດອາດຈະເຫັນດີນຳທ່ານ ແລະ ໃຫ້ການປະເມີນ IEE ໂດຍພາກລັດອອກຄ່າໃຊ້ຈ່າຍໃຫ້.
- ອົງການພາກລັດອາດຈະຮ້ອງຂໍໃຫ້ມີການໄຕ່ສວນຕັດສິນໃດໜຶ່ງເພື່ອຊີ້ໃຫ້ເຫັນວ່າຍ້ອນຫຍັງການປະເມີນຜົນທີ່ເຮັດສຳ ເລັດໄປແລ້ວແມ່ນເໝາະສົມແລ້ວ.

ໝາຍເຫດ: ເຖິງແມ່ນວ່າການປະເມີນຜົນຈະຖືກຕັດສິນວ່າເໝາະສົມຖືກຕ້ອງແລ້ວ ຜ່ານຂະບວນໄຕ່ສວນຕັດສິນຂອງສານ, ແຕ່ທ່ານກໍ່ຍັງສາມາດໄດ້ຮັບການປະເມີນ IEE; ແຕ່ວ່າທາງເຂດການສຶກສາ ຫຼື AEA ຈະບໍ່ຖືກກຳນົດໃຫ້ຈ່າຍຄ່າປະເມີນ ດັ່ງກ່າວແທນທ່ານ.

ການປະເມີນຜົນ IEE ທີ່ພໍ່ແມ່ຮ້ອງຂໍ ໃຫ້ເຮັດ

ຖ້າການປະເມີນຜົນດັ່ງກ່າວຕອບສະໜອງໄດ້ເກນມາດຖານຂອງອົງການ AEA, ຂໍ້ມູນດັ່ງກ່າວຕ້ອງໄດ້ຮັບການພິຈາລະນາ ໃນການຕັດສິນຕ່າງໆທີ່ເຮັດກ່ຽວກັບການສະໜອງການສຶກສາ FAPE ໃຫ້ແກ່ລູກຂອງທ່ານ.

ໃນການໄຕ່ສວນຕາມຫຼັກ due process, ຝ່າຍໃດໜຶ່ງອາດຈະໃຊ້ຂໍ້ມູນດັ່ງກ່າວເປັນຫຼັກຖານອ້າງອີງກໍ່ໄດ້.

ການຈ່າຍຄ່າການ ປະເມີນຜົນ IEE

ເວັ້ນເສຍແຕ່ວ່າອົງການພາກລັດຮຽກຮ້ອງໃຫ້ມີການໄຕ່ສວນຕັດສິນຕາມຫຼັກ due process ກ່ຽວກັບວ່າອົງການຄວນຈະ ຈ່າຍຄ່າການປະເມີນ IEE ຫຼືບໍ່, ອົງການຈະຕ້ອງເປັນຜູ້ຈ່າຍຄ່າສົ້ນເປືອງທັງໝົດຂອງການປະເມີນ IEE ຫຼື ຮັບປະກັນ ວ່າການປະເມີນ IEE ດຳເນີນໄປໂດຍທີ່ທ່ານບໍ່ເສຍຄ່າໃຊ້ຈ່າຍໃດໆ.

ຖ້າຜູ້ພິພາກສາ ALJ ຮ້ອງຂໍໃຫ້ມີການປະເມີນ IEE, ການປະເມີນດັ່ງກ່າວແມ່ນພາກລັດເປັນຜູ້ຈ່າຍໃຫ້.

ສິ່ງອື່ນທີ່ຄວນຮູ້

- ຖ້າທ່ານກຳລັງຊອກຫາການປະເມີນ IEE ໂດຍຄ່າໃຊ້ຈ່າຍຈາກພາກລັດ, ອົງການ AEA ຈະໃຫ້ຂໍ້ມູນກ່ຽວກັບບ່ອນໃດທີ່ ການປະເມີນ IEE ສາມາດໄດ້ຮັບ ແລະ ກ່ຽວກັບເກນມາດຖານຂອງອົງການ.
- ອົງການ AEA ອາດຈະບໍ່ກຳນົດເງື່ອນໄຂ ຫຼື ໄລຍະເວລາ, ທີ່ນອກເໜືອຈາກທີ່ລະບຸໄວ້ໃນເກນມາດຖານຂອງອົງການໃນ ການໄດ້ຮັບການປະເມີນ IEE.
- ມາດຖານກຳນົດຂອງອົງການ AEA ຕ້ອງສອດຄ່ອງກັບສິດທິຂອງທ່ານຕໍ່ກັບການປະເມີນ IEE.
- ທ່ານມີສິດໄດ້ຮັບການປະເມີນ IEE ຂອງລູກທ່ານໂດຍພາກລັດຈ່າຍຄ່າໃຫ້ ພຽງແຕ່ໜຶ່ງເທື່ອເທົ່ານັ້ນ ໃນແຕ່ລະຄັ້ງ ທີ່ເຂດ ການສຶກສາ ຫຼືອົງການ AEA ດຳເນີນການປະເມີນຜົນລູກທ່ານ ເຊິ່ງທ່ານບໍ່ເຫັນດີນຳ.

ແຈ້ງການລ່ວງໜ້າ

ຈຸດປະສົງ

ການມີສ່ວນຮ່ວມຂອງທ່ານໃນການຕັດສິນສຳລັບການສຶກສາຂອງລູກທ່ານແມ່ນສຳຄັນຫຼາຍ, ສະນັ້ນ ກົດໝາຍໄດ້ກຳນົດ ໃຫ້ ຮັບປະກັນວ່າທ່ານຕ້ອງໄດ້ມີສ່ວນຮ່ວມໃນບັນດາກິດຈະກຳສະເພາະຕ່າງໆໃນຕະຫຼອດຂະບວນການດັ່ງກ່າວ. ບັນດາ ກິດຈະກຳ ສະເພາະ ແລະການຕັດສິນເຫຼົ່ານັ້ນ ມີຜົນກະທົບຕໍ່ກັບການບໍລິການດ້ານການສຶກສາພິເສດຂອງລູກທ່ານ.

"ແຈ້ງການລ່ວງໜ້າ" ແມ່ນການສື່ສານເປັນລາຍລັກອັກສອນທີ່ສົ່ງໃຫ້ທ່ານຈາກອົງການພາກລັດຖະບານ ເມື່ອອົງການພາກ ລັດດັ່ງກ່າວ:

- ກຳລັງສະເໜີເຮັດ ຫຼື ປະຕິເສດບໍ່ເຮັດ, ຫຼື
- ກຳລັງສະເໜີປ່ຽນແປງ ຫຼື ປະຕິເສດບໍ່ປ່ຽນແປງ:
  - ການລະບຸຕົວ,
  - ການປະເມີນຜົນ ຫຼື
  - ການບັນຈຸເຂົ້າຮຽນ ຫຼື,
  - ການສະໜອງການສຶກສາ FAPE ໃຫ້ແກ່ລູກຂອງທ່ານ.

ແຈ້ງການດັ່ງກ່າວຕ້ອງໄດ້ສົ່ງໃຫ້ທ່ານໃນເວລາທີ່ເໝາະສົມ ກ່ອນທີ່ເຂດການສຶກສາ ຫຼືອົງການ AEA ຈະດຳເນີນການນັ້ນ, ແຕ່ຕ້ອງພາຍຫຼັງຈາກທີ່ມີການຕັດສິນກ່ຽວກັບການສະເໜີ ຫຼື ການປະຕິເສດດັ່ງກ່າວ.

ຄຳນິຍາມ

ມັນແມ່ນໜັງສືສື່ສານເປັນລາຍລັກອັກສອນຈາກເຂດການສຶກສາ ຫຼືອົງການ AEA ທີ່ປະກອບມີມີຂໍ້ມູນກ່ຽວກັບຫຼາກຫຼາຍຫົວ ຂໍ້, ເຊິ່ງຂຶ້ນກັບເນື້ອໃນບັນຫາທີ່ຕ້ອງການແຈ້ງບອກ.

ທ່ານອາດຈະໄດ້ຮັບແຈ້ງການລ່ວງໜ້າກ່ຽວກັບທຸກໆເລື່ອງທີ່ຖືກສະເໜີໃຫ້ ຫຼື ປະຕິເສດສຳລັບລູກຂອງທ່ານ ທີ່ພົວພັນກັບ ການບໍລິການດ້ານການສຶກສາພິເສດ.

ແຈ້ງການເປັນລາຍລັກອັກສອນລ່ວງໜ້າຕ້ອງຖືກສະໜອງໃຫ້ສຳລັບ:

- ການເລີ່ມຕົ້ນໃຫ້ການບໍລິການໃດໜຶ່ງ.
- ການປ່ຽນແປງການບໍລິການດ້ານການສຶກສາພິເສດ.
- ບັນຫາທີ່ກ່ຽວຂ້ອງກັບການລະບຸກຳນົດການບໍລິການດ້ານການສຶກສາພິເສດ.
- ການບັນຈຸເຂົ້າຮຽນຂອງລູກທ່ານ, ຖ້າມີການປ່ຽນແປງ.
- ການປະເມີນຜົນທີ່ຈຳເປັນຕ້ອງດຳເນີນ.
- ທຸກໆ ເລື່ອງທີ່ພົວພັນກັບການສະໜອງການສຶກສາ FAPE ຖ້າການສົງໃສຂ້ອງໃຈຂອງທີມ IEP ນຳໄປສູ່ການສະຫຼຸບວ່າມີ ການປ່ຽນແປງອັນໃຫຍ່ຫຼວງ ຫຼືສຳຄັນໄດ້ເກີດຂຶ້ນ.

ຂໍ້ມູນໃນແຈ້ງການ

ແຈ້ງການຕ້ອງປະກອບມີ:

1. ລາຍລະອຽດຂອງການດຳເນີນການທີ່ຖືກສະເໜີ ຫຼື ປະຕິເສດ.
2. ຄຳອະທິບາຍຍ້ອນຫຍັງການດຳເນີນການດັ່ງກ່າວຈຶ່ງຖືກສະເໜີ ຫຼືຖືກປະຕິເສດ.
3. ລາຍລະອຽດຂອງແຕ່ລະຂັ້ນຕອນການປະເມີນຜົນ, ການຕີລາຄາ, ການບັນທຶກ ຫຼືການລາຍງານທີ່ອົງການໄດ້ນຳໃຊ້ເປັນພື້ນຖານສຳລັບການດຳເນີນການທີ່ຖືກສະເໜີ ຫຼືຖືກປະຕິເສດ.
4. ຄຳຖະແຫຼງທີ່ກ່າວວ່າທ່ານ ແລະ/ຫຼືລູກຂອງທ່ານມີການປົກປ້ອງພາຍໃຕ້ລະບຽບການປົກປ້ອງຄຸ້ມຄອງໃນກົດໝາຍ. ຖ້າໜັງສືແຈ້ງການນີ້ບໍ່ແມ່ນການອ້າງອີງເບື້ອງຕົ້ນສຳລັບການປະເມີນຜົນ ທ່ານກໍຈະໄດ້ຮັບແຈ້ງກ່ຽວກັບວິທີທີ່ທ່ານອາດຈະໄດ້ຮັບສຳເນົາເອກະສານລະບຽບການປົກປ້ອງຄຸ້ມຄອງ.
5. ແຫຼ່ງທີ່ຢູ່ສຳລັບພໍ່ແມ່ເພື່ອຕິດຕໍ່ຂໍເອົາການຊ່ວຍເຫຼືອ ໃນການທຳຄວາມເຂົ້າໃຈກົດໝາຍໝວດຕ່າງໆທີ່ກວມຢູ່ໃນປຶ້ມຄູ່ມືລະບຽບການປົກປ້ອງຄຸ້ມຄອງນີ້.
6. ລາຍລະອຽດຂອງທາງເລືອກອື່ນທີ່ທີມ IEP ໄດ້ພິຈາລະນາ ແລະ ເຫດຜົນຍ້ອນຫຍັງທາງເລືອກເຫຼົ່ານັ້ນຈຶ່ງຖືກປະຕິເສດ.
7. ລາຍລະອຽດຂອງປັດໃຈອື່ນໆທີ່ກ່ຽວຂ້ອງກັບການຕັດສິນຂອງອົງການໃນການສະເໜີ ຫຼື ປະຕິເສດການດຳເນີນການ.
8. ແຈ້ງການຮຽກຮ້ອງໃຫ້ພໍ່ແມ່ນໄດ້ຮັບການແຈ້ງບອກว่าพวกเขาสามารถได้รับสำเนาของปึ้มคู่มือระบบการปกป้องคุ้มครองอยู่ใส.

ແຈ້ງການເປັນແບບໃດ

ແຈ້ງການລ່ວງໜ້າເປັນລາຍລັກອັກສອນຈະເປັນແບບฟอม ຫຼືจ็ดหมายเป็นลายลักอักสอน.

ແຈ້ງການຕ້ອງຂຽນເປັນພາສາທີ່ມວນຊົນທົ່ວໄປສາມາດເຂົ້າໃຈໄດ້; ແລະ ຖືກສະໜອງເປັນພາສາກຳເນີດຂອງທ່ານ ຫຼື ຮູບແບບການສື່ສານອື່ນທີ່ທ່ານນຳໃຊ້, ເວັ້ນເສຍແຕ່ໃນກໍລະນີທີ່ເຫັນໄດ້ຈະແຈ້ງວ່າພໍ່ສາມາດເຮັດແບບດັ່ງກ່າວໄດ້.

ຖ້າພາສາກຳເນີດ ຫຼື ຮູບແບບການສື່ສານອື່ນຂອງທ່ານບໍ່ແມ່ນພາສາຂຽນ, ອົງການພາກລັດຂອງທ່ານຕ້ອງຮັບປະກັນว่า:

1. ແຈ້ງການຕ້ອງໄດ້ແປໃຫ້ທ່ານເປັນຄຳເວົ້າປາກເປົ່າ ໂດຍວິທີການອື່ນໃນພາສາກຳເນີດ ຫຼື ຮູບແບບການສື່ສານອື່ນຂອງທ່ານ;
2. ທ່ານເຂົ້າໃຈເນື້ອໃນຂອງແຈ້ງການ; ແລະ
3. ຕ້ອງມີຫຼັກຖານເປັນລາຍລັກອັກສອນว่าข้อ 1 ແລະ 2 ໄດ້ຖືກປະຕິບັດແລ້ວ.

ຖ້າອົງການພາກລັດສະເໜີທາງເລືອກໃຫ້ພໍ່ແມ່ໃນການໄດ້ຮັບເອກະສານຕ່າງໆຜ່ານທາງອີເມວ, ທ່ານສາມາດເລືອກທີ່ຈະໄດ້ຮັບແຈ້ງການລ່ວງໜ້າເປັນລາຍລັກອັກສອນຜ່ານທາງອີເມວ.

ໝາຍເຫດ:

ທາງເລືອກໃນການແກ້ໄຂຂໍ້ຂັດແຍ້ງ

ພາກສະເໜີ

ມີຫຼາຍໆທາງເລືອກ ຖ້າທ່ານມີການບໍ່ເຫັນດີນຳທາງເຂດການສຶກສາ, ອົງການ AEA ຫຼື ອົງການພາກລັດອື່ນ ທີ່ກ່ຽວຂ້ອງກັບການສຶກສາຂອງລູກທ່ານ.

ກົດໝາຍ IDEA ກຳນົດລະບຽບຂັ້ນຕອນສຳລັບ:
- ການຮ້ອງຮຽນຂັ້ນລັດ;
- ການຮ້ອງຮຽນຕາມຫຼັກ Due Process;
- ການໄຕ່ສວນຕາມຫຼັກ Due Process.

ການຮ້ອງຮຽນຂັ້ນລັດ

ບຸກຄົນ ຫຼື ອົງການຈັດຕັ້ງ ອາດຈະຍື່ນການຮ້ອງຮຽນຂັ້ນລັດທີ່ກ່າວຫາການລະເມີດຂໍ້ກຳນົດພາກ B ໃດໜຶ່ງໂດຍທາງເຂດການສຶກສາ (LEA), ອົງການການສຶກສາປະຈຳເຂດ (AEA), ອົງການການສຶກສາປະຈຳລັດ (SEA), ຫຼື ໜ່ວຍງານລັດຖະບານອື່ນ.

ພະນັກງານອົງການ SEA ຕ້ອງແກ້ໄຂການຮ້ອງຮຽນຂັ້ນລັດພາຍໃນ 60 ວັນຕາມເວລາປະຕິທິນ, ເວັ້ນເສຍແຕ່ວ່າ ມີການຂະຫຍາຍກຳນົດເວລາດັ່ງກ່າວ.

ການຮ້ອງຮຽນຕາມຫຼັກ Due Process

ພຽງແຕ່ທ່ານ ຫຼືເຂດການສຶກສາເທົ່ານັ້ນສາມາດຍື່ນການຮ້ອງຮຽນຕາມຫຼັກ due process ກ່ຽວກັບປະເດັນບັນຫາທີ່ກ່ຽວຂ້ອງກັບການສະເໜີ ຫຼືການປະຕິເສດທີ່ຈະເລີ່ມດຳເນີນ ຫຼືປ່ຽນແປງ:
- ການລະບຸຕົວເດັກພິການ;
- ການປະເມີນຜົນເດັກພິການ;
- ການບັນຈຸເຂົ້າຮຽນຂອງເດັກພິການ, ຫຼື
- ການສະໜອງການສຶກສາພາກລັດທີ່ເໝາະສົມໂດຍບໍ່ເສຍຄ່າ (FAPE) ໃຫ້ແກ່ເດັກ.

ຜູ້ພິພາກສາກົດໝາຍການບຶກຄອງຕ້ອງຮັບພິຈາລະນາການຮ້ອງຮຽນຕາມຫຼັກ due process ແລະ ອອກຄຳຕັດສິນເປັນລາຍລັກອັກສອນພາຍໃນ 45 ວັນຕາມເວລາປະຕິທິນ ເວັ້ນເສຍແຕ່ວ່າຜູ້ພິພາກສາ ALJ ອະນຸຍາດໃຫ້ຂະຫຍາຍກຳນົດເວລາດັ່ງກ່າວອອກໄປຕາມການຮ້ອງຂໍຂອງທ່ານ ຫຼືການຮ້ອງຂໍຂອງທາງເຂດການສຶກສາ.

ການໄຕ່ສວນຕາມຫຼັກ Due Process

ໃນທຸກຄັ້ງທີ່ມີການຍື່ນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process, ທ່ານ, ອົງການ AEA, ຫຼືເຂດການສຶກສາທີ່ກ່ຽວຂ້ອງໃນການຂັດແຍ້ງ ຕ້ອງມີໂອກາດໄດ້ຮັບການໄຕ່ສວນຍຸຕິທຳຕາມຫຼັກ due process.

ພະແນກການສຶກສາລັດໄອໂອວາຕ້ອງຮັບປະກັນວ່າ ຍ່າງຊ້າບໍ່ເກີນ 45 ວັນຫຼັງຈາກສິ້ນສຸດໄລຍະ 30 ວັນຕາມເວລາປະຕິທິນສຳລັບການປະຊຸມແກ້ໄຂຂໍ້ຂັດແຍ້ງ:
1. ບັນລຸໄດ້ຄຳຕັດສິນສຸດທ້າຍໃນການໄຕ່ສວນ; ແລະ
2. ສົ່ງສຳເນົາຄຳຕັດສິນທາງໄປສະນີໃຫ້ແຕ່ລະຝ່າຍ.

ຜູ້ພິພາກສາ ALJ ອາດຈະໃຫ້ການຂະຫຍາຍເວລາອອກໄປເກີນກວ່າ 45 ວັນຕາມເວລາປະຕິທິນຕາມການຮ້ອງຂໍຂອງຝ່າຍໃດໜຶ່ງ.

ໝາຍເຫດ: ໄລຍະເວລາ 30 ວັນຕາມເວລາປະຕິທິນແມ່ນເລີ່ມນັບເມື່ອທາງເຂດການສຶກສາ, ອົງການ AEA, ຝ່າຍອື່ນໆ, ແລະພະແນກການສຶກສາລັດໄອໂອວາທັງໝົດໄດ້ຮັບຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process.

ໝາຍເຫດ:

ລະບຽບຂັ້ນຕອນການຮ້ອງຮຽນຂັ້ນລັດ

ລະບຽບຂັ້ນຕອນ

ພະແນກສຶກສາລັດໄອໂອວາມີລະບຽບຂັ້ນຕອນເປັນລາຍລັກອັກສອນສຳລັບ:

1. ການແກ້ໄຂທຸກໆການຮ້ອງຮຽນ, ລວມທັງການຮ້ອງຮຽນທີ່ຍື່ນໂດຍອົງການຈັດຕັ້ງ ຫຼືບຸກຄົນໃດໜຶ່ງທີ່ມາຈາກລັດອື່ນ, ໂດຍການຍື່ນການຮ້ອງຮຽນຂັ້ນລັດນຳພະແນກສຶກສາລັດໄອໂອວາ.
2. ການເຜີຍແຜ່ຢ່າງກວ້າງຂວາງລະບຽບຂັ້ນຕອນຂອງລັດໃຫ້ກັບພໍ່ແມ່ເດັກ ແລະ ບຸກຄົນອື່ນທີ່ສົນໃຈ, ລວມທັງສູນຝຶກອົບຮົມ ແລະບໍລິການຂໍ້ມູນສຳລັບພໍ່ແມ່ເດັກ, ອົງການປົກປ້ອງ ແລະສົ່ງເສີມເດັກ, ສູນສົ່ງເສີມການດຳລົງຊີວິດແບບເພິ່ງຕົນເອງ, ແລະ ໜ່ວຍງານທີ່ເໝາະສົມອື່ນໆ.

ໃນການແກ້ໄຂການຮ້ອງຮຽນໃດໜຶ່ງ ເຊິ່ງພະແນກສຶກສາລັດໄອໂອວາໄດ້ພົບກັບຄວາມລົ້ມເຫຼວໃນການໃຫ້ການບໍລິການທີ່ເໝາະສົມ, ພະແນກສຶກສາຕ້ອງໄດ້ແກ້ໄຂ:

1. ຄວາມລົ້ມເຫຼວໃນການສະໜອງການບໍລິການທີ່ເໝາະສົມ, ລວມທັງການດຳເນີນການດັດແກ້ຢ່າງເໝາະສົມເພື່ອແກ້ໄຂຄວາມຕ້ອງການຂອງເດັກ; ແລະ
2. ການສະໜອງການບໍລິການໃນອະນາຄົດທີ່ເໝາະສົມສຳລັບເດັກນ້ອຍພິການ.

ກຳນົດເວລາຂອງການຮ້ອງຮຽນຂັ້ນລັດ

ພະແນກສຶກສາລັດໄອໂອວາລວມເອົາຢູ່ໃນຂັ້ນຕອນການຮ້ອງຮຽນຂອງຕົນ ກຳນົດເວລາ 60 ວັນຕາມເວລາປະຕິທິນຫຼັງຈາກມີການຍື່ນການຮ້ອງຮຽນຂັ້ນລັດ ເພື່ອ:

- ດຳເນີນການສືບສວນອິດສະຫຼະຢູ່ກັບສະຖານທີ່, ຖ້າພະແນກສຶກສາລັດໄອໂອວາເຫັນວ່າການສືບສວນແມ່ນມີຄວາມຈຳເປັນ;
- ໃຫ້ໂອກາດແກ່ຜູ້ຮ້ອງຮຽນ ເພື່ອສົ່ງຂໍ້ມູນເພີ່ມເຕີມ, ທັງຂໍ້ມູນທີ່ເປັນຄຳເວົ້າ ຫຼື ເປັນລາຍລັກອັກສອນ, ກ່ຽວກັບຂໍ້ກ່າວຫາໃນການຮ້ອງຮຽນດັ່ງກ່າວ;
- ສະໜອງໃຫ້ເຂດການສຶກສາ ຫຼືອົງການ AEA ໂອກາດໃນການຕອບຄືນຕໍ່ກັບການຮ້ອງຮຽນດັ່ງກ່າວ, ເຊິ່ງຢ່າງນ້ອຍຈະປະກອບມີ:
  - ຕາມເສລີພາບໃນການຕັດສິນໃຈຂອງ ເຂດການສຶກສາ ຫຼືອົງການ AEA, ການສະເໜີແກ້ໄຂການຮ້ອງຮຽນຂັ້ນລັດ; ແລະ
  - ໂດຍການຍິນຍອມເຫັນດີຂອງພໍ່ແມ່ (ຫຼືບຸກຄົນ ຫຼືອົງການຈັດຕັ້ງທີ່ຍື່ນການຮ້ອງຮຽນຂັ້ນລັດ), ໂອກາດສຳລັບເຂດການສຶກສາ ຫຼືອົງການ AEA ເພື່ອປະສານເອົາພໍ່ແມ່ ຫຼືບຸກຄົນ ຫຼືອົງການຈັດຕັ້ງນັ້ນເຂົ້າຮ່ວມໃນການໄກ່ເກ່ຍວິທີເລືອກອື່ນໃນການແກ້ໄຂຂໍ້ຂັດແຍ້ງ.
- ທົບທວນຄືນທຸກໆຂໍ້ມູນທີ່ກ່ຽວຂ້ອງ ແລະ ອອກການກຳນົດຕັດສິນແບບອິດສະຫຼະກ່ຽວກັບເລື່ອງທີ່ວ່າເຂດການສຶກສາ ຫຼືອົງການ AEA ກຳລັງລະເມີດຂໍ້ກຳນົດຂອງກົດໝາຍ IDEA ຫຼືບໍ່.
- ອອກການຕັດສິນເປັນລາຍລັກອັກສອນແກ່ຜູ້ຮ້ອງຮຽນທີ່ໃຫ້ການແກ້ໄຂແຕ່ລະຂໍ້ກ່າວຫາໃນຄຳຮ້ອງຮຽນ ແລະ ປະກອບມີ:
  - ຂໍ້ເທັດຈິງທີ່ຄົ້ນພົບ ແລະຂໍ້ສະຫຼຸບ ແລະ
  - ເຫດຜົນອ້າງອີງສຳລັບການຕັດສິນສຸດທ້າຍຂອງພະແນກສຶກສາ.

ການຂະຫຍາຍກຳນົດເວລາສຳລັບການຮ້ອງຮຽນຂັ້ນລັດ

ລະບຽບຂັ້ນຕອນຂອງພະແນກສຶກສາຍັງ:

- ອະນຸຍາດໃຫ້ຂະຫຍາຍກຳນົດເວລາ ພຽງແຕ່ຖ້າວ່າ:
  - ມີສະພາບການພິເສດເກີດຂຶ້ນກ່ຽວກັບເລື່ອງການຮ້ອງຮຽນສະເພາະໃດໜຶ່ງ; ຫຼື
  - ພໍ່ແມ່ເດັກ ແລະ ເຂດການສຶກສາ ຫຼືອົງການ AEA ຕົກລົງເຫັນດີໃຫ້ຂະຫຍາຍເວລາໃນການດຳເນີນການໄກ່ເກ່ຍ ຫຼື ກົດຈະກຳການແກ້ໄຂຂໍ້ຂັດແຍ້ງອອກໄປ.
- ປະກອບມີລະບຽບການສຳລັບການຈັດຕັ້ງປະຕິບັດການຕັດສິນສຸດທ້າຍຂອງພະແນກສຶກສາລັດໄອໂອວາ ຢ່າງມີຜົນສຳເລັດ, ຖ້າຈຳເປັນ, ເຊິ່ງລວມມີ:
  - ກົດຈະກຳຊ່ວຍເຫຼືອດ້ານວິຊາການ;
  - ການເຈລະຈາຕໍ່ລອງ; ແລະ
  - ການດຳເນີນການແກ້ໄຂ ເພື່ອໃຫ້ບັນລຸໄດ້ການປະຕິບັດຕາມ.

ຖ້າໄດ້ຮັບການຮ້ອງຮຽນເປັນລາຍລັກອັກສອນທີ່ຍັງ ແມ່ນ ເລື່ອງຂອງການໄຕ່ສວນຕາມຫຼັກdue process, ທາງລັດຕ້ອງຍັງບໍ່ຕັດສິນການຮ້ອງຮຽນຂັ້ນລັດນັ້ນ ເທື່ອຈົນກວ່າວ່າມີຂໍ້ສະຫຼຸບຕັດສິນຈາກການໄຕ່ສວນນັ້ນ ຖ້າປະເດັນບັນທີ່ຖືກຍົກໃນການຮ້ອງຮຽນຂັ້ນລັດແມ່ນ ເຄີຍ ຖືກຕັດສິນມາ ແລ້ວ ໃນການ ໄຕ່ສວນ ຕັດ ສິ ນ ຕາ ມ ຫຼັ ກdue process ທີ່ ປະ ກອ ບ ມີ ພາ ກ ສ່ວ ນ ດຽ ວ ກັ ບ ເຂົ້ າ ຮ່ ວ ມ:

- ການ ຕັ ດ ສິ ນ ຂ ອ ງ ການ ໄ ຕ່ ສ ວ ນ ຕ າ ມ ຫ ຼັ ກ due process ແ ມ່ ນ ມ ີ ຜ ົ ນ ຜ ູ ກ ມ ັ ດ ຕ່ ກ ັ ບ ປ ະ ເ ດ ັ ນ ນ ັ ້ ນ; ແ ລ ະ
- ອົ ງ ການ SEA ຕ້ ອ ງ ແ ຈ້ ງ ບ ອ ກ ຜ ູ ້ ຍ ື ່ ນ ການ ຮ ້ ອ ງ ຮ ຽ ນ ຂ ັ ້ ນ ລ ັ ດ ໃ ຫ ້ ຮ ັ ບ ຊ າ ບ ກ ່ ຽ ວ ກ ັ ບ ຜ ົ ນ ຜ ູ ກ ມ ັ ດ ນ ັ ້ ນ

ການຍື່ນການຮ້ອງ ຮຽນຂັ້ນລັດ

ອົງການຈັດຕັ້ງ ຫຼື ບຸກຄົນໃດໜຶ່ງ ສາມາດຍື່ນຄຳຮ້ອງຮຽນເປັນລາຍລັກອັກສອນທີ່ລົງລາຍເຊັນ.

ຄຳຮ້ອງຮຽນຕ້ອງປະກອບມີ:

1.ຄຳຖະແຫຼງທີ່ລະບຸວ່າວ່າເຂດການສຶກສາ ຫຼືອົງການ AEA ໄດ້ລະເມີດຂໍ້ກຳນົດຂອງພາກ B ຂອງກົດໝາຍ IDEA 2004;
- ຂໍ້ເທັດຈິງເຊິ່ງເປັນພື້ນຖານອ້າງອີງໃຫ້ແກ່ຄຳຖະແຫຼງ;
- ລາຍເຊັນ ແລະຂໍ້ມູນຕິດຕໍ່ສຳລັບຜູ້ຮ້ອງຮຽນ ແລະ
- ຖ້າແມ່ນການກ່າວຫາການລະເມີດກ່ຽວກັບເດັກສະເພາະໃດໜຶ່ງ:
  - ຊື່ ແລະທີ່ຢູ່ອາໄສຂອງເດັກ;
  - ຊື່ຂອງໂຮງຮຽນທີ່ເດັກກຳລັງຮຽນຢູ່;
  - ໃນກະລະນີຂອງເດັກ ຫຼືໄວໜຸ່ມທີ່ຂາດທີ່ຢູ່ອາໃສ (ຕາມຄວາມໝາຍຂອງຂໍ້ § 725(2) ຂອງກົດໝາຍ ວ່າດ້ວຍການຊ່ວຍເຫຼືອຜູ້ຂາດທີ່ຢູ່ອາໃສ McKinney-Vento (42 U.S.C. § 11434a(2)), ຂໍ້ມູນຕິດຕໍ່ທີ່ຫາໄດ້ສຳລັບເດັກ, ແລະ ຊື່ຂອງໂຮງຮຽນທີ່ເດັກທີ່ເດັກກຳລັງຮຽນຢູ່;
  - ລາຍລະອຽດທາດແທ້ບັນຫາຂອງເດັກ, ເຊິ່ງລວມທັງຂໍ້ເທັດຈິງທີ່ກ່ຽວຂ້ອງກັບບັນຫາດັ່ງກ່າວ; ແລະ
  - ການສະເໜີແກ້ໄຂບັນຫາໃນຂອບເຂດທີ່ຮູ້ໄດ້ ແລະ ມີຢູ່ ຕໍ່ກັບຜູ້ຮ້ອງຮຽນ ໃນເວລາທີ່ຍື່ນຄຳຮ້ອງຮຽນ.

2.ຄຳຮ້ອງຮຽນຂັ້ນລັດຕ້ອງເປັນການກ່າວຫາການລະເມີດທີ່ໄດ້ເກີດຂຶ້ນບໍ່ກາຍໜຶ່ງປີ ກ່ອນວັນທີທີ່ຄຳຮ້ອງຮຽນໄດ້ຮັບ.

3.ຝ່າຍທີ່ຍື່ນຄຳຮ້ອງຮຽນຂັ້ນລັດຕ້ອງໄດ້ສົ່ງສຳເນົາຄຳຮ້ອງຮຽນໃຫ້ແກ່ເຂດການສຶກສາ ແລະອົງການ AEA ທີ່ໃຫ້ບໍລິການແກ່ເດັກ ໃນເວລາດຽວກັນກັບທີ່ຍື່ນຄຳຮ້ອງຮຽນຫາພະແນກສຶກສາລັດໄອໂອ.

ແບບຟອມຕົວຢ່າງໃນການຍື່ນຄຳຮ້ອງຮຽນຂັ້ນລັດສາມາດເບິ່ງໄດ້ໃນໜ້າ40.

ການຮ້ອງຮຽນຕາມຫຼັກ Due Process (ຍັງເອີ້ນວ່າ**ຄຳຮ້ອງຂໍການໄຕ່ສວນຕາມຫຼັກ**Due Process)

ຍື່ນການຮ້ອງຮຽນ ຕາມຫຼັກ Due Process ເມື່ອໃດ

ທ່ານອາດຈະຍື່ນການຮ້ອງຮຽນຕາມຫຼັກ due process ເຊິ່ງຍັງເອີ້ນວ່າ ຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process, ເຊິ່ງກ່ຽວຂ້ອງກັບລູກຂອງທ່ານ ແລະກ່ຽວກັບການສະເໜີ ຫຼືການປະຕິເສດເພື່ອເລີ່ມດຳເນີນ ຫຼືປ່ຽນແປງ:
- ການລະບຸກຳນົດ;
- ການປະເມີນຜົນ;
- ການບັນຈຸເຂົ້າຮຽນຂອງລູກທີ່ພິການຂອງທ່ານ; ຫຼື
- ການສະໜອງການສຶກສາ FAPE ໃຫ້ແກ່ລູກຂອງທ່ານ.

ກຳນົດເວລາການ ຍື່ນ

ຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ຕ້ອງໄດ້ກ່າວຫາການລະເມີດທີ່ໄດ້ເກີດຂຶ້ນບໍ່ກາຍສອງປີ ກ່ອນທີ່ທ່ານ ຫຼືເຂດການສຶກສາຮັບຮູ້ ຫຼື ຄວນຈະໄດ້ຮັບຮູ້ກ່ຽວກັບການກຳທຳທີ່ຖືກກ່າວຫາ ທີ່ກາຍເປັນພື້ນຖານໃຫ້ແກ່ການຮ້ອງຂໍການໄຕ່ສວນຕາມຫຼັກ due process.

ຂໍ້ຍົກເວັ້ນຕໍ່ກັບກຳ ນົດເວລາ

ຂອບເຂດດ້ານກຳນົດເວລາຈະບໍ່ຖືກນຳໃຊ້ ຖ້າທ່ານຖືກຂັດຂວາງຈາກການຮ້ອງຂໍໃຫ້ມີການໄຕ່ສວນສຳລັບເຫດຜົນຕໍ່ໄປນີ້:
- ທາງເຂດການສຶກສາ ຫຼືອົງການ AEA ໃຫ້ຂໍ້ມູນຜິດຫຼືບໍ່ຄົບຖ້ວນທີ່ມັນໄດ້ການແກ້ໄຂປະເດັນບັນຫາທີ່ຖືກກຳນົດໃນຄຳ ຮ້ອງຂໍການໄຕ່ສວນ; ຫຼື
- ເຂດການສຶກສາ ຫຼືອົງການ AEA ບໍ່ຍອມໃຫ້ຂໍ້ມູນແກ່ທ່ານເຊິ່ງເປັນຂໍ້ມູນທີ່ຈຳເປັນຕ້ອງສະໜອງໃຫ້ທ່ານ່ຕາມການກຳ ນົດຂອງກົດໝາຍ IDEA.

ການໄດ້ຮັບການຊ່ວຍເຫຼືອດ້ານກົດໝາຍ

ພະແນກສຶກສາລັດໄອໂອວາ ຕ້ອງໄດ້ແຈ້ງໃຫ້ທ່ານຊາບບັນດາການບໍລິການດ້ານກົດໝາຍ ຫຼືບໍລິການອື່ນທີ່ກ່ຽວຂ້ອງທີ່ບໍ່ເສຍຄ່າ ຫຼື ເສຍຄ່າຕ່ຳທີ່ມີໃຫ້ຢູ່ພາຍໃນເຂດທ້ອງຖິ່ນດັ່ງກ່າວ ຖ້າ:

- ທ່ານຮ້ອງຂໍເອົາຂໍ້ມູນດັ່ງກ່າວ; ຫຼື
- ທ່ານ ຫຼືອົງການດັ່ງກ່າວຮ້ອງຂໍໃຫ້ມີການໄຕ່ສວນຕາມຫຼັກ due process.

ຂໍ້ກຳນົດຂອງການຮ້ອງຂໍເອົາການໄຕ່ສວນຕາມຫຼັກ Due Process

ຄຳຮ້ອງຂໍເອົາການໄຕ່ສວນຕາມຫຼັກ due process ຕ້ອງປະກອບມີ:

- ຊື່ຂອງລູກທ່ານ.
- ທີ່ຢູ່ອາໄສຂອງລູກທ່ານ.
- ຊື່ຂອງໂຮງຮຽນ ແລະອົງການ AEA ຂອງລູກທ່ານ.
- ລາຍລະອຽດເນື້ອໃນບັນຫາຂອງເດັກກ່ຽວຂ້ອງກັບການກະທຳທີ່ຖືກສະເໜີ ຫຼື ປະຕິເສດ, ລວມທັງຂໍ້ເທັດຈິງທີ່ກ່ຽວຂ້ອງກັບບັນຫາ.
- ການສະເໜີແກ້ໄຂບັນຫາໃນຂອບເຂດທີ່ຕົວທ່ານ ຫຼື ເຂດການສຶກສາ ຫຼືອົງການ AEA ຮູ້ໄດ້ ຫຼື ມີຢູ່ໃນເວລານັ້ນ.

ທ່ານຈະບໍ່ມີການໄຕ່ສວນຕາມຫຼັກ due process ຈົນກວ່າວ່າທ່ານ ຫຼືທະນາຍຄວາມຂອງທ່ານຍື່ນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ທີ່ຕອບສະໜອງໄດ້ທຸກຂໍ້ກຳນົດ.

ແບບຟອມຕົວຢ່າງໃນການຍື່ນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process hearing ແມ່ນມີຢູ່ໜ້າ 42.

ໝາຍເຫດ: ໃນກໍລະນີຂອງເດັກຫຼືໄວໜຸ່ມທີ່ບໍ່ມີທີ່ຢູ່ອາໃສ (ຕາມຄວາມໝາຍຂອງໝວດທີ 725(2) ຂອງກົດໝາຍວ່າດ້ວຍການຊ່ວຍເຫຼືອຜູ້ຂາດທີ່ຢູ່ອາໄສ McKinney-Vento (42 U.S.C. 11434a(2)), ຂໍ້ມູນຕິດຕໍ່ຂອງເດັກ, ແລະ ຊື່ໂຮງຮຽນຂອງເດັກ.

ການຕັດສິນກຳນົດວ່າຄຳຮ້ອງຂໍການໄຕ່ສວນຕອບສະໜອງໄດ້ທຸກຂໍ້ກຳນົດຫຼືບໍ່

ຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ຕ້ອງໄດ້ຖືວ່າຄົບຖ້ວນສົມບູນ ຖ້າວ່າທາງຝ່າຍທີ່ຮັບຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ບໍ່ໄດ້ແຈ້ງໃຫ້ຜູ້ພິພາກສາ ALJ ແລະ ທຸກໆຝ່າຍເປັນລາຍລັກອັກສອນ ພາຍໃນ 15 ວັນຕາມເວລາປະຕິທິນ ນັບຈາກໄດ້ຮັບຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ວ່າຄຳຮ້ອງດັ່ງກ່າວບໍ່ຕອບສະໜອງໄດ້ຕາມຂໍ້ກຳນົດທີ່ວາງໄວ້.

ພາຍໃນຫ້າວັນຕາມເວລາປະຕິທິນຫຼັງຈາກໄດ້ຮັບການແຈ້ງບອກ, ຜູ້ພິພາກສາ ALJ ຕ້ອງເຮັດການຕັດສິນກຳນົດວ່າຄຳຮ້ອງຂໍການໄຕ່ສວນຕອບສະໜອງໄດ້ຂໍ້ກຳນົດທີ່ວາງໄວ້ຫຼືບໍ່, ແລະແຈ້ງບອກຝ່າຍຕ່າງໆ ເປັນລາຍລັກອັກສອນໃນທັນທີກ່ຽວກັບການຕັດສິນກຳນົດນັ້ນ.

ການສົ່ງຄຳຮ້ອງຂໍການໄຕ່ສວນຕາມຫຼັກ Due Process

ທ່ານຈຳເປັນຕ້ອງສົ່ງຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ຫາ:

- ເຂດການສຶກສາຂອງລູກທ່ານ;
- ອົງການ AEA;
- ພະແນກສຶກສາລັດໄອໂອວາ; ແລະ
- ພາກສ່ວນອື່ນທີ່ມີຊື່.

ຄຳຮ້ອງດັ່ງກ່າວຕ້ອງຮັກສາເປັນຄວາມລັບ.

ທຸກກຳນົດເວລາທີ່ກ່ຽວຂ້ອງກັບຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ຈະເລີ່ມຕົ້ນພຽງແຕ່ເມື່ອທຸກພາກສ່ວນໄດ້ຮັບທຸກສຳເນົາທີ່ຈຳເປັນແລ້ວ.

ພະແນກສຶກສາລັດໄອໂອວາມີຄວາມຮັບຜິດຊອບດຳເນີນການໄຕ່ສວນຕາມຫຼັກ due process ຢ່າງຍຸຕິທຳ.

ການປ່ຽນແປງຄຳຮ້ອງຂໍການໄຕ່ສວນຕາມຫຼັກ Due Process

ທ່ານອາດຈະປ່ຽນແປງ ("ປັບປຸງ") ຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ຂອງທ່ານໄດ້ ພຽງແຕ່ຖ້າວ່າ:

1. ພາກສ່ວນອື່ນທີ່ກ່ຽວຂ້ອງຍິນຍອມເຫັນດີນຳການປ່ຽນແປງເປັນລາຍລັກອັກສອນດັ່ງກ່າວ ແລະ ໄດ້ຮັບໂອກາດໃນການແກ້ໄຂຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ຜ່ານກອງປະຊຸມແກ້ໄຂຂໍ້ຂັດແຍ້ງ; ຫຼື
2. ຜູ້ພິພາກສາ ALJ ໃຫ້ການອະນຸຍາດ, ຍົກເວັ້ນກໍລະນີທີ່ຜູ້ພິພາກສາ ALJ ນັ້ນ ອາດຈະໃຫ້ການອະນຸຍາດໃຫ້ແກ້ໄຂໃນເວລາໃດໜຶ່ງບໍ່ເກີນຫ້າວັນກ່ອນທີ່ການໄຕ່ສວນຕາມຫຼັກ due process ຈະເລີ່ມຕົ້ນ.

ເມື່ອມີການປ່ຽນແປງຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process, ກຳນົດເວລາທັງໝົດຈະເລີ່ມໃໝ່ອີກຄັ້ງສຳລັບການໄຕ່ສວນຍຸຕິທຳຕາມຫຼັກ due process ຫຼື ກອງປະຊຸມແກ້ໄຂຂໍ້ຂັດແຍ້ງ.

ການຕອບຄຳຮ້ອງຂໍການໄຕ່ສວນຂອງເຂດການສຶກສາ/ອົງການ AEA

ຖ້າເຂດການສຶກສາ ແລະ/ຫຼື ອົງການ AEA ຍັງບໍ່ທັນໄດ້ສົ່ງແຈ້ງການລ່ວງໜ້າເປັນລາຍລັກອັກສອນໃຫ້ແກ່ທ່ານກ່ຽວກັບຫົວເລື່ອງທີ່ບັນຈຸຢູ່ໃນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ທີ່ທ່ານໄດ້ຂຽນ, ທາງເຂດການສຶກສາຕ້ອງ, ພາຍໃນ 10 ວັນຕາມເວລາປະຕິທິນນັບຈາກໄດ້ຮັບ ຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process, ສົ່ງໃຫ້ທ່ານໜັງສືຄຳຕອບ ເຊິ່ງປະກອບມີ:

- ຄຳອະທິບາຍຍ້ອນຫຍັງອົງການຈຶ່ງໄດ້ສະເໜີ ຫຼື ປະຕິເສດທີ່ຈະດຳເນີນການທີ່ໄດ້ກ່າວເຖິງໃນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process;
- ລາຍລະອຽດຂອງທາງເລືອກອື່ນທີ່ທີມ IEP ຂອງລູກທ່ານໄດ້ພິຈາລະນາ ແລະ ເຫດຜົນຍ້ອນຫຍັງທາງເລືອກເຫຼົ່ານັ້ນຈຶ່ງຖືກປະຕິເສດ;
- ລາຍລະອຽດຂອງແຕ່ລະຂັ້ນຕອນການປະເມີນຜົນ, ການຕີລາຄາ, ບັນທຶກ, ຫຼື ລາຍງານທີ່ອົງການໄດ້ນຳໃຊ້ເປັນບັນທັດຖານສຳລັບການດຳເນີນການທີ່ໄດ້ສະເໜີ ຫຼື ປະຕິເສດໄປນັ້ນ; ແລະ
- ລາຍລະອຽດຂອງບັດໃຈອື່ນໆທີ່ກ່ຽວຂ້ອງກັບການດຳເນີນການຂອງອົງການທີ່ໄດ້ສະເໜີ ຫຼື ປະຕິເສດໄປນັ້ນ.

ເຂດການສຶກສາ ແລະ AEA ທີ່ໄດ້ຮັບຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ຕ້ອງ, ພາຍໃນ 10 ວັນຕາມເວລາປະຕິທິນນັບແຕ່ໄດ້ຮັບຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process, ສົ່ງໃຫ້ທ່ານໜັງສືຄຳຕອບທີ່ກ່າວເຖິງໂດຍສະເພາະປະເດັນຕ່າງໆໃນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process.

ສຳເນົາຂອງໜັງສືຄຳຕອບນີ້ຍັງຈະຕ້ອງໄດ້ສົ່ງໃຫ້ພະແນກສຶກສາລັດໄອໂອວານຳອີກ.

ການຮ້ອງຟ້ອງທາງແພ່ງ

ການຮ້ອງຟ້ອງທາງແພ່ງ

ຝ່າຍໃດໜຶ່ງທີ່ບໍ່ເຫັນດີນຳສິ່ງຄົ້ນພົບ ແລະຄຳຕັດສິນໃນການໄຕ່ສວນຕັດສິນຕາມຫຼັກ due process ລວມທັງການໄຕ່ສວນຄະດີທີ່ກ່ຽວຂ້ອງກັບລະບຽບຂັ້ນຕອນການປະຕິບັດວິໄນ ມີສິດດຳເນີນການຮ້ອງຟ້ອງຄະດີທາງແພ່ງກ່ຽວກັບປະເດັນບັນຫາທີ່ເປັນຫົວຂໍ້ຂອງການໄຕ່ສວນຕັດສິນຕາມຫຼັກ due process.

ການດຳເນີນຄະດີດັ່ງກ່າວອາດຈະນຳໄປສູ່ສານຂັ້ນລັດ ຫຼືສານເຂດຂອງລັດຖະບານກາງ, ໂດຍບໍ່ຄຳນຶງເຖິງຈຳນວນເງິນທີ່ຂັດແຍ້ງກັນ.

ຝ່າຍໃດໜຶ່ງທີ່ບໍ່ເຫັນດີນຳການຕັດສິນຂອງຜູ້ພິພາກສາ ALJ ຈະມີ 90 ວັນຕາມເວລາປະຕິທິນນັບຈາກວັນທີອອກຄຳຕັດສິນຂອງຜູ້ພິພາກສາ ALJ ໃນການຍື່ນການຮ້ອງຟ້ອງທາງແພ່ງ.

ໃນທຸກການຮ້ອງຟ້ອງທາງແພ່ງ, ສານ:

- ຮັບເອົາບັນທຶກຂອງການດຳເນີນຄະດີທາງການປົກຄອງ;
- ພິຈາລະນາ ແລະໄຕ່ສວນຫຼັກຖານຕາມຄຳຮ້ອງຂໍຂອງຝ່າຍໃດໜຶ່ງ; ແລະ
- ອອກຄຳຕັດສິນຂອງຕົນອີງຕາມຫຼັກຖານທີ່ມີນ້ຳໜັກເໜືອກວ່າ;
- ໃຫ້ການບັນເທົາທຸກທີ່ສານເຫັນວ່າເໝາະສົມ.

ກອງປະຊຸມແກ້ໄຂຂໍ້ຂັດແຍ້ງ

ກອງປະຊຸມແກ້ໄຂຂໍ້ຂັດແຍ້ງ

ພາຍໃນ 15 ວັນຕາມເວລາປະຕິທິນນັບຈາກໄດ້ຮັບແຈ້ງການຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process, ແລະ ກ່ອນການໄຕ່ສວນຕາມຫຼັກ due process, ເຂດການສຶກສາ ແລະອົງການ AEA ຕ້ອງ:

- ຮຽກປະຊຸມກັບທ່ານ ແລະ ສະມາຊິກທີ່ກ່ຽວຂ້ອງ ຫຼືສະມາຊິກຂອງທີມງານ IEP ຜູ້ທີ່ມີຄວາມຮູ້ສະເພາະກ່ຽວກັບຂໍ້ເທັດຈິງທີ່ຖືກລະບຸໃນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ຂອງທ່ານທີ່:
  - ຕ້ອງປະກອບມີຕ່າງໜ້າຂອງເຂດການສຶກສາ ແລະ AEA ຜູ້ທີ່ມີອຳນາດໃນການຕັດສິນ ໃນນາມເຂດການສຶກາສາ ແລະ AEA.

- ○ ອາດຈະບໍ່ປະກອບມີທະນາຍຄວາມຂອງເຂດການສຶກສາ ຫຼື AEA ຖ້າທ່ານບໍ່ມີທະນາຍຄວາມມານຳທ່ານ.

ຈຸດປະສົງ

ຈຸດປະສົງຂອງກອງປະຊຸມແກ້ໄຂຂໍ້ຂັດແຍ້ງແມ່ນເພື່ອໃຫ້ທ່ານປຶກສາຫາລືກ່ຽວກັບຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process, ແລະ ຂໍ້ເທັດຈິງຕ່າງໆທີ່ເປັນພື້ນຖານໃຫ້ແກ່ການເຮັດຄຳຮ້ອງຂໍການໄຕ່ສວນຕັດສິນເພື່ອໃຫ້ທາງ ເຂດການສຶກສາ ແລະອົງການ AEA ໄດ້ມີໂອກາດໃນການແກ້ໄຂຂໍ້ຂັດແຍ້ງ.

ການຈັດກອງປະຊຸມແກ້ໄຂຂໍ້ຂັດແຍ້ງ

ກອງປະຊຸມແກ້ໄຂຂໍ້ຂັດແຍ້ງຕ້ອງໄດ້ຈັດຂຶ້ນ ເວັ້ນເສຍແຕ່ວ່າ:

- ທ່ານ, ເຂດການສຶກສາ, ແລະ ອົງການ AEA ຕົກລົງເຫັນດີເປັນລາຍລັກອັກສອນວ່າຈະສະຫຼະສິດບໍ່ຈັດກອງປະຊຸມ ດັ່ງກ່າວ; ຫຼື
- ທ່ານ, ເຂດການສຶກສາ, ແລະ ອົງການ AEA ຕົກລົງເຫັນດີຈະໃຊ້ຂະບວນການໄກ່ເກ່ຍທີ່ມີໃຫ້ຜ່ານພະແນກສຶກສາ.

ຝ່າຍຕ່າງໆທີ່ລະບຸຊື່ໃນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ຈະຕ້ອງສົ່ງບັນທຶກເອກະສານໃຫ້ພະແນກສຶກສາລັດ ໄອໂອວາທີ່ສະແດງໃຫ້ເຫັນວ່າກອງປະຊຸມແກ້ໄຂຂໍ້ຂັດແຍ້ງໄດ້ຖືກຈັດຂຶ້ນແລ້ວ **ຫຼື** ວ່າທຸກໆຝ່າຍໄດ້ຕົກລົງເຫັນດີບໍ່ຈັດກອງປະ ຊຸມແກ້ໄຂຂໍ້ຂັດແຍ້ງດັ່ງກ່າວ.

ຜູ້ເຂົ້າຮ່ວມໃນກອງປະຊຸມແກ້ໄຂຂໍ້ຂັດແຍ້ງ

ຕົວທ່ານ ແລະ ເຂດການສຶກສາ ແລະອົງການ AEA ຮ່ວມກັນກຳນົດສະມາຊິກທີມ IEP ທີ່ກ່ຽວຂ້ອງທີ່ຈະເຂົ້າ ຮ່ວມໃນກອງປະຊຸມແກ້ໄຂຂໍ້ຂັດແຍ້ງ.

ໄລຍະແກ້ໄຂຂໍ້ຂັ ແຍ້ງ

ໄລຍະກຳນົດ 30 ວັນຕາມເວລາປະຕິທິນເລີ່ມຕົ້ນເມື່ອເຂດການສຶກສາ, ອົງການ AEA, ພາກສ່ວນອື່ນໆ , ແລະ ພະແນກສຶກ ສາລັດໄອໂອວາທັງໝົດ ໄດ້ຮັບຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process.

ໃນລະຫວ່າງໄລຍະເວລານັ້ນ ມີໂອກາດໃນການແກ້ໄຂບັນຫາຕ່າງໆທີ່ມີໃນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process.

ຖ້າເຂດການສຶກສາບໍ່ໄດ້ແກ້ໄຂບັນຫາທີ່ນຳສະເໜີໃນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ໃຫ້ທ່ານເພິ່ງພໍໃຈ ພາຍ ໃນ 30 ວັນຕາມເວລາປະຕິທິນ, ການໄຕ່ສວນຕາມຫຼັກ due process ຕ້ອງໄດ້ເກີດຂຶ້ນ.

ຖ້າເຂດການສຶກສາບໍ່ສາມາດຈັດກອງປະຊຸມແກ້ໄຂຂໍ້ຂັດແຍ້ງ ພາຍໃນ 15 ວັນຕາມເວລາປະຕິທິນນັບແຕ່ມື້ໄດ້ຮັບແຈ້ງການ ຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ຂອງທ່ານ, **ຫຼື** ບໍ່ສາມາດເຂົ້າຮ່ວມໃນກອງປະຊຸມແກ້ໄຂຂໍ້ຂັດແຍ້ງ, ທ່ານ ອາດຈະຮ້ອງຂໍໃຫ້ຜູ້ພິພາກສາ ALJ ອອກຄຳສັ່ງໃຫ້ກຳນົດເວລາ 45 ວັນຕາມເວລາປະຕິທິນຂອງການໄຕ່ສວນຕາມຫຼັກ due process ເລີ່ມຕົ້ນມີຜົນ.

ຄວາມສຳຄັນຂອງກອງປະຊຸມແກ້ໄຂຂໍ້ຂັດແຍ້ງ

ເມື່ອທ່ານໄດ້ຍື່ນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ແລ້ວ, ແລະ ທ່ານ, ເຂດການສຶກສາ/ອົງການ AEA ຫຼື ຝ່າຍ ອື່ນໆ ບໍ່ໄດ້ສະຫຼະສິດຈັດກອງປະຊຸມນັ້ນ, ການທີ່ທ່ານບໍ່ສາມາດເຂົ້າຮ່ວມກອງປະຊຸມແກ້ໄຂຂໍ້ຂັດແຍ້ງຈະມີຜົນຕາມມາ.

ຖ້າຫຼັງຈາກໄດ້ພະຍາຍາມຢ່າງສົມເຫດສົມຜົນ ແລະ ໄດ້ບັນທຶກເປັນເອກະສານຄວາມພະຍາມດັ່ງກ່າວ, ເຂດການສຶກສາບໍ່ ສາມາດໄດ້ຮັບການເຂົ້າຮ່ວມຂອງທ່ານໃນກອງປະຊຸມແກ້ໄຂຂໍ້ຂັດແຍ້ງ, ເຂດການສຶກສາ ຫຼື AEA ອາດຈະ, ໃນຕອນທ້າຍ ຂອງໄລຍະກຳນົດແກ້ໄຂຂໍ້ຂັດແຍ້ງ 30 ວັນຕາມເວລາປະຕິທິນ, **ຮຽກຮ້ອງໃຫ້ຜູ້ພິພາກສາ ALJ ຍົກເລີກຄຳຮ້ອງຂໍການໄຕ່ ສວນຕາມຫຼັກ due process ຂອງທ່ານ.**

ເອກະສານບັນທຶກຄວາມພະຍາຍາມຕ້ອງລວມມີບັນທຶກຄວາມພະຍາຍາມໃນການຈັດຫາເວລາ ແລະ ສະຖານທີ່ຂອງກອງ ປະຊຸມທີ່ເຫັນດີຮ່ວມກັນ ເຊັ່ນວ່າ:

- ບັນທຶກລາຍລະອຽດຂອງການໂທລະສັບທີ່ໄດ້ໂທ ຫຼື ພະຍາຍາມໂທ ແລະ ຜົນຂອງການໂທເຫຼົ່ານັ້ນ;
- ສຳເນົາຂອງໜັງສືສົ່ງຂ່າວ ທີ່ສົ່ງໃຫ້ທ່ານ ແລະ ທຸກໆການຕອບຄືນທີ່ໄດ້ຮັບ; ແລະ
- ບັນທຶກລາຍລະອຽດຂອງການໄປຢ້ຽມຢາມເຮືອນ ຫຼືບ່ອນເຮັດວຽກຂອງທ່ານ ແລະ ຜົນຂອງການໄປຢ້ຽມຢາມເຫຼົ່ານັ້ນ.

ຂໍ້ຕົກລົງແກ້ໄຂຈາກ

ຖ້າການແກ້ໄຂຂໍ້ຂັດແຍ້ງບັນລຸໄດ້ຢູ່ກອງປະຊຸມແກ້ໄຂຂໍ້ຂັດແຍ້ງດັ່ງກ່າວ ທານ ແລະ ພາກສ່ວນອື່ນໆຕ້ອງໄດ້ສ້າງຂໍ້ຕົກລົງແກ້

ກອງປະຊຸມແກ້ໄຂຂໍ້ຂັດແຍ້ງ

ໄຂທີ່ມີຜົນຜູກມັດທາງກົດໝາຍ ທີ່:
- ເຊັນຊື່ໂດຍທ່ານ ແລະ ຜູ້ຕ່າງໜ້າຂອງເຂດການສຶກສາຜູ້ທີ່ອຳນາດຜູກມັດເຂດການສຶກສາ; ແລະ
- ສາມາດບັງຄັບໃຊ້ໄດ້ໃນທຸກໆສານທີ່ມີອຳນາດຕັດສິນຂອງລັດ ຫຼື ໃນສານເຂດຂອງສະຫະລັດ.

ໄລຍະທົບທວນຂອງກອງປະຊຸມແກ້ໄຂຂໍ້ຂັດແຍ້ງ

ຖ້າທ່ານ ແລະ ເຂດການສຶກສາລົງນາມໃນຂໍ້ຕົກລົງໃດໜຶ່ງທີ່ເປັນຜົນມາຈາກກອງປະຊຸມແກ້ໄຂຂໍ້ຂັດແຍ້ງໃດໜຶ່ງ ທຸກໆຝ່າຍ (ທ່ານ, ເຂດການສຶກສາ, ຫຼື ອົງການ AEA), ສາມາດລົບລ້າງຂໍ້ຕົກລົງດັ່ງກາວພາຍໃນ 3 ວັນລັດຖະການນັບຈາກເວລາທີ່ທັງທ່ານ ແລະເຂດການສຶກສາໄດ້ລົງລາຍເຊັນໃນຂໍ້ຕົກລົງນັ້ນ.

ການໄກ່ເກ່ຍ

ການໄກ່ເກ່ຍທີ່ມີໃຫ້

ການໄກ່ເກ່ຍຕ້ອງເຮັດໃຫ້ມີໃຫ້ແກ່ທ່ານເພື່ອເຮັດໃຫ້ທ່ານ ແລະອົງການພາກລັດແກ້ໄຂຂໍ້ຂັດແຍ້ງໃນເລື່ອງຕ່າງໆພາຍໃຕ້ກົດໝາຍ IDEA.

ທ່ານສາມາດຮ້ອງຂໍໃຫ້ມີການໄກ່ເກ່ຍ:
- ໂດຍບໍ່ຍື່ນການຮ້ອງຮຽນຕາມຫຼັກ due process.
- ກ່ອນການຍື່ນການຮ້ອງຮຽນຕາມຫຼັກ due process.
- ຫຼັງຈາກການຍື່ນການຮ້ອງຮຽນຕາມຫຼັກ due process.

ພະແນກສຶກສາລັດໄອໂອວາຕ້ອງຮັບປະກັນວ່າບັນດາລະບຽບການຕ່າງໆໄດ້ຖືກກຳນົດຂຶ້ນ ແລະ ຈັດຕັ້ງປະຕິບັດ ເພື່ອໃຫ້ເຮັດທຸກຝ່າຍໄດ້ແກ້ໄຂຂໍ້ຂັດແຍ້ງຜ່ານຂະບວນການໄກ່ເກ່ຍ.

ແບບຟອມຄຳຮ້ອງຂໍການໄກ່ເກ່ຍແມ່ນມີໃນໜ້າ 44.

ລະບຽບຂັ້ນຕອນການໄກ່ເກ່ຍ

ລະບຽບຂັ້ນຕອນການໄກ່ເກ່ຍຕ້ອງຮັບປະກັນວ່າຂະບວນການໄກ່ເກ່ຍ:
- ເປັນໄປດ້ວຍຄວາມສະໝັກໃຈຈາກທຸກຝ່າຍ (ທ່ານ, ເຂດການສຶກສາ ແລະ AEA);
- ບໍ່ຖືກນຳໃຊ້ເພື່ອປະຕິເສດ ຫຼື ເຮັດໃຫ້ສິດທິຂອງທ່ານໃນການໄດ້ຮັບການໄຕ່ສວນຕາມຫຼັກ due process ຊັກຊ້າລົງ ຫຼື ເພື່ອປະຕິເສດສິດທິອື່ນໆທີ່ທ່ານມີພາຍໃຕ້ກົດໝາຍ IDEA; ແລະ
- ຖືກດຳເນີນໂດຍຜູ້ໄກ່ເກ່ຍທີ່ມີຄຸນສົມບັດຄົບຖ້ວນແລະຍຸຕິທຳຜູ້ທີ່ຜ່ານການຝຶກອົບຮົມໃນດ້ານເຕັກນິກການໄກ່ເກ່ຍຢ່າງມີປະສິດທິຜົນ.

ຜູ້ໄກ່ເກ່ຍ

ພະແນກສຶກສາຕ້ອງ:
- ສ້າງລາຍຊື່ຂອງບຸກຄົນຜູ້ທີ່ເປັນຜູ້ໄກ່ເກ່ຍທີ່ມີຄຸນສົມບັດຄົບຖ້ວນ ແລະ ມີຄວາມຮູ້ໃນກົດໝາຍ ແລະ ຂໍ້ລະບຽບ ຕ່າງໆກ່ຽວກັບການສະໜອງການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ.
- ຄັດເລືອກເອົາຜູ້ໄກ່ເກ່ຍແບບຂຸມເລືອກເອົາ, ຢ່າງສົມເຫດສົມຜົນ, ຫຼື ແບບຍຸຕິທຳອື່ນໆ.
- ຮັບຜິດຊອບຈ່າຍຄ່າຂະບວນການໄກ່ເກ່ຍ, ລວມທັງຄ່າໃຊ້ຈ່າຍຂອງກອງປະຊຸມຕ່າງໆກັບພາກສ່ວນທີ່ບໍ່ມີສ່ວນກ່ຽວຂ້ອງ ເມື່ອທາງເລືອກແມ່ນການບໍ່ນຳໃຊ້ການໄກ່ເກ່ຍ.

ຄວາມຍຸຕິທຳຂອງຜູ້ໄກ່ເກ່ຍ

ບຸກຄົນທີ່ເຮັດໜ້າທີ່ເປັນຜູ້ໄກ່ເກ່ຍ:
- ຈະບໍ່ແມ່ນພະນັກງານຂອງພະແນກສຶກສາລັດໄອໂອວາ, ອົງການ AEA, ຫຼືເຂດການສຶກສາທີ່ມີສ່ວນພົວພັນໃນການສຶກສາ ຫຼື ການດູແລຂອງລູກທ່ານ; ແລະd
- ຕ້ອງບໍ່ມີຜົນປະໂຫຍດທາງສ່ວນຕົວ ຫຼືທາງອາຊີບທີ່ຂັດແຍ້ງກັບຄວາມທ່ຽງທຳຂອງຜູ້ໄກ່ເກ່ຍ.

ເຖິງແມ່ນວ່າ ຜູ້ໄກ່ເກ່ຍໄດ້ຮັບເງິນຄ່າໄກ່ເກ່ຍຈາກພະແນກສຶກສາ, ແຕ່ບໍ່ຖືວ່າເປັນພະນັກງານຂອງພະແນກສຶກສາ.

ຂະບວນການໄກ່ເກ່ຍ

- ທຸກໆການພົບປະໃນຂະບວນການໄກ່ເກ່ຍຕ້ອງໄດ້ກຳນົດເວລາຢ່າງຖືກຕ້ອງ ເໝາະສົມ ແລະ ຕ້ອງຈັດຂຶ້ນຢູ່ບ່ອນທີ່ມີຄວາມສະດວກສຳລັບຕົວທ່ານ ແລະພາກສ່ວນອື່ນ.

- ຖ້າທ່ານ ແລະເຂດການສຶກສາແກ້ໄຂໄດ້ຂໍ້ຂັດແຍ້ງຜ່ານຂະບວນການໄກ່ເກ່ຍ, ລວມທັງກອງປະຊຸມແກ້ໄຂກ່ອນການໄຕ່ສວນ, ທ່ານ, ເຂດການສຶກສາ, ແລະ AEA ຕ້ອງໄດ້ລົງນາມໃນຂໍ້ຕົກລົງທີ່ມີຜົນຜູກມັດທາງກົດໝາຍທີ່:
  - ລະບຸວ່າທຸກໆການປຶກສາຫາລືທີ່ເກີດຂຶ້ນໃນຊ່ວງໄລຍະຂະບວນໄກ່ເກ່ຍຈະຖືກຮັກສາໄວ້ເປັນຄວາມລັບ ແລະ ຈະບໍ່ຖືກໃຊ້ເປັນຫຼັກຖານໃນການໄຕ່ສວນຕາມຫຼັກ due process ທີ່ຕາມມາໃດໜຶ່ງ ຫຼື ຮ້ອງຟ້ອງໄຕ່ສວນທາງແພ່ງທີ່ເກີດຂຶ້ນຈາກຂໍ້ຂັດແຍ້ງນັ້ນ; ແລະ
  - ເຊັນຊື່ໂດຍທ່ານ ແລະຜູ້ໄດ້ຮັບມອບໝາຍທີ່ມີອຳນາດເປັນຕົວແທນໃຫ້ແກ່ອົງການ LEA, AEA ຫຼືພາກສ່ວນອື່ນ.
- ຂໍ້ຕົກລົງການໄກ່ເກ່ຍຂໍ້ຂັດແຍ້ງເປັນລາຍລັກອັກສອນ ແລະລົງລາຍເຊັນກັນ ແມ່ນສາມາດບັງຄັບໃຊ້ໄດ້ໃນທຸກໆສານລັດທີ່ມີອຳນາດຕັດສິນ ຫຼື ສານເຂດຂອງສະຫະລັດ.
- ຝ່າຍຕ່າງໆທີ່ເຂົ້າຮ່ວມໃນການໄກ່ເກ່ຍຈະຖືກກຳນົດໃຫ້ເຊັນຊື່ໃບປະຕິຍານຮັກສາຄວາມລັບກ່ອນທີ່ຈະເລີ່ມຕົ້ນການໄກ່ເກ່ຍ.

ບໍ່ແນ່ໃຈກ່ຽວກັບການໃຊ້ການໄກ່ເກ່ຍ

ອົງການ AEA ອາດຈະສ້າງລະບຽບຂັ້ນຕອນ ເພື່ອສະໜອງໂອກາດໃຫ້ພໍ່ແມ່ເດັກ ແລະເຂດການສຶກສາທີ່ເລືອກບໍ່ນຳໃຊ້ຂະບວນການໄກ່ເກ່ຍ ໄດ້ພົບປະກັນ ໃນເວລາ ແລະ ສະຖານທີ່ໃດໜຶ່ງທີ່ມີຄວາມສະດວກຕໍ່ກັບທ່ານ, ໂດຍມີຝ່າຍທີ່ບໍ່ມີສ່ວນໄດ້ສ່ວນເສຍເຂົ້າຮ່ວມນຳ.

ຝ່າຍທີ່ບໍ່ມີສ່ວນໄດ້ສ່ວນເສຍແມ່ນໜຶ່ງໃນບັນດາກຸ່ມຕໍ່ໄປນີ້:
- ບຸກຄົນທີ່ຢູ່ພາຍໃຕ້ສັນຍາກັບອົງການຈັດຕັ້ງແກ້ໄຂຂໍ້ຂັດແຍ້ງທາງເລືອກທີ່ເໝາະສົມ; ຫຼື
- ສູນຝຶກອົບຮົມ ແລະສະໜອງຂໍ້ມູນພໍ່ແມ່ຜູ້ປົກຄອງລັດໄອໂອວາ (The Iowa PTI); ຫຼື
- ສູນຊັບພະຍາກອນຊຸມຊົນສຳລັບພໍ່ແມ່ຜູ້ປົກຄອງ.

ຝ່າຍທີ່ບໍ່ມີສ່ວນໄດ້ສ່ວນເສຍຈະອະທິບາຍກ່ຽວກັບຜົນປະ�โยດຂອງຂະບວນການໄກ່ເກ່ຍ ແລະ ຊຸກຍູ້ໃຫ້ທ່ານນຳໃຊ້ຂະບວນການໄກ່ເກ່ຍດັ່ງກ່າວ.

ສະຖານະຂອງເດັກໃນລະຫວ່າງການໄກ່ເກ່ຍ

ຍົກເວັ້ນສຳລັບການໄກ່ເກ່ຍທີ່ກ່ຽວຂ້ອງກັບການລົບລ້າງການປະຕິບັດວິໄນ (ເບິ່ງໜ້າ 26-30), ໃນຂະນະທີ່ລໍຖ້າການໄກ່ເກ່ຍ, ແລະ ເປັນເວລາສິບວັນຫຼັງຈາກກອງປະຊຸມການໄກ່ເກ່ຍດັ່ງກ່າວ ເຊິ່ງບໍ່ມີການບັນລຸໄດ້ຂໍ້ຕົກລົງ, ເວັ້ນເສຍແຕ່ວ່າ ທາງລັດ ຫຼື ໜ່ວຍງານທ້ອງຖິ່ນ ແລະ ພໍ່ແມ່ເດັກ ຕົກລົງກັນເປັນຢ່າງອື່ນ, ເດັກທີ່ກ່ຽວຂ້ອງກັບການໄກ່ເກ່ຍດັ່ງກ່າວຕ້ອງຍັງຄົງຢູ່ໃນການບັນຈຸເຂົ້າຮຽນປະຈຸບັນຂອງເດັກ.

ການໄຕ່ສວນຍຸຕິທຳຕາມຫຼັກ Due Process

ການໄຕ່ສວນຍຸຕິທຳຕາມຫຼັກ Due Process

ໃນທຸກເມື່ອທີ່ມີການຍື່ນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process, ທ່ານ, ອົງການ AEA, ຫຼື ເຂດການສຶກສາທີ່ມີສ່ວນກ່ຽວຂ້ອງໃນຂໍ້ຂັດແຍ້ງດັ່ງກ່າວ ຕ້ອງມີໂອກາດສຳລັບການໄຕ່ສວນຍຸຕິທຳຕາມຫຼັກ due process.

- ພະແນກສຶກສາລັດໄອໂອວາ ເປັນຜູ້ຈັດກຽມການໄຕ່ສວນດັ່ງກ່າວ.
- ບຸກຄົນທີ່ມີຕຳແໜ່ງເປັນຜູ້ພິພາກສາກົດໝາຍປົກຄອງ (ALJ) ຈະເປັນຜູ້ພິຈາລະນາໄຕ່ສວນຫຼັກຖານຢູ່ໃນການໄຕ່ສວນຕາມຫຼັກ due process ແລະ ເຮັດການຕັດສິນ.
- ພະແນກສຶກສາລັດໄອໂອວາ ຕ້ອງຮັກສາລາຍຊື່ຂອງບຸກຄົນຜູ້ທີ່ເຮັດໜ້າທີ່ເປັນຜູ້ພິພາກສາ ALJ. ເອກະສານລາຍຊື່ດັ່ງກ່າວຕ້ອງລວມມີຄຳຖະແຫຼງກ່ຽວກັບວຸດທິຄຸນສົມບັດຂອງບຸກຄົນເຫຼົ່ານັ້ນ.

ຜູ້ພິພາກສາກົດໝາຍປົກຄອງ Judge (ALJ)

ຢ່າງນ້ອຍສຸດ, ຜູ້ພິພາກສາ ALJ ຕ້ອງບໍ່ແມ່ນ:
- ພະນັກງານຂອງພະແນກສຶກສາລັດໄອໂອວາ, ອົງການ AEA ຫຼື ເຂດການສຶກສາທີ່ມີສ່ວນກ່ຽວຂ້ອງໃນການສຶກສາ ຫຼື ການດູແລຂອງເດັກ; ຫຼື
- ບຸກຄົນທີ່ມີຜົນປະ�โยດທາງສ່ວນຕົວ ຫຼື ທາງອາຊີບທີ່ຂັດແຍ້ງກັບຄວາມທ່ຽງທຳຂອງບຸກຄົນນັ້ນໃນການໄຕ່ສວນດັ່ງກ່າວ.

ຜູ້ພິພາກສາ ALJ ຕ້ອງ:
- ຕ້ອງມີຄວາມຮູ້, ແລະ ຄວາມສາມາດໃນການເຂົ້າໃຈ, ບັນດາຂໍ້ບັນຍັດຂອງກົດໝາຍ IDEA 2004, ບັນດາຂໍ້ລະບຽບຂອງລັດຖະບານກາງ ແລະ ຂອງລັດ ທີ່ກ່ຽວຂ້ອງກັບກົດໝາຍ IDEA, ແລະ ການຕີຄວາມຂອງກົດໝາຍ IDEA ໂດຍບັນດາ

ສານຕ່າງໆຂອງລັດຖະບານກາງ ແລະ ຂອງລັດ;
- ຕ້ອງມີຄວາມຮູ້ ແລະ ຄວາມສາມາດໃນການດຳເນີນການໄຕ່ສວນໂດຍສອດຄ່ອງກັບຫຼັກປະຕິບັດດ້ານກົດໝາຍທີ່ເໝາະສົມ ແລະຕາມມາດຕະຖານ; ແລະ
- ຕ້ອງມີຄວາມຮູ້ ແລະ ຄວາມສາມາດໃນການອອກ ແລະ ຂຽນຄຳຕັດສິນຢ່າງຖືກຕ້ອງຕາມຫຼັກປະຕິບັດດ້ານກົດໝາຍທີ່ເໝາະສົມ ແລະຕາມມາດຕະຖາ.

ເຖິງແມ່ນວ່າ ຜູ້ພິພາກສາ ALJ ໄດ້ຮັບການຈ່າຍເງິນໂດຍອົງການໃດໜຶ່ງ, ແຕ່ພວກເຂົາບໍ່ຖືວ່າເປັນພະນັກງານຂອງອົງການນັ້ນ.

ການບັນຈຸເຂົ້າຮຽນຂອງເດັກ

ຍົກເວັ້ນສຳລັບການໄຕ່ສວນທີ່ກ່ຽວຂ້ອງກັບການລົບລ້າງການປະຕິບັດວິໄນ (ເບິ່ງໜ້າ 26-30), ລູກຂອງທ່ານຕ້ອງຍັງຢູ່ໃນການບັນຈຸການສຶກສາເດີມໃນປະຈຸບັນ ໃນລະຫว่ານໄລຍະຂອງການໄຕ່ສວນຕັດສິນຂອງອົງການບໍລິຫານ ຫຼື ການພິຈາລະນາຕັດສິນຂອງສານ, ເວັ້ນເສຍແຕ່ ທຸກໆຝ່າຍຕົກລົງເຫັນດີເປັນຢ່າງອື່ນ.

ຖ້າເດັກຢູ່ໃນການບັນຈຸເຂົ້າຮຽນແທນຊົ່ວຄາວ ໃນເວລາມີການໄຕ່ສວນຕັດສິນ, ເດັກດັ່ງກ່າວຕ້ອງຍັງຢູ່ໃນການບັນຈຸເຂົ້າຮຽນດັ່ງກ່າວ ເພື່ອລໍຖ້າການຕັດສິນຂອງຜູ້ພິພາກສາ ALJ ຫຼື ການສິ້ນສຸດໄລຍະ ແກ້ໄຂຂໍ້ຂັດແຍ້ງ.

ຖ້າຄຳຮ້ອງການໄຕ່ສວນຕາມຫຼັກ due process ກ່ຽວຂ້ອງກັບຄຳຮ້ອງສະໝັກຂໍການອະຍາດຂັ້ນຕົ້ນເພື່ອເຂົ້າໂຮງຮຽນລັດຖະບານ, ລູກຂອງທ່ານ, ໂດຍການຍິນຍອມຈາກທ່ານ, ຕ້ອງໄດ້ຖືກບັນຈຸເຂົ້າຮຽນໃນໂຮງຮຽນລັດຖະບານ ຈົນກວ່າການພິຈາລະນາຕັດສິນທັງໝົດຈະສຳເລັດ.

ຖ້າການຕັດສິນຂອງຜູ້ພິພາກສາ ALJ ໃນການໄຕ່ສວນຕາມຫຼັກ due process ທີ່ດຳເນີນໂດຍພະແນກສຶກສາລັດໄອໂອວາ ແມ່ນເຫັນດີນຳທ່ານວ່າການປ່ຽນແປງການບັນຈຸເຂົ້າຮຽນແມ່ນເໝາະສົມ, ການບັນຈຸເຂົ້າຮຽນນັ້ນຕ້ອງໄດ້ຖືເປັນຂໍ້ຕົກລົງລະຫว่ານທາງລັດ ແລະ ຕົວທ່ານ.

ປະເດັນບັນຫາທີ່ປຶກສາຫາລືໃນການໄຕ່ສວນ

ຝ່າຍທີ່ຮ້ອງຂໍການໄຕ່ສວນຕາມຫຼັກ due process ຈະບໍ່ໄດ້ຮັບອະນຸຍາດໃຫ້ຍົກປະເດັນຕ່າງໆໃນເວລາໄຕ່ສວນຕາມຫຼັກ due process ທີ່ບໍ່ໄດ້ກ່າວໄວ້ ໃນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ເວັ້ນເສຍແຕ່ວ່າອີກຝ່າຍໜຶ່ງ ຕົກລົງເຫັນດີເປັນຢ່າງອື່ນ.

ກຳນົດເວລາສຳລັບການຮ້ອງຂໍການໄຕ່ສວນຕາມຫຼັກ Due Process

ທ່ານ, ເຂດການສຶກສາ, ຫຼື AEA ຕ້ອງຮ້ອງຂໍການໄຕ່ສວນຍຸຕິທຳ ພາຍໃນສອງປີນັບຈາກວັນທີທີ່ທ່ານ, ເຂດການສຶກສາ, ຫຼື AEA ໄດ້ຮັບຮູ້ ຫຼື ຄວນຈະໄດ້ຮັບຮູ້ກ່ຽວກັບການກະທຳທີ່ຖືກກ່າວຫາ ເຊິ່ງເປັນພື້ນຖານໃຫ້ແກ່ການຮ້ອງຂໍການໄຕ່ສວນຕາມຫຼັກ due process.

ກຳນົດເວລາດັ່ງກ່າວຈະບໍ່ຖືກນຳໃຊ້ ຖ້າທ່ານຖືກຂັດຂວາງຈາກການຍື່ນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ເນື່ອງຈາກ:
- ການໃຫ້ຂໍ້ມູນທີ່ຜິດພາດສະເພາະໃດໜຶ່ງໂດຍເຂດການສຶກສາ ຫຼື AEA ທີ່ໄດ້ແກ້ໄຂບັນຫາ ເຊິ່ງກາຍເປັນພື້ນຖານໃຫ້ແກ່ການຮ້ອງຂໍການໄຕ່ສວນຕາມຫຼັກ due process; ຫຼື
- ເຂດການສຶກສາ ຫຼື AEA ບໍ່ຍອມໃຫ້ຂໍ້ມູນແກ່ທ່ານເຊິ່ງເປັນຂໍ້ມູນທີ່ຕ້ອງໄດ້ສະໜອງໃຫ້ທ່ານຕາມຂໍ້ກຳນົດພາຍໃຕ້ກົດໝາຍ IDEA.

ສິດທິໃນລະຫວ່າງການໄຕ່ສວນ

ຝ່າຍຕ່າງໆໃນການໄຕ່ສວນມີສິດໃນການ:

- ມີທະນາຍຄວາມ ແລະ ບຸກຄົນອື່ນໄປນຳ ແລະ ໃຫ້ຄຳແນະນຳ, ເຊິ່ງເປັນຜູ້ທີ່ມີຄວາມຮູ້ພິເສດ ຫຼື ໄດ້ຮັບການຝຶກໃນເລື່ອງບັນຫາຂອງເດັກພິການ;
- ນຳສະເໜີຫຼັກຖານ ແລະ ຊ້ອງໜ້າ, ກວດເບິ່ງ, ແລະ ບັງຄັບໃຫ້ພະຍານມາໃຫ້ການ;
- ຫ້າມການນຳສະເໜີຫຼັກຖານຕ່າງໆໃນເວລາໄຕ່ສວນທີ່ບໍ່ໄດ້ເປີດເຜີຍຕໍ່ກັບຝ່າຍກົງກັນຂ້າມ ຢ່າງນ້ອຍ ຫ້າວັນລັດຖະການ ກ່ອນມື້ໄຕ່ສວນ;
- ໄດ້ຮັບບັນທຶກເປັນລາຍລັກອັກສອນ ຫຼືແບບອີເລັກໂທຣນິກ, ເປັນຄຳເວົ້າຂອງການໄຕ່ສວນ; ແລະ
- ໄດ້ຮັບບັນທຶກເປັນລາຍລັກອັກສອນ ຫຼືແບບອີເລັກໂທຣນິກຂອງຂໍ້ເທັດຈິງ ແລະ ຄຳຕັດສິນ.

ການເປີດເຜີຍຂໍ້ມູນເພີ່ມເຕີມ

ຢ່າງນ້ອຍຫ້າວັນລັດຖະການ ກ່ອນມື້ໄຕ່ສວນຕາມຫຼັກ due process, ທ່ານ ແລະ ທຸກຝ່າຍທີ່ກ່ຽວຂ້ອງຕ້ອງເປີດເຜີຍຕໍ່ກັນ ແລະກັນ ທຸກການປະເມີນຜົນທັງໝົດທີ່ເຮັດສຳເລັດພາຍມາຮອດມື້ວັນທີນັ້ນ ແລະ ຂໍ້ສະເໜີແນະອີງໃສ່ຜົນການປະເມີນເຫຼົ່ານັ້ນ ເຊິ່ງທ່ານ ຫຼື ຝ່າຍອື່ນຕັ້ງໃຈຈະນຳໃຊ້ໃນການໄຕ່ສວນ.

ຜູ້ພິພາກສາ ALJ ອາດຈະສະກັດກັ້ນຝ່າຍໃດໜຶ່ງທີ່ບໍ່ສາມາດປະຕິບັດຕາມຂໍ້ກຳນົດນີ້ ຈາກການນຳສະເໜີການປະເມີນຜົນ ຫຼື ການສະເໜີແນະທີ່ກ່ຽວຂ້ອງໃນເວລາໄຕ່ສວນ ໂດຍບໍ່ຕ້ອງມີການຍົນຍອມເຫັນດີຈາກອີກຝ່າຍໜຶ່ງ.

ສິດທິຂອງພໍ່ແມ່

ເມື່ອທ່ານເຂົ້າຮ່ວມໃນການໄຕ່ສວນ ທ່ານຕ້ອງໄດ້ຮັບສິດທິໃນການ:

- ເອົາລູກຂອງທ່ານ, ຜູ້ທີ່ເປັນຫົວເລື່ອງຂອງການໄຕ່ສວນ, ມາຮ່ວມນຳ;
- ເປີດການໄຕ່ສວນ ຕໍ່ກັບສາທາລະນະ; ແລະ
- ໄດ້ຮັບບັນທຶກຂອງການໄຕ່ສວນ ແລະ ຂໍ້ເທັດຈິງທີ່ຄົ້ນພົບ ແລະ ການຕັດສິນ ໂດຍບໍ່ເສຍຄ່າ.

ການໄຕ່ສວນຕາມຫຼັກ due process hearing ຕ້ອງໄດ້ຈັດຂຶ້ນຕາມເວລາ ແລະ ສະຖານທີ່ທີ່ໃຫ້ຄວາມສະດວກສະບາຍຢ່າງເໝາະສົມຕໍ່ກັບທ່ານ ແລະ ລູກຂອງທ່ານ.

ເຫດຜົນສຳລັບຄຳ ຕັບສິນຂອງຜູ້ ພິພາກສາ ALJ

ຜູ້ພິພາກສາ ALJ ຕ້ອງໄດ້ເຮັດການຕັດສິນບົນພື້ນຖານທີ່ອີງໃສ່ການກຳນົດຕັດສິນກ່ຽວກັບວ່າເດັກນ້ອຍໄດ້ຮັບການສຶກສາ FAPE ຫຼືບໍ່.

ໃນເລື່ອງທີ່ກ່າວຫາການລະເມີດດ້ານລະບຽບການຄຸ້ມຄອງ, ຜູ້ພິພາກສາ ALJ ອາດຈະຕັດສິນວ່າເດັກບໍ່ໄດ້ຮັບການສຶກສາ FAPE ພຽງແຕ່ຖ້າວ່າຄວາມພິການຜ່ອງດ້ານລະບຽບການ:

- ໄດ້ຂັດຂວາງສິດທິຂອງເດັກໃນການໄດ້ຮັບການສຶກສາ FAPE;
- ສະກັດກັ້ນຢ່າງໃຫຍ່ຫຼວງ ໂອກາດຂອງທ່ານໃນການມີສ່ວນຮ່ວມໃນຂະບວນການຕັດສິນກ່ຽວກັບການສະໜອງການສຶກສາ FAPE ໃຫ້ແກ່ລູກທ່ານ; ຫຼື
- ເຮັດໃຫ້ບໍ່ໄດ້ຮັບຜົນປະໂຫຍດດ້ານການສຶກສາ.

ບໍ່ມີຫຍັງໃນບົດບັນຍັດເຫຼົ່ານີ້ຈະໝາຍຄວາມວ່າ ຜູ້ພິພາກສາ ALJ ບໍ່ສາມາດອອກຄຳສັ່ງໃຫ້ເຂດການສຶກສາ ຫຼືອົງການ AEA ປະຕິບັດຕາມບັນດາຂໍ້ກຳນົດດ້ານລະບຽບການຂອງກົດໝາຍ IDEA.

ການຮ້ອງຂໍການໄຕ່ ສວນເພີ່ມເຕີມ

ບໍ່ມີຫຍັງຂັດຂວາງທ່ານຈາກການຍື່ນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process ອື່ນຕ່າງຫາກກ່ຽວກັບປະເດັນບັນຫາອື່ນທີ່ແຕກຕ່າງຈາກຄຳຮ້ອງຂໍການໄຕ່ສວນທີ່ໄດ້ຍື່ນແລ້ວ.

ຄຳຕັດສິນສຸດທ້າຍ ຂອງຜູ້ພິພາກສາ ALJ

ຄຳຕັດສິນທີ່ເຮັດໃນການໄຕ່ສວນແມ່ນສຸດທ້າຍ, ລວມທັງການໄຕ່ສວນທີ່ກ່ຽວຂ້ອງກັບລະບຽບຂັ້ນຕອນການປະຕິບັດວິໄນ, ເວັ້ນເສຍແຕ່ວ່າຝ່າຍໃດໜຶ່ງທີ່ເຂົ້າຮ່ວມໃນການໄຕ່ສວນອາດຈະອຸທອນຄຳຕັດສິນນັ້ນຫາສານ. ຝ່າຍທີ່ບໍ່ເຫັນດີນຳຄຳຕັດສິນຂອງຜູ້ພິພາກສາ ALJ ມີສິດດຳເນີນການຮ້ອງຟ້ອງທາງແພ່ງເພື່ອຄັດຄ້ານຄຳຕັດສິນຂອງການໄຕ່ສວນຕາມຫຼັກ due process. ການຮ້ອງຟ້ອງດັ່ງກ່າວອາຈະຮ້ອງຟ້ອງນຳສານລັດ ຫຼສານເຂດຂອງລັດຖະບານກາງ, ໂດຍບໍ່ສົນເລື່ອງຈຳນວນໃນການໂຕ້ແຍ້ງ.

ຜູ້ອື່ນທີ່ໄດ້ຮັບແຈ້ງກ່ຽວກັບຄຳຕັດສິນ

ພະແນກສຶກສາລັດໄອໂອວາ, ຫຼັງຈາກໄດ້ລຶບຖິ້ມຂໍ້ມູນລະບຸຕົນຕົວສ່ວນບຸກຄົນແລ້ວ, ຕ້ອງ:
- ສົ່ງສິ່ງທີ່ຄົ້ນພົບ ແລະ ຄຳຕັດສິນໃຫ້ແກ່ຄະນະທີ່ປຶກສາການສຶກສາພິເສດຂອງລັດ; ແລະ
- ເປີດເຜີຍສິ່ງທີ່ຄົ້ນພົບ ແລະ ຄຳຕັດສິນເຫຼົ່ານັ້ນຕໍ່ສາທາລະນະ.

ກຳນົດເວລາສຳລັບຄຳຕັດສິນຈາກການໄຕ່ສວນ

ພະແນກສຶກສາລັດໄອໂອວາຕ້ອງຮັບປະກັນວ່າ ບໍ່ກາຍ 45 ວັນຫຼັງຈາກການສິ້ນສຸດຂອງໄລຍະ 30 ວັນຕາມວັນປະຕິທິນ ສຳລັບກອງປະຊຸມແກ້ໄຂຂໍ້ຂັດແຍ້ງ ຫຼື ໄລຍະຂະຫຍາຍສຳລັບກອງປະຊຸມແກ້ໄຂຂໍ້ຂັດແຍ້ງ:
- ບັນລຸໄດ້ຄຳຕັດສິນສຸດທ້າຍ ໃນການໄຕ່ສວນ; ແລະ
- ສົ່ງສຳເນົາຄຳຕັດສິນໃຫ້ແຕ່ລະຝ່າຍທີ່ກ່ຽວຂ້ອງ.

ຜູ້ພິພາກສາ ALJ ອາດຈະອະນຸຍາດໃຫ້ຂະຫຍາຍເວລາກາຍ 45 ວັນຕາມວັນປະຕິທິນ ອີງຕາມຄຳຮ້ອງຂໍຂອງຝ່າຍໃດໜຶ່ງ.

ກົດການຕີຄວາມໝາຍ

ຄຳນິຍາມ ແລະ ຈຸດປະສົງ

ບໍ່ມີຂໍ້ກຳນົດໃດໃນກົດໝາຍ IDEA ທີ່ຫ້າມ ຫຼືຈຳກັດສິດທິ, ລະບຽບຂັ້ນຕອນ ແລະການແກ້ໄຂທີ່ມີໃຫ້ພາຍໃຕ້ລັດຖະທຳມະນູນຂອງສະຫະລັດ, ກົດໝາຍວ່າດ້ວຍຊາວອາເມລິກາທີ່ພິການ ປີ 1990, ຫົວບົດ V ຂອງກົດໝາຍວ່າດ້ວຍການຟື້ນຟູປີ 1973 (ຂໍ້ທີ 504), ຫຼືກົດໝາຍອື່ນໆຂອງລັດຖະບານກາງທີ່ໃຫ້ການປົກປ້ອງສິດທິຂອງເດັກພິການ.

ຂໍ້ຍົກເວັ້ນມີຄື ກ່ອນການຍື່ນການຮ້ອງຟ້ອງທາງແພ່ງພາຍໃຕ້ກົດໝາຍເຫຼົ່ານີ້ເພື່ອຊອກຫາການບັນເທົາທຸກທີ່ກໍ່ມີໃຫ້ພາຍໃຕ້ກົດໝາຍ IDEA, ລະບຽບຂັ້ນຕອນຕາມຫຼັກ due process ຕ້ອງຖືກນຳໃຊ້ໃນຂອບເຂດດຽວກັນທີ່ຈະຈຳຕ້ອງໃຊ້ ຖ້າຝ່າຍດັ່ງກ່າວຍື່ນການຮ້ອງຟ້ອງຕາມກົດໝາຍ IDEA.

ນີ້ໝາຍຄວາມວ່າທ່ານອາດຈະມີວິທີແກ້ໄຂທີ່ມີໃຫ້ພາຍໃຕ້ກົດໝາຍອື່ນທີ່ທັບຊ້ອນກັບວິທີແກ້ໄຂທີ່ມີໃຫ້ພາຍໃຕ້ກົດໝາຍ IDEA, ແຕ່ໂດຍທົ່ວໄປແລ້ວ, ເພື່ອໄດ້ຮັບການບັນເທົາທຸກ ພາຍໃຕ້ກົດໝາຍອື່ນເຫຼົ່ານັ້ນ, ທຳອິດທ່ານຕ້ອງໃຊ້ວິທີການແກ້ໄຂດ້ານບໍລິຫານປົກຄອງທີ່ມີໃຫ້ພາຍໃຕ້ກົດໝາຍ IDEA (ເຊັ່ນວ່າ ຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process, ກອງປະຊຸມແກ້ໄຂຂໍ້ຂັດແຍ້ງ ແລະລະບຽບຂັ້ນຕອນການໄຕ່ສວນຍຸຕິທຳຕາມຫຼັກ due process) ກ່ອນທີ່ຈະນຳສົ່ງເລື່ອງຫາສານໂດຍກົງ.

ຄ່າທຳນຽມທະນາຍຄວາມ

ການມອບຄ່າທຳນຽມທະນາຍຄວາມ

ໃນການຮ້ອງຟ້ອງ ຫຼືການໄຕ່ສວນທີ່ຍື່ນພາຍໃຕ້ກົດໝາຍ IDEA, ຕາມເສລີພາບໃນການຕັດສິນໃຈຂອງຕົນ, ສານອາດຈະມອບຄ່າທຳນຽມທະນາຍຄວາມທີ່ສົມເຫດສົມຜົນເປັນສ່ວນໜຶ່ງຂອງຄ່າໃຊ້ຈ່າຍໃຫ້ກັບຝ່າຍທີ່ຊະນະ.

ການກຳນົດຄ່າທຳນຽມທີ່ສົມເຫດສົມຜົນ

ຄ່າທຳນຽມຕ້ອງອີງໃສ່ອັດຕາຄ່າທຳນຽມທີ່ໃຊ້ກັນ:
- ໃນຊຸມຊົນບ່ອນທີ່ການດຳເນີນຄະດີ ຫຼືການໄຕ່ສວນເກີດຂຶ້ນ; ແລະ
- ອີງໃສ່ປະເພດ ແລະ ຄຸນນະພາບຂອງການບໍລິການທີ່ສະໜອງໃຫ້.

ບໍ່ມີເງິນໂບນັດ ຫຼື ຕົວຄູນໃດໆທີ່ຈະຖືກນຳໃຊ້ໃນການຄິດໄລ່ຄ່າທຳນຽມ.

ຄ່າທຳນຽມທີ່ຕ້ອງຈ່າຍໂດຍທະນາຍຄວາມຂອງທ່ານ

ຖ້າທະນາຍຄວາມຂອງທ່ານຍື່ນການຮ້ອງຮຽນຕາມຫຼັກ due process, ຕາມເສລີພາບໃນການຕັດສິນໃຈຂອງຕົນ, ສານອາດຈະມອບຄ່າທຳນຽມທະນາຍຄວາມທີ່ສົມເຫດສົມຜົນເປັນສ່ວນໜຶ່ງຂອງຄ່າໃຊ້ຈ່າຍໃຫ້ແກ່ອົງການ SEA, AEA ຫຼື LEA ທີ່ເປັນຝ່າຍຊະນະຄະດີ, ຖ້າສານເຫັນວ່າການຮ້ອງຮຽນຕາມຫຼັກ due process ແມ່ນ:
- ບໍ່ສຳຄັນ, ບໍ່ສົມເຫດສົມຜົນ ຫຼື ບໍ່ມີມູນຄວາມຈິງ; ຫຼື
- ສືບຕໍ່ສູ້ຄະດີຫຼັງຈາກທີ່ການຮ້ອງຟ້ອງຈະແຈ້ງວ່າບໍ່ສຳຄັນ, ບໍ່ສົມເຫດສົມຜົນ ຫຼື ບໍ່ມີມູນຄວາມຈິງ.

ຄ່າທຳນຽມທີ່ຕ້ອງຈ່າຍໂດຍທ່ານ ຫຼື ທະນາຍຄວາມຂອງທ່ານ

ຕາມເສລີພາບໃນການຕັດສິນໃຈ, ສານອາດຈະມອບຄ່າທຳນຽມທະນາຍຄວາມທີ່ສົມເຫດສົມຜົນເປັນສ່ວນໜຶ່ງຂອງຄ່າໃຊ້ຈ່າຍໃຫ້ແກ່ອົງການ SEA, AEA ຫຼື LEA ທີ່ເປັນຝ່າຍຊະນະ, ຖ້າຄຳຮ້ອງຂໍການໄຕ່ສວນການຮ້ອງຮຽນຕາມຫຼັກ due process ຂອງທ່ານ ຫຼືໃນເວລາຕໍ່ມາ ຄະດີໃນຊັ້ນສານໃນ ຖືກນຳສະເໜີເພື່ອຈຸດປະສົງທີ່ບໍ່ເໝາະສົມ ເຊັ່ນວ່າ:

- ເພື່ອລົບກວນ;
- ເພື່ອກໍ່ໃຫ້ເກີດການຊັກຊ້າທີ່ບໍ່ຈຳເປັນ; ຫຼື
- ເພີ່ມຄ່າໃຊ້ຈ່າຍຂອງການດຳເນີນຄະດີ ຫຼືການໄຕ່ສວນໂດຍບໍ່ຈຳເປັນ.

ຄ່າທຳນຽມທີ່ຖືກຫ້າມ ແລະຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ

ຄ່າທຳນຽມທະນາຍຄວາມ ແລະຄ່າໃຊ້ຈ່າຍທີ່ກ່ຽວຂ້ອງອາດຈະບໍ່ຖືກຈ່າຍແທນຄືນສຳລັບການບໍລິການທີ່ສະໜອງໃຫ້ຫຼັງຈາກເວລາການສະເໜີການແກ້ໄຂເປັນລາຍລັກອັກສອນໃຫ້ແກ່ທ່ານ, ຖ້າ:

- ການສະເໜີແກ້ໄຂຂໍ້ຂັດແຍ້ງຖືກເຮັດພາຍໃນເວລາທີ່ກຳນົດໄວ້ໃນກົດລະບຽບຂໍ້ 68 ຂອງກົດລະບຽບຂອງລັດຖະບານກາງ ວ່າດ້ວຍລະບຽບຂັ້ນຕອນທາງແພ່ງ; ຫຼື
- ໃນກໍລະນີຂອງການດຳເນີນຄະດີດ້ານການປົກຄອງບໍລິຫານ, ເວລາໃດກໍ່ໄດ້ທີ່ຫຼາຍກວ່າ 10 ວັນກ່ອນການດຳເນີນຄະດີຈະເລີ່ມຂຶ້ນ;
- ການສະເໜີແກ້ໄຂຂໍ້ຂັດແຍ້ງບໍ່ຖືກຍອມຮັບເອົາພາຍໃນ 10 ວັນຕາມເວລາປະຕິທິນ; ແລະ
- ສານ ຫຼືຜູ້ພິພາກສາ ALJ ພົບວ່າການບັນເທົາທຸກທີ່ໃນສຸດທ້າຍໄດ້ຮັບໂດຍພໍ່ແມ່ເດັກ ແມ່ນບໍ່ເປັນປະ�โยດຕໍ່ກັບພໍ່ແມ່ເດັກຫຼາຍກວ່າການສະເໜີໃຫ້ແກ້ໄຂຂໍ້ຂັດແຍ້ງ.

ຄ່າທຳນຽມທະນາຍຄວາມອາດຈະບໍ່ໄດ້ຮັບການຕັດສິນມອບໃຫ້ສຳລັບກອງປະຊຸມຂອງທີມ IEP Team, ເວັ້ນເສຍແຕ່ວ່າກອງປະຊຸມດັ່ງກ່າວຖືກຈັດຂຶ້ນເນື່ອງມາຈາກການດຳເນີນຄະດີດ້ານການປົກຄອງບໍລິຫານ ຫຼືການດຳເນີນຄະດີທາງສານ.

ກອງປະຊຸມແກ້ໄຂຂໍ້ຂັດແຍ້ງຈະບໍ່ຖືວ່າເປັນກອງປະຊຸມທີ່ຈັດຂຶ້ນອັນເປັນຜົນມາຈາກການໄຕ່ສວນທາງການບໍລິຫານປົກຄອງ ຫຼືການດຳເນີນຄະດີທາງສານ ຫຼືການໄຕ່ສວນທາງການບໍລິຫານປົກຄອງ ແລະ ຄ່າທຳນຽມທະນາຍຄວາມອາດຈະບໍ່ໄດ້ຮັບການຕັດສິນມອບໃຫ້.

ຂໍ້ຍົກເວັ້ນຕໍ່ກັບຂີດຈຳກັດດ້ານການແກ້ໄຂ

ການມອບຄ່າທຳນຽມທະນາຍຄວາມ ແລະຄ່າໃຊ້ຈ່າຍທີ່ກ່ຽວຂ້ອງອາດຈະຖືກຕັດສິນມອບໃຫ້ແກ່ພໍ່ແມ່ເດັກຜູ້ທີ່:

- ແມ່ນຝ່າຍຊະນະ.
- ມີການອະທິບາຍເຫດຜົນຢ່າງໜັກແໜ້ນໃນການປະຕິເສດການສະເໜີແກ້ໄຂຂໍ້ຂັດແຍ້ງ.

ການຫຼຸດຄ່າທຳນຽມທະນາຍຄວາມ

ຄ່າທຳນຽມທະນາຍຄວາມອາດຈະຖືກຫຼຸດລົງ ຖ້າສານພົບວ່າ:

- ທ່ານ, ຫຼືທະນາຍຄວາມຂອງທ່ານ, ຍືດເຍື້ອແກ່ຍາວການແກ້ໄຂຂໍ້ຂັດແຍ້ງສຸດທ້າຍ ຢ່າງບໍ່ສົມເຫດສົມຜົນ;
- ຈຳນວນຄ່າທຳນຽມຫາຍອັດຕາຄ່າທຳນຽມລາຍຊົ່ວໂມງທີ່ນຳໃຊ້ກັນທົ່ວໄປໃນຊຸມຊົນ ຢ່າງບໍ່ມີເຫດມີຜົນ;
- ເວລາທີ່ໃຊ້ ແລະ ການບໍລິການດ້ານກົດໝາຍທີ່ສະໜອງໃຫ້ແມ່ນຫຼາຍເກີນໄປ ທຽບກັບເນື້ອໃນຂອງການຮ້ອງຟ້ອງ ຫຼືການຕັດສິນຄະດີທີ່ຄວນເປັນ; ຫຼື
- ທະນາຍຄວາມທີ່ຕ່າງໜ້າໃຫ້ພໍ່ແມ່ເດັກບໍ່ໄດ້ສະໜອງໃຫ້ເຂດການສຶກສາ ຫຼືອົງການ AEA ຂໍ້ມູນທີ່ຄົບຖ້ວນເໝາະສົມ ໃນແຈ້ງການຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process.

ຂໍ້ຍົກເວັ້ນຕໍ່ກັບການຫຼຸດຄ່າທຳນຽມ

ຂໍ້ກຳນົດກ່ຽວກັບການຫຼຸດຄ່າທຳນຽມທະນາຍຄວາມຈະບໍ່ຖືກນຳໃຊ້ ຖ້າສານເຫັນວ່າອົງການ LEA, AEA ຫຼື SEA:

- ແກ່ຍາວການແກ້ໄຂສຸດທ້າຍຂອງການຮ້ອງຟ້ອງຢ່າງບໍ່ມີເຫດຜົນ
- ມີການລະເມີດຂໍ້ 615 ຂອງກົດໝາຍ IDEA, ຂໍ້ລະບຽບການປົກປ້ອງຄຸ້ມຄອງຕາມກົດໝາຍ IDEA.

ໝາຍເຫດ:

ການປະພຶດ ແລະ ລະບຽບຂັ້ນຕອນການປະຕິບັດວິໄນ

ສິດອຳນາດຂອງພະນັກງານໂຮງຮຽນ

ການຕັດສິນກຳນົດ ຕາມແຕ່ລະກໍລະນີ

ພະນັກງານໂຮງຮຽນອາດຈະພິຈາລະນາເຖິງສະພາບການສະເພາະຂອງແຕ່ລະກໍລະນີຕົວຈິງໃນ ເວລາຕັດສິນວ່າແມ່ນຫຼືບໍ່ທີ່ການປ່ຽນແປງການຈຸເຂົ້າຮຽນ ໄດ້ຖືກດຳເນີນຢ່າງຖືກຕ້ອງກັບຂໍ້ກຳນົດທີ່ກ່ຽວຂ້ອງກັບລະບຽບຂັ້ນຕອນການປະຕິບັດວິໄນຕໍ່ໄປນີ້, ແລະ ເໝາະສົມສຳລັບເດັກພິການທີ່ລະເມີດກົດລະບຽບການປະພຶດຂອງນັກຮຽນຢູ່ໃນໂຮງຮຽນ.

ທົ່ວໄປ

ໃນຂອບເຂດທີ່ພວກເຂົາກໍ່ດຳເນີນການເຊັ່ນດຽວກັນກັບເດັກທີ່ບໍ່ພິການ, ພະນັກງານໂຮງຮຽນອາດຈະ, ໂດຍບໍ່ເກີນ 10 ວັນເຂົ້າຮຽນຕິດຕໍ່ກັນ, ຍ້າຍເດັກພິການທີ່ລະເມີດກົດລະບຽບການປະພຶດຂອງນັກຮຽນອອກຈາກການບັນຈຸເຂົ້າຮຽນປະຈຸບັນຂອງຜູ້ກ່ຽວໄປບ່ອນຮຽນແທນຊົ່ວຄາວທີ່ເໝາະສົມ, ຫ້ອງຮຽນອື່ນ ຫຼື ໃຫ້ພັກການຮຽນຊົ່ວຄາວ.

ພະນັກງານໂຮງຮຽນອາດຈະກຳນົດການຍ້າຍເພີ່ມເຕີມເຊິ່ງບໍ່ການ 10 ວັນເຂົ້າຮຽນຕິດຕໍ່ກັນ ຕໍ່ກັບເດັກດັ່ງກ່າວໃນປີຮຽນດຽວກັນສຳລັບການປະພຶດຜິດອື່ນຕ່າງຫາກ ຕາບໃດທີ່ການຍ້າຍດັ່ງກ່າວບໍ່ເຮັດໃຫ້ເກີດການປ່ຽນແປງການບັນຈຸເຂົ້າຮຽນ (ເບິ່ງນິຍາມຄວາມໃນຫົວຂໍ້ "ການປ່ຽນແປງການບັນຈຸເຂົ້າຮຽນເນື່ອງຈາກການຍົກຍ້າຍທີ່ກ່ຽວຂ້ອງກັບການປະຕິບັດວິໄນ").

ເມື່ອເດັກພິການໄດ້ຖືກຍົກຍ້າຍອອກຈາກບ່ອນຮຽນປະຈຸບັນຂອງຜູ້ກ່ຽວເປັນເວລາທັງໝົດ 10 ວັນເຂົ້າຮຽນໃນປີຮຽນດຽວກັນ, ເຂດການສຶກສາ ຕ້ອງ, ໃນໄລຍະເວລາຕໍ່ມາຫຼັງຈາກການຍົກຍ້າຍໃນປີຮຽນນັ້ນ, ສະໜອງການບໍລິການໃນຂອບເຂດທີ່ກຳນົດໃຫ້ຂ້າງລຸ່ມ ພາຍໃຕ້ຫົວຂໍ້ຍ່ອຍ "ການບໍລິການ."

ສິດອຳນາດເພີ່ມເຕີມ

ຖ້າການປະພຶດທີ່ລະເມີດກົດລະບຽບການປະພຶດຂອງນັກຮຽນ ບໍ່ແມ່ນປະກົດການສະແດງອອກຂອງຄວາມພິການຂອງເດັກ (ເບິ່ງຫົວຂໍ້ ການກຳນົດປະກົດການສະແດງອອກ, ຂ້າງລຸ່ມ) ແລະ ການປ່ຽນແປງການບັນຈຸເຂົ້າຮຽນເນື່ອງຈາກການຜິດວິໄນອາດຈະການ 10 ວັນເຂົ້າຮຽນຕິດຕໍ່ກັນ, ພະນັກງານໂຮງຮຽນອາດຈະນຳໃຊ້ລະບຽບການດ້ານວິໄນຕໍ່ກັບເດັກທີ່ພິການນັ້ນໃນແບບດຽວກັນ ແລະ ເປັນໄລຍະເວລາດຽວກັນກັບທີ່ໃຊ້ກັບເດັກທີ່ບໍ່ພິການ, ຍົກເວັ້ນກໍລະນີທີ່ໂຮງຮຽນຕ້ອງໄດ້ສະໜອງການບໍລິການໃຫ້ແກ່ເດັກນັ້ນ ຕາມທີ່ອະທິບາຍໄວ້ຢູ່ຂ້າງລຸ່ມ ໃນຫົວຂໍ້ "ການບໍລິການ."

ທີມງານ IEP ຂອງເດັກເປັນຜູ້ຕັດສິນກຳນົດສະຖານທີ່ຮຽນແທນຊົ່ວຄາວສຳລັບການບໍລິການດັ່ງກ່າວ.

ການບໍລິການ

ຫຼາຍກວ່າ 10 ວັນ

ເດັກພິການຜູ້ທີ່ຖືກຍ້າຍອອກຈາກບ່ອນຮຽນປະຈຸບັນຂອງເດັກເປັນເວລາຫຼາຍກວ່າ 10 ວັນເຂົ້າຮຽນ ແລະ ພຶດປະຕິກຳບໍ່ແມ່ນການປະກົດການສະແດງອອກຂອງຄວາມພິການຂອງເດັກ (ເບິ່ງຫົວຂໍ້ຍ່ອຍ "ການກຳນົດປະກົດການສະແດງອອກ") ຫຼື ຜູ້ທີ່ຖືກຍ້າຍອອກພາຍໃຕ້ສະພາບການພິເສດ (ເບິ່ງຫົວຂໍ້ຍ່ອຍ "ສະພາບການພິເສດ") ຕ້ອງ:

- ສືບຕໍ່ໄດ້ຮັບການບໍລິການດ້ານການສຶກສາ (ມີການສຶກສາພາກລັດທີ່ເໝາະສົມໂດຍບໍ່ເສຍຄ່າທີ່ມີໃຫ້), ເພື່ອເຮັດໃຫ້ເດັກສາມາດສືບຕໍ່ເຂົ້າຮ່ວມໃນຫຼັກສູດການສຶກສາທົ່ວໄປ ເຖິງແມ່ນວ່າຈະຢູ່ໃນບ່ອນຮຽນອື່ນກໍ່ຕາມ (ນັ້ນອາດຈະແມ່ນສະຖານທີ່ຮຽນແທນຊົ່ວຄາວ), ແລະ ເພື່ອກ້າວໄປສູ່ການຕອບສະໜອງໄດ້ເປົ້າໝາຍທີ່ວາງໄວ້ໃນໂປຣແກຣມ IEP ຂອງເດັກ; ແລະ
- ໄດ້ຮັບ, ຕາມຄວາມເໝາະສົມ, ການປະເມີນພຶດຕິກຳ, ແລະບໍລິການແຊກແຊງຊ່ວຍເຫຼືອເພື່ອປັບປຸງພຶດຕິກຳ ແລະ ການດັດແປງແກ້ໄຂ ເຊິ່ງຖືກອອກແບບມາເພື່ອແກ້ໄຂການລະເມີດດ້ານພຶດຕິກຳເພື່ອບໍ່ໃຫ້ມັນເກີດຂຶ້ນອີກ.

ນ້ອຍກວ່າ 10 ວັນ

ຫຼັງຈາກເດັກພິການໄດ້ຖືກຍ້າຍອອກຈາກບ່ອນຮຽນປະຈຸບັນຂອງຜູ້ກ່ຽວເປັນເວລາ 10 ວັນເຂົ້າຮຽນໃນປີຮຽນດຽວກັນ, ແລະ ຖ້າການຍ້າຍໃນປະຈຸບັນແມ່ນເປັນເວລາ 10 ວັນເຂົ້າຮຽນຕິດຕໍ່ກັນ ຫຼືນ້ອຍກວ່າ ແລະຖ້າການຍ້າຍນັ້ນບໍ່ແມ່ນການປ່ຽນແປງການບັນຈຸເຂົ້າຮຽນ (ເບິ່ງນິຍາມຄວາມໝາຍຂ້າງລຸ່ມ), ຈາກນັ້ນ ໂດຍປຶກສາສາຫາລືຢ່າງນ້ອຍກັບໜຶ່ງໃນບັນດາຄູອາຈານຂອງເດັກ, ພະນັກງານໂຮງຮຽນຈະຕັດສິນກຳນົດຂອບເຂດທີ່ຕ້ອງການການບໍລິການເພື່ອໃຫ້ເດັກສາມາດສືບຕໍ່ເຂົ້າຮ່ວມໃນຫຼັກສູດການສຶກສາທົ່ວໄປ, ເຖິງແມ່ນວ່າຈະຢູ່ໃນບ່ອນຮຽນອື່ນກໍ່ຕາມ, ແລະ ເພື່ອກ້າວໄປສູ່ການຕອບສະໜອງໄດ້ເປົ້າໝາຍທີ່ວາງໄວ້ໃນໂປຣແກຣມການສຶກສາ IEP ຂອງເດັກ.

ຖ້າການຍ້າຍແມ່ນການປ່ຽນແປງການບັນຈຸເຂົ້າຮຽນ (ເບິ່ງຫົວຂໍ້ "ການປ່ຽນແປງການບັນຈຸເຂົ້າຮຽນເນື່ອງຈາກການຍ້າຍທີ່ກ່ຽວຂ້ອງກັບການປະຕິບັດວິໄນ"), ທີມງານ IEP ຂອງເດັກ ເປັນຜູ້ຕັດສິນກຳນົດການບໍລິການທີ່ເໝາະສົມທີ່ເຮັດໃຫ້ເດັກສາມາດສືບຕໍ່ເຂົ້າຮ່ວມໃນໜ້າສູດການສຶກສາທົ່ວໄປ ເຖິງແມ່ນວ່າຈະຢູ່ໃນບ່ອນຮຽນອື່ນກໍ່ຕາມ, ແລະ ເພື່ອກ້າວໄປສູ່ການຕອບສະໜອງໄດ້ເປົ້າໝາຍທີ່ວາງໄວ້ໃນໂປຣແກຣມການສຶກສາ IEP ຂອງເດັກ.

ການກຳນົດປະກົດການສະແດງອອກ

ຄຳນິຍາມ

ພາຍໃນ 10 ເຂົ້າຮຽນຫຼັງຈາກການຕັດສິນປ່ຽນແປງການບັນຈຸເຂົ້າຮຽນຂອງເດັກພິການເນື່ອງຈາກການລະເມີດກົດລະບຽບການປະພຶດຂອງນັກຮຽນ (ຍົກເວັ້ນການຍ້າຍບ່ອນຮຽນທີ່ເປັນເວລາ 10 ວັນເຂົ້າຮຽນຕິດຕໍ່ກັນ ຫຼືນ້ອຍກວ່າ ແລະ ບໍ່ແມ່ນການປ່ຽນແປງການບັນຈຸເຂົ້າຮຽນ), ເຂດການສຶກສາ, ທ່ານ ແລະ ສະມາຊິກທີ່ກ່ຽວຂ້ອງຂອງທີມ IEP (ຕາມທີ່ກຳນົດໂດຍທ່ານ ແລະເຂດການສຶກສາ) ຕ້ອງທົບທວນເບິ່ງທຸກຂໍ້ມູນທີ່ກ່ຽວຂ້ອງໃນແຟ້ມປະຫວັດນັກຮຽນ ລວມທັງໂປຣແກຣມ IEP ຂອງເດັກ, ຂໍ້ສັງເກດຂອງຄູອາຈານ, ແລະ ທຸກຂໍ້ມູນທີ່ກ່ຽວຂ້ອງທີ່ສະໜອງໃຫ້ໂດຍທ່ານ ເພື່ອຕັດສິນກຳນົດວ່າ:

- ການປະພຶດຜິດທີ່ເວົ້າເຖິງແມນເກີດຈາກ ຫຼື ມີຄວາມກ່ຽວພັນໂດຍກົງ ຫຼືເປັນຜົນມາຈາກຄວາມພິການຂອງເດັກແມ່ນຫຼືບໍ່; ຫຼື
- ການປະພຶດຜິດທີ່ເວົ້າເຖິງນັ້ນແມ່ນຜົນໂດຍກົງຂອງຄວາມລົ້ມເຫຼວຂອງທາງເຂດການສຶກສາໃນການຈັດຕັ້ງປະຕິບັດໂປຣແກຣມການສຶກສາ IEP ຂອງເດັກ.

ປະກົດການສະແດງອອກອັນເປັນຜົນຈາກຄວາມພິການ

ຖ້າການທົບທວນກຳນົດອອກມາວ່າໜຶ່ງໃນບັນດາເງື່ອນໄຂເຫຼົ່ານັ້ນແມ່ນຖືກຕ້ອງ, ການປະພຶດຕ້ອງຖືກກຳນົດວ່າເປັນປະກົດການສະແດງອອກຂອງຄວາມພິການຂອງເດັກ.

ຜົນຈາກຄວາມລົ້ມເຫຼວໃນການຈັດຕັ້ງປະຕິບັດ IEP

ຖ້າການທົບທວນກຳນົດອອກມາວ່າການປະພຶດທີ່ເວົ້າເຖິງນັ້ນແມ່ນຜົນໂດຍກົງຂອງຄວາມລົ້ມເຫຼວໃນການຈັດຕັ້ງປະຕິບັດ IEP, ເຂດການສຶກສາ ຕ້ອງດຳເນີນການໃນທັນທີເພື່ອແກ້ໄຂຄວາມບົກຜ່ອງເຫຼົ່ານັ້ນ.

ການດຳເນີນການເມື່ອແມ່ນຜົນຂອງການສະແດງອອກຂອງຄວາມພິການ

ຖ້າການທົບທວນກຳນົດອອກມາວ່າການປະພຶດດັ່ງກ່າວແມ່ນປະກົດການສະແດງອອກຂອງຄວາມພິການຂອງເດັກ, ທີມ IEP ຕ້ອງດຳເນີນໜຶ່ງໃນສອງມາດຕະການດັ່ງນີ້:

- ດຳເນີນການປະເມີນການປະພຶດທີ່ປະຕິບັດໄດ້, ເວັ້ນເສຍແຕ່ວ່າ ທາງໂຮງຮຽນໄດ້ດຳເນີນການປະເມີນການປະພຶດດັ່ງກ່າວມາແລ້ວ ກ່ອນທີ່ຈະມີການປະພຶດດັ່ງກ່າວ ທີ່ສົ່ງຜົນໃຫ້ມີການປ່ຽນແປງການບັນຈຸເຂົ້າຮຽນ, ແລະ ຈັດຕັ້ງປະຕິບັດແຜນການຊ່ວຍເຫຼືອການປະພຶດສຳລັບເດັກດັ່ງກ່າວ; ຫຼື
- ຖ້າແຜນການຊ່ວຍເຫຼືອການປະພຶດໄດ້ຖືກພັດທະນາຂຶ້ນແລ້ວ, ໃຫ້ທົບທວນຄືນແຜນການຊ່ວຍເຫຼືອການປະພຶດ, ແລະ ປັບປຸງແກ້ໄຂແຜນການນັ້ນ, ຕາມຄວາມຈຳເປັນ, ເພື່ອແກ້ໄຂການປະພຶດດັ່ງກ່າວ.

ຍົກເວັ້ນກໍລະນີທີ່ໄດ້ອະທິບາຍຢູ່ຂ້າງລຸ່ມ ໃນຫົວຂໍ້ ສະພາບການພິເສດ, ເຂດການສຶກສາຕ້ອງສົ່ງເດັກກັບຄືນເຂົ້າບ່ອນຮຽນເດີມ ທີ່ເດັກຖືກໂຍກຍ້າຍອອກ, ເວັ້ນເສຍແຕ່ວ່າພໍ່ແມ່ເດັກ ແລະເຂດການສຶກສາຕົກລົງເຫັນດີນຳການປ່ຽນແປງການບັນຈຸເຂົ້າຮຽນ ໃນຖານະເປັນສ່ວນໜຶ່ງຂອງການປັບປຸງແກ້ໄຂແຜນການຊ່ວຍເຫຼືອການປະພຶດ.

ສະພາບການພິເສດ

ເຖິງແມ່ນວ່າການປະພຶດຈະແມ່ນປະກົດການສະແດງອອກຂອງຄວາມພິການຂອງເດັກຫຼືບໍ່ກໍ່ຕາມ, ພະນັກງານໂຮງຮຽນອາດຈະໂຍກຍ້າຍນັກຮຽນໄປສູ່ສະຖານທີ່ຮຽນແທນຊົ່ວຄາວໃດໜຶ່ງ (ເຊິ່ງກຳນົດໂດຍທີມ IEP ຂອງເດັກ) ເປັນເວລາສູງເຖິງ 45 ວັນເຂົ້າຮຽນ, ຖ້າເດັກ:

1. ພົກພາອາວຸດໃດໜຶ່ງ (ເບິ່ງຄຳນິຍາມຂ້າງລຸ່ມ) ມາໂຮງຮຽນ ຫຼື ມີອາວຸດເມື່ອເວລາເຂົ້າຮຽນ, ຢູ່ເຂດສະຖານທີ່ໂຮງ ຮຽນ, ຫຼື ຢູ່ໃນງານພິທີຕ່າງໆຂອງໂຮງຮຽນ ພາຍໃຕ້ອຳນາດຕັດສິນຂອງພະແນກສຶກສາລັດໄອໂອວາ ຫຼື ເຂດການສຶກສາໃດໜຶ່ງ;
2. ມີ ຫຼື ນຳໃຊ້ຢາເສບຕິດຜິດກົດໝາຍໂດຍເຈດຕະນາ (ເບິ່ງຄຳນິຍາມຂ້າງລຸ່ມ), ຫຼື ຂາຍ ຫຼື ຊັກຊວນການຂາຍສານເສບຕິດຕ້ອງຫ້າມໃດໜຶ່ງ, (ເບິ່ງຄຳນິຍາມຂ້າງລຸ່ມ), ໃນເວລາເຂົ້າໂຮງຮຽນ, ຢູ່ເຂດສະຖານທີ່ໂຮງຮຽນ, ຫຼືຢູ່ໃນງານ ພິທີຂອງໂຮງຮຽນໃດໜຶ່ງທີ່ຢູ່ພາຍໃຕ້ອຳນາດຕັດສິນຂອງພະແນກສຶກສາລັດໄອໂອວາ ຫຼືເຂດການສຶກສາໃດໜຶ່ງ; ຫຼື
3. ເຮັດໃຫ້ຜູ້ອື່ນບາດເຈັບທາງຮ່າງກາຍຢ່າງຮຸນແຮງ (ເບິ່ງຄຳນິຍາມຂ້າງລຸ່ມ) ໃນເວລາເຂົ້າໂຮງຮຽນ, ຢູ່ເຂດສະຖານທີ່

ໂຮງຮຽນ, ຫຼືຢູ່ໃນງານ ພິທີຂອງໂຮງຮຽນໃດໜຶ່ງທີ່ຢູ່ພາຍໃຕ້ອຳນາດຕັດສິນຂອງພະແນກສຶກສາລັດໄອໂອວາ ຫຼືເຂດການສຶກສາໃດໜຶ່ງ.

ຄຳນິຍາມຂອງສະພາບການພິເສດ

- "ສານຕ້ອງຫ້າມ" ໝາຍເຖິງຢາ ຫຼື ສານເສບຕິດອື່ນໆທີ່ກຳນົດໄວ້ພາຍໃຕ້ຕາຕະລາງ I, II, III, IV, ຫຼື V ໃນໝວດທີ 202(c) ຂອງກົດໝາຍວ່າດ້ວຍສານຕ້ອງຫ້າມ (21 U.S.C. 812(c)).
- ຢາຜິດກົດໝາຍ" ໝາຍເຖິງສານເສບຕິດຕ້ອງຫ້າມໃດໜຶ່ງ; ແຕ່ບໍ່ລວມເອົາສານຕ້ອງຫ້າມທີ່ມີໄວ້ຄອບຄອງ ຫຼື ນຳໃຊ້ຢ່າງຖືກກົດໝາຍ ພາຍໃຕ້ການຄຸ້ມຄອງດູແລຂອງຜູ້ຊ່ຽວຊານດ້ານສຸຂະພາບທີ່ມີໃບອະນຸຍາດ ຫຼືທີ່ມີໄວ້ຄອບຄອງ ຫຼືນຳໃຊ້ຢ່າງຖືກກົດໝາຍ ພາຍໃຕ້ສິດອຳນາດອື່ນໆຕາມກົດໝາຍນັ້ນ ຫຼື ພາຍໃຕ້ຂໍ້ບັນຍັດອື່ນໆຂອງກົດໝາຍລັດຖະບານກາງ.
- "ການບາດເຈັບທາງຮ່າງກາຍທີ່ຮຸນແຮງ" ມີຄວາມໝາຍຕາມສຳນວນ "ການບາດເຈັບທາງຮ່າງກາຍທີ່ຮຸນແຮງ" ທີ່ຢູ່ໃນວັກທີ (3) ຂອງໝວດຍ່ອຍ (h) ໃນໝວດທີ 1365 ຂອງຫົວບົດ 18, ໃນປະມວນກົດໝາຍສະຫະລັດ.
- "ອາວຸດ" ມີຄວາມໝາຍຕາມສຳນວນ "ອາວຸດອັນຕະລາຍ" ທີ່ຢູ່ໃນວັກ (2) ຂອງໝວດຍ່ອຍ (g) ໃນໝວດທີ 930 ຂອງຫົວບົດທີ 18, ປະມວນກົດໝາຍສະຫະລັດ.

ການແຈ້ງບອກ

ໃນວັນທີທີ່ເຂດການສຶກສາຕັດສິນໃຈເຮັດການຍ້າຍທີ່ເປັນການປ່ຽນແປງການບັນຈຸເຂົ້າຮຽນຂອງລູກທ່ານເນື່ອງຈາກການລະເມີດກົດລະບຽບການປະພຶດຂອງນັກຮຽນ, ທາງເຂດສຶກສາ**ຕ້ອງ**ແຈ້ງບອກທ່ານກ່ຽວກັບການຕັດສິນໃຈນັ້ນ ແລະ ສະໜອງແຈ້ງການກ່ຽວກັບລະບຽບການປົກປ້ອງຄຸ້ມຄອງໃຫ້ແກ່ທ່ານ.

ການອຸທອນ

ທົ່ວໄປ

ທ່ານອາດຈະຍື່ນການຮ້ອງຮຽນຕາມຫຼັກ due process ໄດ້ (ເບິ່ງຫົວຂໍ້ "ການຮ້ອງຮຽນຕາມຫຼັກ Due Process") ເພື່ອຮ້ອງຂໍໃຫ້ມີການໄຕ່ສວນຕາມຫຼັກ due process ຖ້າທ່ານບໍ່ເຫັນດີນຳ:

- ການຕັດສິນກ່ຽວກັບການບັນຈຸເຂົ້າຮຽນທີ່ຖືກເຮັດພາຍໃຕ້ຂໍ້ກຳນົດດ້ານການປະຕິບັດວິໄນ ເຫຼົ່ານີ້; ຫຼື
- ການກຳນົດປະກົດການສະແດງອອກທີ່ໄດ້ອະທິບາຍຂ້າງເທິງ.

ເຂດການສຶກສາອາດຈະຍື່ນການຮ້ອງຮຽນຕາມຫຼັກ due process ເພື່ອຮ້ອງຂໍການໄຕ່ສວນຕາມຫຼັກ due process ຖ້າເຂດການສຶກສາເຊື່ອວ່າການຮັກສາການບັນຈຸເຂົ້າຮຽນໃນປະຈຸບັນຂອງລູກທ່ານແມ່ນເປັນໄປໄດ້ຫຼາຍທີ່ສຸດທີ່ຈະສົ່ງຜົນໃຫ້ເກີດການບາດເຈັບຕໍ່ກັບລູກຂອງທ່ານ ຫຼືຕໍ່ກັບນັກຮຽນອື່ນ.

ສິດອຳນາດຂອງ ALJ

ພິພາກສາ ALJ ຕ້ອງດຳເນີນການໄຕ່ສວນຕາມຫຼັກ due process ແລະ ອອກຄຳຕັດສິນ. ຜູ້ພິພາກສາ ALJ ອາດຈະ:

1. ສົ່ງເດັກທີ່ພິການກັບຄືນບ່ອນຮຽນເດີມທີ່ເດັກຖືກໂຍກຍ້າຍອອກ ຖ້າຜູ້ພິພາກສາ ALJ ກຳນົດວ່າການຍ້າຍດັ່ງກ່າວແມ່ນການລະເມີດຂໍ້ກຳນົດທີ່ໄດ້ອະທິບາຍໃນຫົວຂໍ້ ສິດອຳນາດຂອງພະນັກງານໂຮງຮຽນ, ຫຼື ກຳນົດວ່າການປະພຶດຂອງເດັກແມ່ນປະກົດການສະແດງອອກຂອງຄວາມພິການຂອງເດັກ; ຫຼື
2. ສັ່ງໃຫ້ປ່ຽນແປງການບັນຈຸເຂົ້າຮຽນຂອງເດັກພິການໄປເຂົ້າຮຽນຢູ່ສະຖານທີ່ຮຽນແທນຊົ່ວຄາວທີ່ສະເໝາະສົມໃດໜຶ່ງ ເປັນເວລາບໍ່ເກີນ 45 ວັນເຂົ້າຮຽນ ຖ້າຜູ້ພິພາກສາ ALJ ກຳນົດວາການຮັກສາໄວ້ບ່ອນຮຽນໃນປະຈຸບັນຂອງເດັກຈະມີແນວโน้มໃນການເຮັດໃຫ້ເກີດການບາດເຈັບຕໍ່ກັບຕົວເດັກ ຫຼື ຕໍ່ກັບຜູ້ອື່ນ.
3. ລະບຽບຂັ້ນຕອນຂອງການໄຕ່ສວນເຫຼົ່ານີ້ອາດຈະນຳໃຊ້ຄົນອີກ, ຖ້າເຂດການສຶກສາເຊື່ອວ່າການສົ່ງເດັກກັບຄືນບ່ອນຮຽນເດີມແມ່ນມີແນວโน้มจะสๆ ຜົນໃຫ້ເກີດການບາດເຈັບຕໍ່ກັບຕົວ ເດັກ ຫຼື ຕໍ່ກັບຜູ້ອື່ນ.

ຂັ້ນຕອນການໄຕ່ສວນຕາມຫຼັກ Due Process ແບບເລັ່ງລັດ

ໃນທຸກໆ ເມື່ອທີ່ພໍ່ແມ່ເດັກ ຫຼື ເຂດການສຶກສາຍື່ນຄຳຮ້ອງຮຽນ due process ເພື່ອຮ້ອງຂໍໃຫ້ມີການພິຈາລະນາໄຕ່ສວນ, ການໄຕ່ສວນຕ້ອງໄດ້ຈັດຂຶ້ນ ເຊິ່ງຕອບສະໜອງຕາມຂໍ້ກຳນົດຕ່າງໆ, ຍົກເວັ້ນກໍລະນີຕໍ່ໄປນີ້:

- ພະແນກສຶກສາລັດໄອໂອວາຕ້ອງຫ້າງຫາກະກຽມສຳລັບການໄຕ່ສວນ due process ແບບເລັ່ງລັດ, ເຊິ່ງ ຕ້ອງໄດ້ຈັດຂຶ້ນພາຍໃນ 20 ວັນເຂົ້າຮຽນນັບແຕ່ມື້ມີການຮ້ອງຂໍໃຫ້ເປີດການໄຕ່ສວນ ແລະ ຕ້ອງກຳໃຫ້ເກີດການຕັດສິນກຳນົດ ພາຍໃນ 10 ວັນເຂົ້າຮຽນ ຫຼັງຈາກການພິຈາລະນາໄຕ່ສວນ.
- ເວັ້ນເສຍແຕ່ວ່າພໍ່ແມ່ເດັກ ແລະ ເຂດການສຶກສາໄດ້ຕົກລົງເປັນລາຍລັກອັກສອນທີ່ຈະສະຫຼະສິດບໍ່ຈັດກອງປະຊຸມແກ້ໄຂ, ຫຼື ຕົກລົງຈະນຳໃຊ້ຂະບວນການໄກ່ເກ່ຍ, ກອງປະຊຸມແກ້ໄຂຂໍ້ຂັດແຍ້ງຕ້ອງໄດ້ເກີດຂຶ້ນພາຍໃນເຈັດວັນຕາມວັນປະຕິທິນນັບແຕ່ມື້ໄດ້ຮັບໜັງສືແຈ້ງກ່ຽວກັບການຮ້ອງຮຽນ due process ດັ່ງກ່າວ.
- ການໄຕ່ສວນອາດຈະດຳເນີນຕໍ່ໄປ ຖ້າເລື່ອງບັນຫາບໍ່ໄດ້ຖືກແກ້ໄຂເປັນທີ່ເພິ່ງພໍໃຈຂອງທັງສອງຝ່າຍ ພາຍໃນ 15 ວັນ

ຕາມວັນປະຕິທິນນັບຈາກມື້ໄດ້ຮັບຄຳຮ້ອງຮຽນ due process.

ທ່ານ ຫຼືເຂດການສຶກສາສາມາດອຸທອນຄຳຕັດສິນດັ່ງກ່າວໄດ້ໃນການໄຕ່ສວນຕາມຫຼັກ due process ແບບເລັ່ງລັດ ໃນແບບດຽວກັນສຳລັບຄຳຕັດສິນໃນການໄຕ່ສວນຕາມຫຼັກ due process ແບບອື່ນ.

ການບັນຈຸເຂົ້າຮຽນໃນລະຫວ່າງການອຸທອນ

ທົ່ວໄປ

ເມື່ອພໍ່ແມ່ເດັກ ຫຼື ເຂດການສຶກສາໄດ້ຍື່ນຄຳຮ້ອງຮຽນຕາມຫຼັກ due process ທີ່ກ່ຽວຂ້ອງກັບເລື່ອງການປະຕິບັດວິໄນ, ລູກຂອງທ່ານຕ້ອງ (ເວັ້ນເສຍແຕ່ພໍ່ແມ່ເດັກ ແລະ ພະແນກສຶກສາລັດໄອໂອວາ ຫຼື ເຂດການສຶກສາຕົກລົງເຫັນດີເປັນຢ່າງອື່ນ) ຍັງຮຽນຢູ່ໃນສະຖານທີ່ຮຽນແທນຊົ່ວຄາວ:

- ໃນລະຫວ່າງການລໍຖ້າຄຳຕັດສິນຂອງຜູ້ພິພາກສາ ALJ, ຫຼື
- ຈົນກວ່າສິ້ນສຸດໄລຍະເວລາຂອງການໂຍກຍ້າຍທີ່ໄດ້ສະໜອງໃຫ້ ແລະ ອະທິບາຍໄວ້ໃນຫົວຂໍ້ ສິດອຳນາດຂອງພະນັກງານໂຮງຮຽນ, ໂດຍເອົາເວລາທີ່ເກີດຂຶ້ນກ່ອນ.

ນີ້ແມ່ນຂໍ້ຍົກເວັ້ນຕໍ່ກັບກົດລະບຽບທົ່ວໄປທີ່ວ່າເດັກຕ້ອງຍັງຢູ່ໃນການບັນຈຸເຂົ້າຮຽນປະຈຸບັນໃນຂະນະທີ່ການຮ້ອງຮຽນຕາມຫຼັກ due process ຫຼືການໄກ່ເກ່ຍ ຍັງຄ້າງຢູ່.

ການປ່ຽນແປງການບັນຈຸເຂົ້າຮຽນເນື່ອງຈາກການຍົກຍ້າຍທີ່ກ່ຽວຂ້ອງກັບການປະຕິບັດວິໄນ

ທົ່ວໄປ

ການຍົກຍ້າຍເດັກພິການອອກຈາກບ່ອນຮຽນປະຈຸບັນຂອງເດັກແມ່ນການປ່ຽນແປງການບັນຈຸເຂົ້າຮຽນ ຖ້າວ່າ:

1. ການຍົກຍ້າຍແມ່ນເປັນເວລາຫຼາຍກວ່າ 10 ວັນເຂົ້າຮຽນຕິດຕໍ່ກັນ; ຫຼື
2. ລູກຂອງທ່ານໄດ້ຖືກຍົກຍ້າຍຫຼາຍຄັ້ງຕິດຕໍ່ກັນທີ່ປະກອບເປັນຮູບແບບໜຶ່ງເພາະວ່າ:
   a. ການຍົກຍ້າຍຫຼາຍໆຄັ້ງລວມກັນທັງໝົດເປັນເວລາຫຼາຍກວ່າ 10 ວັນເຂົ້າຮຽນໃນປີຮຽນໃດໜຶ່ງ;
   b. ການປະພຶດຂອງລູກທ່ານແມ່ນຄ້າຍຄືກັນເປັນສ່ວນໃຫຍ່ກັບການປະພຶດຂອງເດັກໃນຫຼາຍເຫດການຄັ້ງກ່ອນ ທີ່ເຮັດໃຫ້ເກີດການຍົກຍ້າຍຫຼາຍໆຄັ້ງ; ແລະ
   c. ບັນດາປັດໃຈເພີ່ມເຕີມ, ເຊັ່ນວ່າ:
      - ຄວາມຄົນຂອງການຍົກຍ້າຍແຕ່ລະຄັ້ງ.
      - ຈຳນວນເວລາທັງໝົດທີ່ລູກຂອງທ່ານໄດ້ຖືກຍົກຍ້າຍ,
      - ແລະ ໄລຍະຫ່າງລະຫວ່າງການຍົກຍ້າຍຄັ້ງໜຶ່ງຫາອີກຄັ້ງໜຶ່ງ.

ການທີ່ຮູບແບບຂອງການຍົກຍ້າຍຈະປະກອບເປັນການປ່ຽນແປງການບັນຈຸເຂົ້າຮຽນຫຼືບໍ່ນັ້ນຈະຖືກກຳນົດເປັນແຕ່ລະກໍລະນີໄປໂດຍເຂດການສຶກສາ ແລະ, ຖ້າມີການທ້າທາຍ, ມັນຈະຕ້ອງໄດ້ເຮັດການທົບທວນຜ່ານຂະບວນການ due process ແລະການດຳເນີນຄະດີທາງສານ.

ການທີ່ການພັກການຮຽນຊົ່ວຄາວຢູ່ໃນໂຮງຮຽນຈະນັບເປັນມື້ຂອງການຍົກຍ້າຍຫຼືບໍ່ນັ້ນແມ່ນຂຶ້ນກັບວ່າເຂດການສຶກສາສາມາດຕອບໄດ້ທັງໝົດສາມຄຳຖາມເຫຼົ່ານີ້ວ່າ "ແມ່ນ."

1. ລູກຂອງທ່ານຈະສາມາດເຂົ້າຮ່ວມໄດ້ຢ່າງເໝາະສົມໃນຫຼັກສູດການສຶກສາທົ່ວໄປແມ່ນບໍ່?
2. ລູກຂອງທ່ານຈະສາມາດໄດ້ຮັບການບໍລິການຕ່າງໆທີ່ລະບຸໄວ້ໃນໂປຣແກຣມ IEP ຂອງລູກທ່ານແມ່ນບໍ່?
3. ລູກຂອງທ່ານຈະສາມາດເຂົ້າຮ່ວມກັບເດັກນ້ອຍທີ່ບໍ່ພິການໃນຂອບເຂດທີ່ກຳນົດໄວ້ໃນການບັນຈຸເຂົ້າຮຽນປະຈຸບັນຂອງເດັກແມ່ນບໍ່?

ການກຳນົດການບັນຈຸເຂົ້າຮຽນ

ສິດອຳນາດ

ທີມງານໂປຣແກຣມການສຶກສາສະເພາະບຸກຄົນ (IEP) ເປັນຜູ້ຕັດສິນກຳນົດບ່ອນຮຽນແທນຊົ່ວຄາວສຳລັບການຍົກຍ້າຍທີ່ແມ່ນການປ່ຽນແປງການບັນຈຸເຂົ້າຮຽນ, ແລະ ການຍົກຍ້າຍພາຍໃຕ້ຫົວຂໍ້ "ສິດອຳນາດເພີ່ມເຕີມ" ແລະ "ສະພາບການພິເສດ."

ການປົກປ້ອງສຳລັບເດັກທີ່ຍັງບໍ່ທັນມີສິດໄດ້ຮັບການສຶກສາພິເສດ

ຂໍ້ມູນທົ່ວໄປ

ຖ້າລູກຂອງທ່ານບໍ່ມີ IEP ແລະ ລະເມີດກົດລະບຽບການປະພຶດຂອງນັກຮຽນ, ທ່ານອາດຈະນຳໃຊ້ການປົກປ້ອງຕ່າງໆໃນແຈ້ງການນີ້ ຖ້າທັງສອງຢ່າງຕໍ່ໄປນີ້ແມ່ນຖືກຕ້ອງ:

1. ເຂດການສຶກສາຮູ້ວ່າລູກຂອງທ່ານມີຄວາມພິການ, ແລະ
2. ເຂດການສຶກສາມີຮັບຮູ້ສິ່ງນັ້ນກ່ອນທີ່ລູກຂອງທ່ານຈະລະເມີດກົດລະບຽບການປະພຶດຂອງນັກຮຽນ.

ຄຳນິຍາມຂອງການຮັບຮູ້ກ່ອນ

ເດັກຜູ້ທີ່ບໍ່ມີສິດໄດ້ຮັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ:

ເຂດການສຶກສາຕ້ອງຖືກຖືວ່າໄດ້ຮັບຮູ້ແລ້ວວ່າເດັກແມ່ນເດັກພິການ ຖ້າກ່ອນການປະພຶດທີ່ເຮັດໃຫ້ເກີດການປະຕິບັດທາງວິໄນ:

- ພໍ່ແມ່ເດັກໄດ້ສະແດງຄວາມກັງວົນເປັນລາຍລັກອັກສອນວ່າເດັກດັ່ງກ່າວແມ່ນມີຄວາມຕ້ອງການການສຶກສາພິເສດ ແລະ ການບໍລິການກ່ຽວຂ້ອງ ສົ່ງເຖິງເຈົ້າໜ້າທີ່ບໍລິຫານ ຫຼືຄຸ້ມຄອງດູແລຂອງອົງການສຶກສາທີ່ຮັບຜິດຊອບ, ຫຼື ຄູອາຈານຂອງເດັກດັ່ງກ່າວ;
- ແມ່ເດັກໄດ້ຮຽກຮ້ອງໃຫ້ມີການປະເມີນຜົນກ່ຽວກັບເລື່ອງການມີສິດໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ພາຍໃຕ້ກົດໝາຍ IDEA; ຫຼື
- ຄູອາຈານຂອງເດັກ ຫຼື ເຈົ້າໜ້າທີ່ຂອງເຂດການສຶກສາໄດ້ສະແດງຄວາມກັງວົນສະເພາະເຈາະຈົງກ່ຽວກັບຮູບແບບ ການປະພຶດທີ່ເດັກສະແດງອອກ ໂດຍກົງຕໍ່ກັບຫົວໜ້າການສຶກສາພິເສດຂອງເຂດການສຶກສາ ຫຼື ຕໍ່ກັບເຈົ້າໜ້າທີ່ຄວບຄຸມດູແລຜູ້ອື່ນໆຂອງເຂດການສຶກສາ.

ຂໍ້ຍົກເວັ້ນຕໍ່ກັບການຮັບຮູ້ກ່ອນ

ເຂດການສຶກສາຈະບໍ່ຖືວ່າໄດ້ຮັບຮູ້ ຖ້າວ່າ:

- ພໍ່ແມ່ເດັກບໍ່ໄດ້ອະນຸຍາດໃຫ້ມີການປະເມີນຜົນຂອງເດັກ ຫຼືຖືກປະຕິເສດການບໍລິການດ້ານການສຶກສາພິເສດ; ຫຼື
- ເດັກໄດ້ຮັບການປະເມີນຜົນ ແລະ ຖືກກຳນົດວ່າບໍ່ມີສິດໄດ້ຮັບການສຶກສາພິເສດພາຍໃຕ້ກົດໝາຍ IDEA.

ການບໍ່ຮູ້ມາກ່ອນ

ຖ້າກ່ອນທີ່ຈະດຳເນີນມາດຕະການດ້ານວິໄນຕໍ່ກັບເດັກ, ເຂດການສຶກສາບໍ່ຮູ້ວ່າເດັກນັ້ນແມ່ນເດັກພິການ, ດັ່ງທີ່ໄດ້ອະທິບາຍຂ້າງເທິງ, ເດັກອາດຈະຕ້ອງຖືກປະຕິບັດມາດຕະການດ້ານວິໄນທີ່ຖືກນຳໃຊ້ກັບເດັກອື່ນໆທີ່ບໍ່ພິການຜູ້ທີ່ມີການປະພຶດລະເມີດກົດລະບຽບໃນລະດັບດຽວກັນ.

ແນວໃດກໍ່ຕາມ, ຖ້າມີການຮ້ອງຂໍໃຫ້ປະເມີນຜົນເດັກ ໃນລະຫວ່າງເວລາທີ່ເດັກຕ້ອງຖືກປະຕິບັດມາດຕະການດ້ານວິໄນ, ການປະເມີນຕ້ອງໄດ້ດຳເນີນໃນແບບເລັ່ງລັດ.

ຈົນກ່ວາຈະສຳເລັດການປະເມີນຜົນ, ເດັກຈະຍັງຢູ່ໃນການບັນຈຸເຂົ້າຮຽນທີ່ໄດ້ກຳນົດໃຫ້ໂດຍໂຮງຮຽນ, ເຊິ່ງສາມາດລວມມີການໃຫ້ພັກຮຽນຊົ່ວຄາວ ຫຼື ການໄລ່ອອກໂຮງຮຽນ ໂດຍປາສະຈາກການບໍລິການດ້ານສຶກສາ.

ຖ້າເດັກຖືກກຳນົດວ່າເປັນເດັກພິການ, ໂດຍພິຈາລະນາເຖິງຂໍ້ມູນຈາກການປະເມີນຜົນທີ່ດຳເນີນເຂດການສຶກສາ, ແລະ ຂໍ້ມູນທີ່ສະໜອງໃຫ້ໂດຍພໍ່ແມ່ເດັກ, ເຂດການສຶກສາຕ້ອງສະໜອງການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ ໂດຍສອດຄ່ອງກັບກົດໝາຍ IDEA.

ການນຳສົ່ງຫາ ແລະ ການດຳເນີນການໂດຍໜ່ວຍງານບັງຄັບໃຊ້ກົດໝາຍ ແລະຕຸລາການ

ການນຳສົ່ງເດັກຫາ ໜ່ວຍງານບັງຄັບໃຊ້ກົດໝາຍ

IDEA ບໍ່:

- ຫ້າມອົງການຈາກການແຈ້ງອາດຊະຍະກຳທີ່ກະທຳຜິດໂດຍເດັກພິການ ຕໍ່ກັບໜ່ວຍງານທີ່ກ່ຽວຂ້ອງ; ຫຼື
- ສະກັດກັ້ນໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ໜ່ວຍງານຕຸລາການຂອງລັດຈາກການປະຕິບັດໜ້າທີ່ຂອງເຂົາເຈົ້າກ່ຽວກັບເລື່ອງນຳໃຊ້ກົດໝາຍຂອງລັດຖະບານກາງ ແລະກົດໝາຍຂອງລັດຕໍ່ກັບອາດຊະຍາກຳທີ່ກະທຳໂດຍເດັກພິການ.

ຄວາມຮັບຜິດຊອບ ຂອງເຂດການສຶກ ສາ

ຖ້າເຂດການສຶກສາແຈ້ງອາດຊະຍາກຳທີ່ກະທຳຜິດໂດຍເດັກພິການ, ເຂດການສຶກສາ:

- ຕ້ອງຮັບປະກັນว่าสำเนาบันทึกการศึกษาพิเศษ ແລະ ບັນທຶກການປະຕິບັດວິໄນຂອງເດັກຕ້ອງໄດ້ສົ່ງໃຫ້ໜ່ວຍງານທີ່ ອົງການແຈ້ງອາດຊະຍາກຳໃຫ້ ເພື່ອໃຫ້ໜ່ວຍງານພິຈາລະນາ; ແລະ
- ອາດຈະສົ່ງສຳເນົາ ບັນທຶກການສຶກສາພິເສດ ແລະ ບັນທຶກການປະຕິບັດວິໄນຂອງເດັກ ໃຫ້ພຽງແຕ່ໃນຂອບເຂດທີ່ກົດໝາຍว่าด้วยสิทธิด้านการศึกษาและความเป็นส่วนตัวของครอบครัว (FERPA) ອະນຸຍາດເທົ່ານັ້ນ.

ບົດບັນຍັດສຳລັບພໍ່ແມ່ຕົວແທນ

ການແຕ່ງຕັ້ງພໍ່ແມ່ ຕົວແທນ

ແຕ່ລະເຂດການສຶກສາ, ອົງການ AEA, ແລະ ລັດຕ້ອງຮັບປະກັນว่าสิทธิของเด็กต้องรับการปกป้อง ເມື່ອ:

- ບໍ່ສາມາດກຳນົດພໍ່ແມ່ຂອງເດັກໄດ້;
- ເຂດການສຶກສາ ຫຼື AEA, ຫຼັງຈາກໄດ້ພະຍາຍາມຢ່າງສົມເຫດສົມຜົນແລ້ວ, ບໍ່ສາມາດຊອກຫາພໍ່ແມ່ຂອງເດັກໄດ້;
- ເດັກແມ່ນເດັກອຸປະຖຳຂອງລັດ ພາຍໃຕ້ກົດໝາຍລັດໄອໂອວາ;
- ໃນກໍລະນີຂອງເດັກທີ່ຢູ່ໃນຄວາມອຸປະຖຳຂອງລັດ, ຜູ້ພິພາກສາທີ່ເປັນປະທານໃນການຕັດສິນຄະດີຂອງເດັກອາດຈະ ເລືອກແຕ່ງຕັ້ງພໍ່ແມ່ຕົວແທນໃຫ້ກັບເດັກ (ມາດຖານການແຕ່ງຕັ້ງແມ່ນອະທິບາຍຢູ່ຂ້າງລຸ່ມ); ຫຼື
- ເດັກດັ່ງກ່າວແມ່ນໄວໜຸ່ມຂາດທີ່ຢູ່ອາໃສທີ່ບໍ່ມີໃຜມານຳ.

ຄວາມຮັບຜິດຊອບ ຂອງອົງການ AEA

ໜ້າທີ່ຮັບຜິດຊອບຂອງອົງການ AEA ປະກອບມີການແຕ່ງຕັ້ງບຸກຄົນເພື່ອເຮັດໜ້າທີ່ເປັນຕົວແທນໃຫ້ແກ່ພໍ່ແມ່. ນີ້ຕ້ອງລວມເອົາວິທີການສຳລັບ:

- ຕັດສິນກຳນົດວ່າເດັກຕ້ອງການມີພໍ່ແມ່ຕົວແທນຫຼືບໍ່;
- ການແຕ່ງຕັ້ງພໍ່ແມ່ຕົວແທນໃຫ້ແກ່ເດັກ.

ເກນມາດຖານຂອງ ພໍ່ແມ່ຕົວແທນ

ອົງການ AEA ອາດຈະເລືອກພໍ່ແມ່ຕົວແທນໃນແບບໃດໆກໍ່ຕາມອະນຸຍາດໃຫ້ພາຍໃຕ້ກົດໝາຍຂອງລັດ. ອົງການ AEA ຕ້ອງຮັບປະກັນວ່າ ບຸກຄົນທີ່ຖືກເລືອກເປັນພໍ່ແມ່ຕົວແທນ:

